ກໍ່ສ້າງພັກ

ວາລະສານເຜີຍແຜ່, ແນະນຳວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ
ຂອງຄະນະຈັດຕັ້ງສູນກາງພັກ

ພັນລະຫຍາຍມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໃຫ້ປະກົດຜົນເປັນຈິງ

ພິທີອວຍພອນວັນເກີດປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ

(ວັນທີ 8 ກຸມພາ 1924-8 ກຸມພາ 2024)

ສະບັບ: 263 ປະຈຳປີ 2024/1

Korsangphakmagazine@gmail.com

ວັນທີ 12 ມັງກອນ 2024 ອົງຄະນະພັກຄະນະຈັດຕັ້ງສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ການປະຕິບັດວຽກງານພາຍໃນ ປະຈຳປີ 2023 ໂດຍການເປັນປະທານຂອງສະຫາຍ ນ. ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຮອງເລຂາ, ກຳມະການປະຈຳພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີບັນດາເລຂາໜ່ວຍພັກກົມ, ຫ້ອງການ, ສູນ ແລະ ສະມາຊິກພັກພາຍໃນເຂົ້າຮ່ວມ.

ວັນທີ 12 ມັງກອນ 2024 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີສະຫຼຸບຕີລາຄາວຽກງານແຂ່ງຂັນ-ຍ້ອງຍໍ "ຮັກຊາດ ແລະ ພັດທະນາ" ປະຈຳປີ 2023 ໂດຍການເປັນປະທານຂອງສະຫາຍ ນ. ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ ເລຂາທິການສູນກາງພັກ ເລຂາຄະນະພັກ ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຮອງເລຂາ, ຄະນະພັກ ແລະ ພະນັກງານພາຍໃນເຂົ້າຮ່ວມຢ່າງພ້ອມພຽງ.

ວັນທີ 11-17 ກຸມພາ 2024 ສະຫາຍ ນາງ ສີໃສ ລືເດດ ມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະ ລົງເຄື່ອນໄຫວຢ້ຽມຢາມ, ຊຸກຍູ້ ວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ, ວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ການກະກຽມດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ຢູ່ 2 ແຂວງພາກເໜືອຄື: ແຂວງຜົ້ງສາລີ ແລະ ແຂວງອຸດົມໄຊ.



ວັນທີ 17 ມັງກອນ 2024 ຄະນະຈັດຕັ້ງສູນກາງພັກ ໄດ້ເຂົ້າອວຍພອນກອງທັບປະຊາຊົນລາວ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນລາວ (ວັນທີ 20 ມັງກອນ ຄົບຮອບ 75 ປີ) ນຳພາໂດຍ ທ່ານ ປອ ວິສຸກ ພົມພິທັກ ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະ ເປັນກຽດຕ້ອນຮັບການເຂົ້າອວຍພອນໂດຍ ທ່ານ ພົທ ທອງລອຍ ສິລິວົງ ຮອງລັດຖະມົນຕີ ຫົວໜ້າກົມໃຫຍ່ການເມືອງກອງທັບ ກະຊວງປ້ອງກັນປະເທດ ພ້ອມດ້ວຍຄະນະນາຍ ແລະ ພົນທະຫານກະຊວງປ້ອງກັນປະເທດ.

ວັນທີ 14 ກຸມພາ 2024 ອົງຄະນະພັກກະຊວງແຜນການ ແລະ ການລົງທຶນ ໄດ້ຈັດກອງປະຊຸມເປີດກວ້າງຄົບຄະນະບໍລິຫານງານພັກກະຊວງ ຄັ້ງທີ 10 ສະໄໝທີ IV ຂຶ້ນ ໂດຍການເປັນປະທານຂອງສະຫາຍ ຄຳເຈນ ວົງໂພສີ ກຳມະການສູນກາງພັກ ເລຂາຄະນະພັກກະຊວງ, ມີບັນດາສະຫາຍຄະນະປະຈຳພັກ, ຄະນະບໍລິຫານງານພັກ, ຄະນະນຳກະຊວງ ແລະ ພະນັກງານຫຼັກແຫຼ່ງພາຍໃນເຂົ້າຮ່ວມ.

ວັນທີ 8 ກຸມພາ 2024 ອົງຄະນະພັກທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມເປີດກວ້າງຄົບຄະນະບໍລິຫານງານພັກ ຄັ້ງທີ 11 ສະໄໝທີ IV ໂດຍການເປັນປະທານຂອງສະຫາຍ ບຸນເຫຼືອ ສິນໄຊວໍຣະວົງ ເລຂາຄະນະບໍລິຫານງານພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ມີຮອງເລຂາຄະນະພັກ ທຫລ, ຄະນະບໍລິຫານງານພັກ ທຫລ ແລະ ພະນັກງານຫຼັກແຫຼ່ງພາຍໃນເຂົ້າຮ່ວມ.

ວັນທີ 26 ມັງກອນ 2024 ໜ່ວຍພັກກົມກົງຈັກການຈັດຕັ້ງ ແລະ ກົດລະບຽບພັກຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີເລື່ອນສະມາຊິກພັກສຳຮອງຂຶ້ນເປັນສະມາຊິກພັກສົມບູນ ຈຳນວນ 4 ສະຫາຍ, ຍິງ 1 ສະຫາຍ ໂດຍການເປັນປະທານຂອງ ສະຫາຍ ຄຳປຽນ ແກ້ວສໍລະສິງ ກຳມະການພັກ ເລຂາໜ່ວຍພັກກົມກົງຈັກການຈັດຕັ້ງ ແລະ ກົດລະບຽບພັກ, ມີຮອງເລຂາໜ່ວຍພັກ, ບັນດາແຂກຖືກເຊີນ ແລະ ສະມາຊິກພັກພາຍໃນໜ່ວຍເຂົ້າຮ່ວມຢ່າງພ້ອມພຽງ.

ຊີວິດການເຄື່ອນໄຫວປະຕິວັດ ຂອງປະທານ ຄຳໄຕ ສີພັນດອນ

ໂດຍ: ບ.ກ

ໃນຂະບວນວິວັດແຫ່ງການກຳເນີດ ການເຕີບໃຫຍ່ຂະຫຍາຍຕົວຂອງການປະຕິວັດລາວ ຍາມໃດກໍ່ຕິດພັນກັບບົດບາດການນຳພາອັນໂດດເດັ່ນຂອງພັກ ແລະ ຂອງບຸກຄົນການນຳຂອງພັກໃນແຕ່ລະໄລຍະ. ດັ່ງພວກເຮົາລ້ວນແຕ່ຮັບຮູ້ນຳກັນວ່າ: ໃນຂະບວນວິວັດແຫ່ງການຕໍ່ສູ້ກູ້ຊາດ, ການປົກປັກຮັກສາ ແລະ ສ້າງສາປະເທດຊາດທີ່ເຕັມໄປດ້ວຍຄວາມທຸກຍາກ, ລຳບາກ, ຍາວນານຂອງການປະຕິວັດປະເທດເຮົານັ້ນ, ໄດ້ສ້າງໃຫ້ມີບັນດາວິລະບູລຸດຂອງຊາດ ແລະ ບັນດາຜູ້ນຳທີ່ເກັ່ງກ້າ, ສາມາດຫຼາຍທ່ານ. ໃນນັ້ນ, ນອກຈາກປະທານ ໄກສອນ ພົມວິຫານ ວິລະບຸລຸດຂອງຊາດ, ປະທານ ສຸພານຸວົງ ເຈົ້າຊາຍແດງແລ້ວກໍ່ຍັງມີປະທານ ຄຳໄຕ ສີພັນດອນ ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວ. ອັນໂດດເດັ່ນຂອງບຸກຄົນການນຳຂອງພັກຄະນະນຳຂອງພັກຫຼາຍທ່ານໄດ້ອຸທິດເສຍສະຫຼະທັງຊີວິດ, ເຫື່ອແຮງ, ສະຕິປັນຍາ ແລະ ຄວາມຮູ້-ຄວາມສາມາດຂອງຕົນປະກອບສ່ວນເຂົ້າໃນພາລະກິດລວມດັ່ງກ່າວ, ໜຶ່ງໃນນັ້ນກໍ່ມີປະທານ ຄຳໄຕ ສີພັນດອນ ອະດີດປະທານຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ.

ປະທານ ຄຳໄຕ ສີພັນດອນ ກຳເນີດໃນຄອບຄົວຊາວນາທີ່ທຸກຍາກ ໂດຍໄດ້ຮັບການອົບຮົມ, ບົ່ມສອນ ແລະ ຮຽນຮູ້ຫຼາຍສິ່ງຫຼາຍຢ່າງທີ່ເປັນປະໂຫຍດ ຈາກພໍ່ເຖົ້າມະຫາແກ້ວ, ເປັນຕົ້ນໄດ້ປູກຝັງແນວຄິດຮັກຊາດ ກໍ່ຄືມູນເຊື້ອຕໍ່ສູ້ເດັດດ່ຽວ, ບໍ່ຍອມຈຳນົນຂອງປະຊາຊົນລາວບັນດາເຜົ່າ ຕ້ານພວກສັກດີນາລ່າເມືອງຂຶ້ນຜູ້ຮຸກຮານ ໂດຍສະເພາະຢ່າງຍິ່ງເມື່ອເຕີບໃຫຍ່ ປະທານ ຄຳໄຕ ສີພັນດອນ ໄດ້ສຳຜັດເຫັນແຈ້ງເຖິງສະຖານະອັນຕໍ່າຕ້ອຍຂອງຄົນລາວໃນເວລານັ້ນ, ເຫັນແຈ້ງເຖິງການສູນເສຍອຳນາດອະທິປະໄຕຂອງຊາດ, ປະຊາຊົນລາວບັນດາເຜົ່າ ຕົກເປັນຂ້ອຍຂ້າຂອງພວກຈັກກະພັດລ່າເມືອງຂຶ້ນ, ສົມທົບກັບຜົນສະທ້ອນຈາກຂະບວນການຕໍ່ຕ້ານຂອງປະຊາຊົນລາວ ກໍ່ຄືປະຊາຊົນຫວຽດນາມ, ກຳປູເຈຍ. ໃນການຕ້ານກັບພວກລ່າເມືອງຂຶ້ນຜູ້ຮຸກຮານ ໄດ້ເຮັດໃຫ້ປະທານ ຄຳໄຕ ສີພັນດອນ ມີສະຕິຕື່ນຕົວຮັກຊາດ, ຄຽດແຄ້ນສັດຕູ ແລະ ຕັດສິນໃຈເຂົ້າຮ່ວມໃນຂະບວນການຂອງກຳລັງຕໍ່ຕ້ານລາວອິດສະຫຼະ ນັ້ນເປັນບາດລ້ຽວທີ່ສຳຄັນໃນຊີວິດ, ເປັນຈຸດເລີ່ມຕົ້ນແຫ່ງການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ.

ປີ 1946 ພວກລ່າເມືອງຂຶ້ນຝຣັ່ງ ໄດ້ກັບຄືນມາຮຸກຮານລາວເປັນຄັ້ງທີ 2 ດ້ວຍການຍູ້ໜູນຂອງອັງກິດ, ພວກລ່າເມືອງຂຶ້ນຝຣັ່ງໄດ້ຍຶດເອົາຕົວເມືອງຕ່າງໆທົ່ວທຸກພາກຂອງອິນດູຈີນ ແລະ ປະເທດລາວ, ກອງທະຫານຝຣັ່ງໄປຮອດໃສກໍ່ໄດ້ປາບຂະບວນການຮັກຊາດ ແລະ ປະຊາຊົນລາວຢ່າງໂຫດຮ້າຍປ່າເຖື່ອນ,

ຈາກນັ້ນ ຈຶ່ງເກີດມີການເຄື່ອນໄຫວຂອງຄະນະພັກແຄວ້ນລາວ ເພື່ອຕໍ່ສູ້ຂັບໄລ່ຝຣັ່ງເທື່ອທີສອງ ເຊິ່ງໄດ້ລະເບີດຂຶ້ນຢ່າງແຂງແຮງ, ກວ້າງຂວາງຢູ່ທົ່ວປະເທດເຮົາ. ເດືອນມີນາ ປີ 1947 ປະທານ ຄຳໄຕ ສີພັນດອນ ໄດ້ອອກຈາກເມືອງປາກເຊ ແບບປິດລັບ ເພື່ອເຂົ້າຮ່ວມໃນກຳລັງລັດຖະບານລາວ ຕໍ່ຕ້ານຢູ່ບາງກອກປະເທດໄທ. ໂດຍແມ່ນສະເດັດເຈົ້າ ສຸພານຸວົງ ເປັນລັດຖະມົນຕີກະຊວງການຕ່າງປະເທດ ແລະ ທັງເປັນຜູ້ບັນຊາການທະຫານສູງສຸດ ກຳລັງລາວອິດສະຫຼະ. ໃນເວລາຕໍ່ມາ, ສະເດັດເຈົ້າ ສຸພານຸວົງ ໄດ້ມອບໝາຍໃຫ້ປະທານ ຄຳໄຕ ສີພັນດອນ ເປັນຜູ້ຊ່ວຍເພິ່ນໃນການປັບປຸງກອງທະຫານລາວອິດສະຫຼະຢູ່ເຂດໃຕ້ນັ້ນ ເປັນບາດລ້ຽວໃນຊີວິດ ທັງເປັນຈຸດເລີ່ມຕົ້ນບົນເສັ້ນທາງປະຕິວັດຂອງປະທານ ຄຳໄຕ ສີພັນດອນ. ນັບແຕ່ປີ 1946 ເຖິງທ້າຍປີ 1949 ຂະບວນການຕໍ່ສູ້ຂອງປະຊາຊົນລາວຕ້ານລ່າເມືອງຂຶ້ນຝຣັ່ງໄດ້ຂະຫຍາຍຕົວຢ່າງແຂງແຮງ ແລະ ເລີ່ມມີພື້ນຖານອັນແໜ້ນໜາ, ໃນໄລຍະດຽວກັນນີ້ ກອງທັບລາວອິດສະຫຼະໄດ້ກາຍເປັນກອງທັບປະກອບອາວຸດ ແລະ ມີລະດັບວິທະຍາສາດດີ, ບັງຄັບບັນຊາດີພໍສົມຄວນ ໄດ້ຮັບການເຝິກຝົນຫຼໍ່ຫຼອມຕາມແນວທາງທັດສະນະຊົນຊັ້ນຂອງພັກ, ທັງສູ້ຮົບທັງກໍ່ສ້າງກຳລັງ, ຍຶດເອົາອາວຸດຂອງສັດຕູມາປະກອບໃຫ້ຕົນແລ້ວຕີສັດຕູຂະຫຍາຍສົງຄາມກອງຫຼອນ, ກ້າວຂຶ້ນຕີສັດຕູຢູ່ໃນເຂດຄອບຄອງຂອງພວກເຂົາ; ຕໍ່ມາ, ບໍ່ພໍເທົ່າໃດປະທານ ຄຳໄຕ ສີພັນດອນ ກໍ່ໄດ້ຮັບໜ້າທີ່ສຳຄັນໃນການນຳພາສູ້ຮົບດ້ວຍຄວາມເຊື່ອໝັ້ນຢ່າງໜັກແໜ້ນຕໍ່ປະຊາຊົນ, ເຊື່ອໝັ້ນໃນກຳລັງແຮງອັນມະຫາສານຂອງປະຊາຊົນ, ຮູ້ອີງໃສ່ປະຊາຊົນ ແລະ ປຸກລະດົມປະຊາຊົນເຂົ້າຮ່ວມການຕໍ່ຕ້ານ, ປະທານ ຄຳໄຕ ສີພັນດອນ ໄດ້ນຳພາກໍ່ສ້າງຮາກຖານການເມືອງ, ກໍ່ສ້າງເຂດທີ່ໝັ້ນຕໍ່ຕ້ານຢູ່ເຂດໃຕ້ ເພື່ອປັບປຸງຟື້ນຟູຂະບວນການຕໍ່ສູ້ຢູ່ພາກກາງ ເຮັດໃຫ້ເຂດຕໍ່ສູ້ຢູ່ເຂດກາງຫຼຸດພົ້ນອອກຈາກສະພາວະຫຍຸ້ງຍາກ ແລະ ສືບຕໍ່ຂະຫຍາຍຕົວ. ຜົນສຳເລັດໃນການກໍ່ສ້າງເຂດທີ່ໝັ້ນຕໍ່ຕ້ານຢູ່ເຂດໃຕ້ ແລະ ເຂດກາງເປັນຜົນສຳເລັດທີ່ມີຄວາມສຳຄັນຕໍ່ການປະຕິວັດລາວ ແລະ ການປະຕິວັດຂອງ 3 ປະເທດອິນດູຈີນໃນເວລານັ້ນ. ກຳລັງຕໍ່ຕ້ານທີ່ປະທານ ຄຳໄຕ ສີພັນດອນ ໄດ້ອົບຮົມເຝິກຝົນຫຼໍ່ຫຼອມກໍ່ສ້າງໂດຍຜ່ານການທົດສອບໃນການຕໍ່ສູ້ກູ້ຊາດຕ້ານຈັກກະພັດລ່າເມືອງຂຶ້ນຢູ່ເຂດໃຕ້ ແລະ ເຂດກາງລາວໄດ້ເປັນກຳລັງສຳຄັນໃນການຕໍ່ສູ້ປົກປັກຮັກສາສອງແຂວງເຕົ້າໂຮມ ແລະ ຕໍ່ມາພາຍຫຼັງ, ປະເທດຊາດເຮົາໄດ້ຮັບການປົດປ່ອຍຢ່າງສົມບູນ ເມື່ອ 02 ທັນວາ ປີ 1975 ບັນດາສະຫາຍພະນັກງານນັກຮົບຈຳນວນສ່ວນຫຼາຍໄດ້ກາຍເປັນພະນັກງານຫຼັກແຫຼ່ງຂອງທ້ອງຖິ່ນ ແລະ ເປັນການນຳຂອງສູນກາງພັກປະຊາຊົນປະຕິວັດລາວ. ດ້ວຍຄວາມເກັ່ງກ້າສາມາດສະຫຼາດສ່ອງໃສໃນການຈັດຕັ້ງນຳພາຂະບວນການປະຕິວັດ, ເວລາໃດປະທານກໍ່ໄດ້ຮັບຄວາມນັບຖື, ຮັກແພງ ແລະ ເຊື່ອໝັ້ນໄວ້ວາງໃຈຈາກໝູ່ຄະນະ ກໍ່ຄືພະນັກງານ-ນັກຮົບ ແລະ ປະຊາຊົນລາວບັນດາເຜົ່າ. ເຊິ່ງເພິ່ນໄດ້ຮັບມອບໝາຍໜ້າທີ່ສຳຄັນເປັນລຳດັບມາ ຈາກເປັນຜູ້ແທນລັດຖະບານລາວອິດສະຫຼະປະຈຳເຂດໃຕ້ລາວ, ກໍ່ໄດ້ຮັບມອບໝາຍໃຫ້ເປັນປະທານຄະນະກຳມະການຕໍ່ຕ້ານເຂດກາງ, ຕໍ່ມາເປັນກຳມະການສູນກາງແນວລາວອິດສະຫຼະ ແລະ ແນວລາວຮັກຊາດ, ເປັນກຳມະການສູນກາງພັກ, ເປັນຜູ້ບັນຊາສູງສຸດກອງທັບປົດປ່ອຍປະຊາຊົນລາວ ແລະ ກອງທັບປະຊາຊົນລາວໃນເວລາຕໍ່ມາ, ເປັນກຳມະການກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ເປັນຮອງນາຍົກລັດຖະມົນຕີ, ເປັນລັດຖະມົນຕີກະຊວງປ້ອງກັນປະເທດ, ເປັນນາຍົກລັດຖະມົນຕີ, ເປັນປະທານຄະນະບໍລິຫານງານສູນກາງພັກ, ເປັນປະທານປະເທດ ແຫ່ງ ສປປ ລາວ; ມາຮອດປີ 2006 ຈຶ່ງໄດ້ພັກຜ່ອນຮັບເບ້ຍບຳນານ.

ເພື່ອລະນຶກວັນເກີດຂອງປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ (08/02/1924-08/02/2024) ກົມໂຄສະນາກໍ່ສ້າງພັກ-ພະນັກງານ ໄດ້ມີບົດນຳ "ກ່ຽວກັບຊີວິດ ແລະ ການເຄື່ອນໄຫວຂອງປະທານ ຄຳໄຕ ສີພັນດອນ" ອອກສູ່ສັງຄົມ ເພື່ອເປັນການສັນລະເສີນ ແລະ ສະແດງຄວາມຮູ້ບຸນຄຸນຕໍ່ຜົນງານການອຸທິດຂອງເພິ່ນ ໃນການຈັດຕັ້ງນຳພາຂະບວນ

ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການກໍ່ສ້າງກຳລັງປະຕິວັດໃນທົ່ວປະເທດ ໃຫ້ເຕີບໃຫຍ່ເຂັ້ມແຂງ ກໍຄືໃນໄຊຊະນະລວມຂອງການຕໍ່ສູ້ປົດປ່ອຍຊາດ.

ເພື່ອໂຄສະນາໃຫ້ເຫັນແຈ້ງຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນຢ່າງສັງລວມ; ເຫັນໄດ້ມູນເຊື້ອການຕໍ່ສູ້ອັນພິລະອາດຫານຂອງປະຊາຊົນລາວບັນດາເຜົ່າ ພ້ອມທັງເປັນການສັນລະເສີນຜົນງານ ແລະ ຈົດຈຳຄຸນງາມຄວາມດີຂອງປະທານ ຄຳໄຕ ສີພັນດອນ ໃນພາລະກິດຕໍ່ສູ້ປົດປ່ອຍຊາດ; ເປັນບ່ອນອີງ ເພື່ອໃຫ້ພະນັກງານ, ທະຫານ, ຕຳຫລວດ, ນັກຮຽນ-ນັກສຶກສາ, ປະຊາຊົນ ແລະ ຄົນຮຸ່ນຫຼັງໄດ້ອ່ານ, ໄດ້ສຶກສາຮຽນຮູ້ມູນເຊື້ອອັນສະຫງ່າອົງອາດຂອງພະນັກງານ, ນັກຮົບ ແລະ ປະຊາຊົນເຮົາ ໃນພາລະກິດຕໍ່ສູ້ກູ້ຊາດຕ້ານລັດທິລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່. ຮູ້ເສີມຂະຫຍາຍມູນເຊື້ອດັ່ງກ່າວ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງ

ສາພັດທະນາປະເທດຊາດອັນແສນຮັກຂອງພວກເຮົາໃຫ້ຮັ່ງມີເຂັ້ມແຂງໃນຕໍ່ໜ້າ.

ບົດນຳ ຊີວິດການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ ເຖິງວ່າຈະບໍ່ສາມາດສັງລວມຂະບວນການຕໍ່ຕ້ານລັດທິລ່າເມືອງຂຶ້ນທີ່ກວ້າງຂວາງ, ລະອຽດລະອ້ຽວ ແລະ ບັນດາຮູບການຕໍ່ສູ້ອັນອຸດົມສົມບູນກໍ່ຕາມຂອງປະຊາຊົນລາວບັນດາເຜົ່າໄດ້ທັງໝົດ, ແຕ່ສາມາດຊ່ວຍໃຫ້ຜູ້ອ່ານເຂົ້າໃຈແຈ້ງຕື່ມອີກ ກ່ຽວກັບເຫດການປະຫວັດສາດອັນສຳຄັນ

ອ່ານຕໍ່ໜ້າ 7

ແນວຄິດຊີ້ນຳຂອງປະທານ ຄຳໄຕ ສີພັນດອນ ກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ ໃນໄລຍະໃໝ່

ໂດຍ: ປອ ວິສຸກ ພິມພິທັກ ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

1. ຄວາມຮັບຮູ້ກ່ຽວກັບ ແນວຄິດຊີ້ນຳຂອງປະທານ ຄຳໄຕ ສີພັນດອນ ຕໍ່ກັບວຽກງານກໍ່ສ້າງພັກ-ພະນັກງານ

ວຽກງານກໍ່ສ້າງພັກ, ວຽກງານພະນັກງານ ແມ່ນຂົງເຂດວຽກງານ ທີ່ສຳຄັນຂອງພັກ, ເປັນວຽກງານ ທີ່ພົວພັນໂດຍກົງເຖິງການຄົງຕົວ, ການເຕີບໃຫຍ່ເຂັ້ມແຂງຂອງພັກ ແລະ ຂອງການປະຕິວັດຢູ່ປະເທດເຮົາ. ສະນັ້ນ, ຈຶ່ງເປັນວຽກງານທີ່ຕິດພັນກັບການຊີ້ນຳໂດຍກົງຂອງຄະນະເລຂາທິການສູນກາງພັກ ໂດຍສະເພາະສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ແຕ່ລະສະໄໝ ກໍ່ຄືປະທານຄະນະບໍລິຫານງານສູນກາງພັກໃນເມື່ອກ່ອນ; ສະນັ້ນ ການສະເໜີ ແນວຄິດຊີ້ນຳ ຂອງປະທານຄຳໄຕ ສີພັນດອນ ກ່ຽວກັບວຽກງານກໍ່ສ້າງພັກ ຈຶ່ງບໍ່ຕັດແຍກອອກຈາກແນວທາງ, ທັດສະນະຂອງພັກເຮົາ ໂດຍສະເພາະ ແມ່ນມະຕິກອງປະຊຸມໃຫຍ່ຂອງພັກ, ມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ໃນບັນດາສະໄໝ ທີ່ປະທານ ຄຳໄຕ ສີພັນດອນ ໄດ້ດຳລົງຕຳແໜ່ງເປັນປະທານຄະນະບໍລິຫານງານສູນກາງພັກ ນັບແຕ່ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ V, VI, VII; ພາຍຫຼັງທີ່ສູນເສຍ ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ ໃນວັນທີ 21 ພະຈິກ 1992 ເພື່ອສືບຕໍ່ນຳພາ ພາລະກິດປະຕິວັດຂອງພັກ ແລະ ຂອງປະຊາຊົນລາວ ມາຮອດວັນທີ 25 ພະຈິກ 1992 ກອງປະຊຸມວິສາມັນຄົບຄະນະບໍລິຫານງານພັກ ສະໄໝທີ V ໄດ້ຕົກລົງເປັນເອກະສັນເລືອກຕັ້ງເອົາ ທ່ານ ຄຳໄຕ ສີພັນດອນ ເປັນປະທານພັກຂອງຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ພາຍໃຕ້ການຊີ້ນຳຂອງປະທານ ຄຳໄຕ ສີພັນດອນ ວຽກງານກໍ່ສ້າງພັກ-ພະນັກງານແມ່ນມີບາດກ້າວໃໝ່ຫຼາຍຢ່າງ ຄະນະບໍລິຫານສູນກາງພັກ ໄດ້ອອກຫຼາຍນິຕິກຳເປັນຕົ້ນ ມາຮອດວັນທີ 20 ກັນຍາ ປີ 1993 ກອງປະຊຸມຄົບຄະນະຄັ້ງທີ 7 ສະໄໝ V ຂອງຄະນະບໍລິຫານງານສູນກາງພັກ ໄດ້ພິຈາລະນາຮັບຮອງເອົາ ມະຕິກ່ຽວກັບການພັດທະນາຊັບພະຍາກອນມະນຸດ ແລະ ທ້າຍປີ 1993 ແມ່ນໄດ້ເປີດກອງປະຊຸມຕົວແທນໜ່ວຍພັກທົ່ວປະເທດ ເພື່ອກຳນົດທິດທາງ, ທິດນຳ ໃນການກໍ່ສ້າງຮາກຖານພັກໃຫ້ເຂັ້ມແຂງ-ຮູ້ນຳພາຮອບດ້ານ; ວັນທີ 17 ສິງຫາ ປີ 1996 ໄດ້ອອກຄຳສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ 11/ກມສພ ວ່າດ້ວຍເພີ່ມທະວີການນຳພາຂອງຄະນະພັກຂັ້ນຕ່າງໆໃນການປັບປຸງກໍ່ສ້າງຮາກຖານພັກໃຫ້ເຂັ້ມແຂງ-ຮູ້ນຳພາຮອບດ້ານ ຕາມ 2 ມາດຕະຖານຄື: ສ້າງໃຫ້ເຂັ້ມແຂງ 04 ດ້ານ ແລະ ສາມາດນຳພາ 5 ດ້ານ; ນີ້ສະແດງໃຫ້ເຫັນວ່າ ປະທານ ຄຳໄຕ ສີພັນດອນ ໄດ້ມີວິໄສທັດ ຍຸດທະສາດກ່ຽວກັບການພັດທະນາຢູ່ປະເທດເຮົາ ຢ່າງຈະແຈ້ງ ນັ້ນແມ່ນການພັດທະນາ ທີ່ເອົາຄົນເປັນໃຈກາງ, ເອົາຮາກຖານເປັນຈຸດໝາຍຂອງການພັດທະນາ.

ສັງລວມແລ້ວ ແນວຄິດຊີ້ນຳຂອງປະທານຄຳໄຕ ສີພັນດອນ ກ່ຽວກັບວຽກງານກໍ່ສ້າງພັກ, ພະນັກງານ ແມ່ນພາກສ່ວນໜຶ່ງໃນລະບົບທັດສະນະ, ແນວຄິດຊີ້

ນຳຂອງພັກເຮົາ ຕໍ່ວຽກງານຈັດຕັ້ງກໍ່ສ້າງພັກ-ພະນັກງານ; ເກີດຈາກການສົມທົບ ແລະ ໝູນໃຊ້ປະດິດສ້າງລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອອັນດີງາມຂອງພັກເຮົາ ກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ ເຂົ້າໃນການແກ້ໄຂບັນຫາຕົວຈິງ ຂອງການປະຕິວັດປະເທດເຮົາ ໂດຍສະເພາະແມ່ນ ຊ່ວງໄລຍະເຊິ່ງພາຍຫຼັງປະເທດເຮົາ ໄດ້ສູນເສຍ ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນຮັກໄປໃນທ້າຍປີ 1992; ພວກຈັກກະພັດ, ອິດທິກຳລັງປໍລະປັກ ຊອກທຸກວິທີທາງ ເພື່ອມ້າງພັກ, ມ້າງອຸດົມການສັງຄົມນິຍົມໃນຖັນແຖວສະມາຊິກພັກ, ພະນັກງານ ຢູ່ປະເທດເຮົາ; ເຮັດໃຫ້ຖັນແຖວສະມາຊິກພັກເຮົາຈຳນວນໜຶ່ງເສື່ອມຖອຍທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈິດຈາງ ທາງດ້ານອຸດົມການ. ສະນັ້ນ, ແນວຄິດຊີ້ນຳຂອງປະທານຄຳໄຕ ສີພັນດອນ ກ່ຽວກັບການກໍ່ສ້າງພັກ, ພະນັກງານ ຢູ່ປະເທດເຮົາ ໃນຊ່ວງໄລຍະດັ່ງກ່າວ ແມ່ນການຍຶດໝັ້ນ ການກໍ່ສ້າງພັກ ຕາມ 05 ຫຼັກການ, 03 ທິດນຳ ເປັນຕົ້ນແມ່ນຍຶດໝັ້ນກໍ່ສ້າງພັກຕາມລັດທິມາກ-ເລນິນ; ຍຶດໝັ້ນລວມສູນປະຊາທິປະໄຕ, ຮັກສາສາຍພົວພັນ ແບບກາຍ-ອິນຊີ ລະຫວ່າງ ພັກ ກັບມະຫາຊົນ; ຮັກສາຄວາມສາມັກຄີພາຍໃນພັກ, ຕິຊົມຕົນເອງ ແລະ ຕິຊົມກັນ; ປັບປຸງກໍ່ສ້າງການຈັດຕັ້ງຮາກຖານພັກ ຕິດພັນ ກັບການກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ ແນໃສ່ກໍ່ສ້າງຮາກຖານຊົນນະບົດ ໃຫ້ກາຍເປັນຕົວເມືອງນ້ອຍ, ເກີດມີໜໍ່ແໜງສັງຄົມນິຍົມ, ສ້າງສັງຄົມນິຍົມແຕ່ຮາກຖານຂຶ້ນມາ; ແມ່ນແນວຄິດ ທີ່ເອົາໃຈໃສ່ຕໍ່ການບຳລຸງ, ກໍ່ສ້າງພະນັກງານ, ສະມາຊິກພັກ ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ແນໃສ່ສ້າງບຸກຄະລາກອນໃຫ້ມີຄວາມສາມາດເຮັດສຳເລັດໜ້າທີ່ ທີ່ໄດ້ຮັບມອບໝາຍ, ອຸທິດຕົນ ເພື່ອຜົນປະໂຫຍດລວມຂອງຊາດ, ຄວາມສົມບູນພູນສຸກຂອງປະຊາຊົນ ໂດຍສະເພາະແມ່ນນຳພາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະພາວະດ້ອຍພັດທະນາ.

2. ເນື້ອໃນແນວຄິດຊີ້ນຳ ປະທານ ຄຳໄຕ ສີພັນດອນ ກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ

2.1 ວຽກງານກໍ່ສ້າງພັກ: ຕາມແນວຄິດຊີ້ນຳຂອງປະທານ ຄຳໄຕ ສີພັນດອນ ແມ່ນຖືສຳຄັນການກໍ່ສ້າງພັກ ໃຫ້ເຂັ້ມແຂງທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ດ້ານແບບແຜນນຳພາ; ຍຶດໝັ້ນການກໍ່ສ້າງພັກຕາມ 05 ຫຼັກການ 03 ທິດນຳ; ໃນນັ້ນ, ໄດ້ເອົາໃຈໃສ່ເປັນພິເສດ ຕໍ່ການກໍ່ສ້າງພັກ ທາງດ້ານການຈັດຕັ້ງ ເປັນຕົ້ນ ການກໍ່ສ້າງໜ່ວຍພັກແຂງ,ຮູ້ນຳພາຮອບດ້ານ; ພາຍໃຕ້ການຊີ້ນຳຂອງປະທານ ຄຳໄຕ ສີພັນດອນ ໃນທ້າຍປີ 1993 ພວກເຮົາໄດ້ເປີດກອງປະຊຸມຕົວແທນໜ່ວຍພັກທົ່ວປະເທດ ເພື່ອຄົ້ນຄວ້າກຳນົດມາດຕະຖານໜ່ວຍພັກແຂງ, ຮູ້ນຳພາຮອບດ້ານ, ຫຼັງຈາກນັ້ນມາຮອດວັນທີ 17/8/1996 ກໍໄດ້ມີຄຳສັ່ງເລກທີ 11 / ກມສພ ວ່າດ້ວຍເພີ່ມທະວີການນຳພາຂອງຄະນະພັກຂັ້ນຕ່າງໆ ໃນການປັບປຸງ, ກໍ່ສ້າງຮາກຖານພັກໃຫ້ເຂັ້ມແຂງ 4 ດ້ານ (ການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນນຳພາ) ແລະ ຍົກສູງຄວາມສາມາດນຳພາຂອງໜ່ວຍພັກໃຫ້ຮູ້ນຳພາ 5 ດ້ານ: 1) ຮູ້ນຳພາການເມືອງ-ແນວຄິດ; 2)ຮູ້ນຳພາເສດຖະກິດ; 3)ຮູ້ນຳພາອຳນາດການປົກຄອງ-ການຈັດຕັ້ງມະຫາຊົນ; 4)ຮູ້ນຳພາວຽກງານ ປກຊ-ປກສ; 5)ຮູ້ນຳພາປັບປຸງໜ່ວຍພັກ ແລະ ຂະຫຍາຍພັກ, ກໍ່ສ້າງພະນັກງານ. ພ້ອມນັ້ນ, ປະທານຄຳໄຕ ສີພັນດອນ ຍັງໄດ້ຊີ້ນຳຄະນະພັກແຕ່ລະຂັ້ນ ແລະ ຊີ້ນຳຄະນະຈັດຕັ້ງສູນກາງພັກ ໃຫ້ເອົາໃຈໃສ່ຂຶ້ນແຜນກໍ່ສ້າງ, ບຳລຸງ, ຍົກລະດັບຜູ້ເປັນເລຂາໜ່ວຍພັກບ້ານ, ຮາກຖານການຜະລິດ; ສຳລັບຢູ່ກອງທັບ ແມ່ນໃຫ້ເອົາໃຈໃສ່ກໍ່ສ້າງໜ່ວຍພັກຮູ້ນຳພາ-ຮອບດ້ານ ຕິດພັນ ກັບການສ້າງກົມກອງເຂັ້ມແຂງ.

ພ້ອມກັນນັ້ນ, ການກໍ່ສ້າງພັກ ປະທານ ໄດ້ເນັ້ນໜັກການກໍ່ສ້າງພັກ ທາງດ້ານການເມືອງ, ແນວຄິດເປັນກົກ ໂດຍເອົາໃຈໃສ່ເປັນພິເສດຕໍ່ການອົບຮົມມູນເຊື້ອ

ອັນດີງາມຂອງຊາດ, ຂອງພັກ ຕິດພັນກັບການຍົກສູງຄຸນທາດການເມືອງ ແນໃສ່ເສີມຂະຫຍາຍທາດແທ້ປະຕິວັດຂອງສະມາຊິກພັກ, ພະນັກງານ; ເອົາໃຈໃສ່ເພີ່ມທະວີວຽກງານກໍ່ສ້າງພັກຕິດພັນກັບ ການເພີ່ມທະວີຄວາມສາມັກຄີ ເປັນເອກະພາບພາຍໃນພັກ, ທົ່ວປວງຊົນ, ເປັນຕົ້ນຄວາມສາມັກຄີພາຍໃນກົມການເມືອງສູນກາງພັກ, ຄະນະບໍລິຫານງານສູນກາງພັກ; ປະທານຄໍາໄຕ ສີພັນດອນ ທັງແມ່ນຕົວແບບ ໃນດ້ານແບບແຜນເຮັດວຽກ ທີ່ເຮັດແທ້ທໍາຈິງ ທັງແມ່ນຕົວແບບແຫ່ງການດໍາລົງຊີວິດ ທີ່ປອດໃສ, ລຽບງ່າຍ, ດຸໝັ່ນ; ເອົາບົດຮຽນຕົວຈິງ ຈາກພຶດຕິກໍາຂອງຕົນເອງ ໄປແນະນໍາ, ເຜີຍແຜ່ ບົດຮຽນໃຫ້ແກ່ສະມາຊິກພັກ, ພະນັກງານ ແລະ ປະຊາຊົນ; ເອົາການກໍ່ສ້າງພັກ ຕິດພັນກັບການກໍ່ສ້າງຮາກຖານການເມືອງ ແລະ ການພັດທະນາຊົນນະບົດຮອບດ້ານເປັນໜ້າທີ່ຍຸດທະສາດຂອງທົ່ວພັກ, ກໍ່ສ້າງພັກ ຕິດພັນກັບການເພີ່ມທະວີວຽກງານປ້ອງກັນພັກ-ພະນັກງານ ແນໃສ່ຕ້ານ, ສະກັດກັ້ນກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ ແລະ ຜົນສະທ້ອນຈາກການຫັນປ່ຽນໂດຍຕົນເອງໃນຖັນແຖວສະມາຊິກພັກ-ພະນັກງານ ;

2.2 ວຽກງານພະນັກງານ: ປະທານ ຄໍາໄຕ ສີພັນດອນ ຍາມໃດກໍ່ຖືສໍາຄັນ ແລະ ເອົາໃຈໃສ່ຕໍ່ວຽກງານກໍ່ສ້າງພະນັກງານ ທ່ານໄດ້ຢືນຢັນວ່າ: ການສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ ຍາມໃດກໍ່ຕິດແໜ້ນກັບການເຊີດຊູຄວາມເປັນແບບຢ່າງນໍາໜ້າຂອງພະນັກງານ. ຄວາມເປັນແບບຢ່າງນໍາໜ້າຂອງພະນັກງານ ແມ່ນຕ້ອງສະແດງອອກໃນຄວາມເປັນແບບຢ່າງຕໍ່ການປະຕິບັດໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍໃຫ້ສໍາເລັດຜົນເປັນຢ່າງດີ, ອຸທິດຕົນ ເພື່ອຜົນປະໂຫຍດລວມຂອງຊາດ, ຄວາມສົມບູນພູນສຸກຂອງປະຊາຊົນ ພ້ອມນັ້ນ, ກໍ່ເປັນແບບຢ່າງໃນການດໍາລົງຊີວິດ ທີ່ປອດໃສ, ດຸໝັ່ນ, ປະຢັດ ແລະ ຊື່ສັດ, ບໍ່ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ...ປະທານ ຮຽກຮ້ອງໃຫ້ພັກເຮົາຕ້ອງໄດ້ກໍານົດມາດຕະຖານພະນັກງານ ແຕ່ລະປະເພດ ໃຫ້ລະອຽດຈະແຈ້ງ ເພື່ອເປັນພື້ນຖານ, ບ່ອນອີງໃຫ້ແກ່ການຕີລາຄາ,ນໍາໃຊ້ພະນັກງານຢ່າງຖືກຕ້ອງ.

3. ຄຸນຄ່າດ້ານທິດສະດີ ແລະ ພຶດຕິກໍາ ແນວຄິດຊີ້ນໍາຂອງປະທານ ຄໍາໄຕ ສີພັນດອນ ກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ.

ຄຸນຄ່າແນວຄິດຊີ້ນໍາຂອງ ປະທານ ຄໍາໄຕ ສີພັນດອນ ກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ ໄດ້ສະແດງອອກທາງດ້ານທິດສະດີ ແລະ ພຶດຕິກໍາ ດັ່ງນີ້:

3.1 ຄຸນຄ່າດ້ານທິດສະດີ

ແນວຄິດຊີ້ນໍາ ຂອງປະທານ ຄໍາໄຕ ສີພັນດອນ ກ່ຽວກັບວຽກງານກໍ່ສ້າງພັກ, ພະນັກງານ ໄດ້ເປັນທອນໄຟເຍືອງທາງ ໃຫ້ແກ່ຄະນະພັກທຸກຂັ້ນ ໃນການກໍ່ສ້າງ, ປັບປຸງການຈັດຕັ້ງພັກ, ສະມາຊິກພັກ, ພະນັກງານຢູ່ປະເທດເຮົາ ທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ທາງດ້ານແບບແຜນນໍາພາ, ຜ່ານການໝູນໃຊ້ແນວຄິດຊີ້ນໍາຂອງປະທານ ພວກເຮົາສາມາດຖອດໄດ້ບັນຫາ ທີ່ເປັນຫຼັກການໃນວຽກງານກໍ່ສ້າງພັກ-ພະນັກງານ ນັ້ນແມ່ນ **ໜຶ່ງ,** ເພີ່ມທະວີຄວາມສາມັກຄີ ເປັນເອກະພາບໃນທົ່ວພັກ, ທົ່ວປວງຊົນ ຕິດພັນກັບການເຊີດຊູນໍ້າໃຈຮັກຊາດ, ເສີມຂະຫຍາຍຈິດໃຈເອກະລາດ, ເປັນເຈົ້າຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; **ສອງ,** ຮູ້ອີງໃສ່ກໍາລັງຂອງມະຫາຊົນ, ປະຊາຊົນ ເຂົ້າໃນການກໍ່ສ້າງພັກ, ກໍ່ສ້າງພະນັກງານ; **ສາມ,** ຖືເອົາການປັບປຸງ, ປົວແປງພັກ, ກໍ່ສ້າງພັກ, ພະນັກງານ ເປັນໜ້າທີ່ປົກກະຕິ, ສະເພາະໜ້າ ແລະ ຍາວນານຂອງພັກ ເພື່ອເຮັດໃຫ້ພັກ ຍາມໃດກໍ່ເປັນກໍາລັງນໍາໜ້າຂອງຊາດ ແລະ ຍຸກສະໄໝ; **ສີ່,** ກໍ່ສ້າງພັກ ຕ້ອງເພີ່ມທະວີ ບົດບາດການນໍາພາຂອງພັກ ຕິດພັນກັບການເຊີດຊູຄວາມສັກສິດ ແຫ່ງການຄຸ້ມຄອງລັດ, ເສີມຂະຫຍາຍບົດບາດເປັນເຈົ້າການຂອງການຈັດຕັ້ງການເມືອງ-ສັງຄົມ, ສິດເປັນເຈົ້າຂອງປະຊາຊົນ; **ຫ້າ,** ເອົາການກໍ່ສ້າງພັກ ຕິດແໜ້ນກັບການປ້ອງກັນພັກ-ພະນັກງານ; ຫົກ, ເອົາການກໍ່ສ້າງພັກ ຕິດ

ພັນກັບການກໍ່ສ້າງຮາກຖານການເມືອງ ແລະ ການພັດທະນາຊົນນະບົດຮອບດ້ານ.

3.2 ຄຸນຄ່າດ້ານພຶດຕິກຳ

ແນວຄິດຊີ້ນຳຂອງ ປະທານ ຄຳໄຕ ສີພັນດອນ ກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ ແມ່ນບົດຮຽນພຶດຕິກຳ ທີ່ມີຄຸນປະໂຫຍດຕົວຈິງ ໃນການເຄື່ອນໄຫວວຽກງານກໍ່ສ້າງພັກ, ພະນັກງານ ຢູ່ປະເທດເຮົາ; ຊ່ວຍຄະນະພັກແຕ່ລະຂັ້ນ ໃນການປັບປຸງບັນດາການຈັດຕັ້ງພັກ ໃຫ້ມີຄວາມເຂັ້ມແຂງ, ມີແບບແຜນວິທີນຳພາ, ວິທີເຮັດວຽກຖືກຕ້ອງຕາມຫຼັກການລວມສູນປະຊາທິປະໄຕ, ຕິດແທ້ນກັບຮາກຖານ, ສາມາດເລືອກເຟັ້ນ, ນຳໃຊ້ພະນັກງານ ຢ່າງມີວິທະຍາສາດ, ພາວະວິໄສ. ຜ່ານພຶດຕິກຳການໝູນໃຊ້ທັດສະນະແນວຄິດຊີ້ນຳຂອງປະທານ ຄຳໄຕ ສີພັນດອນ ຄະນະຈັດຕັ້ງສູນກາງພັກພວກເຮົາ ຈຶ່ງມີຄວາມສະດວກຫຼາຍປະການ ໃນການອອກນິຕິກຳ ແລະ ດຳເນີນການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ, ພະນັກງານ ເປັນຕົ້ນ ແມ່ນການຄຸ້ມຄອງ, ການຂຶ້ນແຜນກຳນົດ, ການນຳໃຊ້ພະນັກງານນຳພາ-ຄຸ້ມຄອງພະນັກງານ ຂັ້ນສູນກາງຄຸ້ມຄອງ ຢ່າງຖືກຕ້ອງ; ເຮັດໃຫ້ວຽກງານພະນັກງານ ຢູ່ປະເທດເຮົາ ໂດຍພື້ນຖານ ມີຄວາມສະຫງົບ, ມີລັກສະນະສືບທອດ, ຕໍ່ເນື່ອງ, ສາມາດຕອບສະໜອງໜ້າທີ່ການເມືອງຂອງພັກ ໃນເງື່ອນໄຂໃໝ່

ປະທານຄຳໄຕ ສີພັນດອນ ແມ່ນໜຶ່ງ ໃນ 7 ການນຳຮຸ່ນທຳອິດ ຂອງພັກປະຊາຊົນປະຕິວັດລາວ ແລະ ແມ່ນຜູ້ໜຶ່ງດຽວ ທີ່ຍັງມີຊີວິດຢູ່ໃນປະຈຸບັນ. ສະນັ້ນ ໃນໂອກາດທີ່ພັກ, ລັດເຮົາ ຈັດຕັ້ງສະເຫຼີມສະຫຼອງຄົບຮອບ 100 ປີ ວັນເກີດຂອງປະທານນັ້ນ ຂ້າພະເຈົ້າ ສຸດທີ່ມີຄວາມພາກພູມໃຈ ທີ່ໄດ້ເປັນສ່ວນໜຶ່ງ ໃນການຄົ້ນຄວ້າແນວຄິດຊີ້ນຳຂອງເພິ່ນ ແລະ ເຫັນໄດ້ວ່າ ຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ ແມ່ນອຸດົມ, ຮັ່ງມີ ຈະເປັນຂໍ້ມູນທີ່ດີ ໃຫ້ແກ່ສະມາຊິກພັກ, ພະນັກງານຮຸ່ນຫຼັງ ໄດ້ຄົ້ນຄວ້າ, ຮໍ່າຮຽນ ແລະ ຖອດຖອນເປັນບົດຮຽນທີ່ດີໃນອະນາຄົດ...ຯ

ຊີວິດການເຄື່ອນໄຫວປະຕິວັດ...

ຕໍ່ຈາກໜ້າ 3

ແລະ ການເຄື່ອນໄຫວປະຕິວັດຂອງພັກ ເວົ້າລວມ, ເວົ້າສະເພາະການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ; ທ່ານແມ່ນຜູ້ນຳທີ່ມີຄວາມຮັບຜິດຊອບສູງ, ມີລະບຽບວິໄນ ໄດ້ປະຕິບັດໜ້າທີ່ດ້ວຍຄວາມເດັດດ່ຽວໜຽວແໜ້ນ, ສະຫຼາດຄ່ອງແຄ້ວ ແລະ ເຕີບໃຫຍ່ມີໄຊເປັນກ້າວໆມາ.

ກົມໂຄສະນາກໍ່ສ້າງພັກ-ພະນັກງານ ຂໍສະແດງຄວາມຂອບໃຈຕໍ່ຄະນະຮັບຜິດຊອບກະກຽມສະເຫຼີມສະຫຼອງວັນເກີດປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ, ຄະນະຈັດຕັ້ງສູນກາງພັກ, ຄະນະພັກ ແລະ ອຳນາດການປົກຄອງບັນດາແຂວງ ພາກໃຕ້, ບັນດາສຳນັກງານ, ອົງການ, ກົມກອງ ແລະ ບຸກຄົນທີ່ໄດ້ໃຫ້ການຮ່ວມມືໃນການສະໜອງເອກະສານຂໍ້ມູນ ສຳລັບການຂຽນບົດຄວາມ. ພ້ອມກັນນີ້, ກໍ່ຫວັງວ່າບົດນຳນີ້ ຈະເປັນປະໂຫຍດໃຫ້ແກ່ຜູ້ອ່ານໄດ້ນຳເອົາບົດຮຽນການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ, ນຳເອົາຄຸນງາມຄວາມດີ ແລະ ການອຸທິດຕົນ ເພື່ອຜົນປະໂຫຍດສ່ວນລວມຂອງຊາດ ເປັນສິ່ງສັກກາລະບູຊາ ເພື່ອຕັ້ງໜ້າຝຶກຝົນຕົນເອງໃຫ້ກາຍເປັນລູກຫຼານທີ່ມີຄວາມກະຕັນຍູ, ສືບທອດພາລະກິດປະຕິວັດອັນສູງສົ່ງຂອງປະທານໃຫ້ຈະເລີນງອກງາມບໍ່ຢຸດຢັ້ງ...ຯ

ບາງຄວາມຄິດເຫັນຂອງສະຫາຍ ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ຕໍ່ກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ, ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງທົ່ວປະເທດ ປະຈຳປີ 2023

ໂດຍ: ແສງຄຳ ຈິດຕະວົງ

ຄະນະຈັດຕັ້ງສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ, ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງປະຈຳປີ 2023 ຂຶ້ນເປັນເວລາ 2 ວັນຢູ່ທີ່ສະໂມສອນຄະນະຈັດຕັ້ງສູນກາງພັກໂດຍມີຄະນະພັກ, ຄະນະກົມ, ຄະນະພະແນກພາຍໃນທົ່ວສຳນັກງານຄະນະຈັດຕັ້ງສູນກາງ, ຜູ້ຕາງໜ້າກົມຈັດຕັ້ງ-ພະນັກງານຂອງບັນດາກະຊວງ-ອົງການ ແລະ ຕາງໜ້າຈາກຄະນະຈັດຕັ້ງແຂວງ-ນະຄອນຫຼວງວຽງຈັນເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ຕີລາຄາຄືນສະພາບການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ, ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງໃນໄລຍະ 1 ປີຜ່ານມາທີ່ມີທັງຜົນສຳເລັດ, ດ້ານດີທີ່ຕັ້ງໜ້າ ແລະ ຈຸດອ່ອນຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງ, ແກ້ໄຂໃນຕໍ່ໜ້າ; ຜົນສຳເລັດສະແດງອອກໃນວຽກງານກໍ່ສ້າງພັກ ຄະນະພັກແຕ່ລະຂັ້ນໄດ້ຜັນຂະຫຍາຍນິຕິກຳຂອງຂັ້ນເທິງມາເປັນນິຕິກຳຂັ້ນຂອງຕົນ, ຄະນະຈັດຕັ້ງແຕ່ລະຂັ້ນໄດ້ຖືເອົາວຽກງານ

ການເມືອງ-ແນວຄິດເປັນວຽກງານແຖວໜ້າໃນການເຄື່ອນໄຫວນຳພາ-ຊີ້ນຳຂອງຕົນ, ໂດຍໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ນຳພາແນວຄິດໃຫ້ສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າດ້ວຍການເຊື່ອມຊຶມບັນດານິຕິກຳຕ່າງໆ ຂອງພັກ-ລັດ; ສູນກາງພັກ ໄດ້ເອົາໃຈໃສ່ຊີ້ນຳໃນການປັບປຸງກົງຈັກການຈັດຕັ້ງທົ່ວລະບົບການເມືອງໃຫ້ມີຄວາມສອດຄ່ອງຕາມທິດກະທັດຮັດ, ເຄື່ອນໄຫວຢ່າງມີປະສິດທິພາບ ແລະ ປະສິດທິຜົນເປັນຕົ້ນແມ່ນ: ໄດ້ອອກຄຳສັ່ງເລກທີ 411/ຄລສພ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ; ຂໍ້ກຳນົດເລກທີ 416/ຄລສພ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຄະນະພັກຮາກຖານກຸ່ມບ້ານ ຫຼື ບ້ານໃຫຍ່ ເຊິ່ງຮາກຖານພັກບ້ານຈຳນວນໜຶ່ງກໍ່ໄດ້ສຳເລັດການດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ.

ປະຈຸບັນທົ່ວປະເທດມີ 36 ອົງຄະນະພັກກະຊວງ-ອົງການ, 18 ອົງຄະນະພັກແຂວງ-ນະຄອນຫຼວງ, ມີ 149 ອົງຄະນະພັກເມືອງ ແລະ ທຽບເທົ່າ, ມີການຈັດຕັ້ງຮາກຖານພັກທັງໝົດ 24.440 ຮາກຖານ, ໃນນີ້ມີຄະນະພັກຮາກຖານ 2.140 ຮາກຖານ, ມີ 9.775 ໜ່ວຍພັກຮາກຖານ, ມີ 12.523 ໜ່ວຍພັກຂຶ້ນກັບຄະນະພັກຮາກຖານ. ທົ່ວປະເທດມີສະມາຊິກພັກທັງໝົດ 412.520 ສະຫາຍ, ຍິງ 112.009 ສະຫາຍ; ໃນປີ 2022 ໄດ້ຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ 51 ອົງຄະນະພັກ, ມີ 15.219 ໜ່ວຍ, ໜ່ວຍພັກແຂງມີ 1.831 ໜ່ວຍ, ໜ່ວຍພັກກາງມີ 2.309 ໜ່ວຍ, ໜ່ວຍພັກອ່ອນມີ 103 ໜ່ວຍ ແລະ ບໍ່ໄດ້ຈັດປະເພດ 2.811 ໜ່ວຍ; ໄດ້ຕີລາຄາແບ່ງປະເພດສະມາຊິກພັກຄື: ປະເພດແຂງ 287.936 ສະຫາຍ, ຍິງ 78.681 ສະຫາຍ; ປະເພດກາງ 29.789 ສະຫາຍ, ຍິງ 6.641 ສະຫາຍ; ປະເພດອ່ອນ 696 ສະຫາຍ, ຍິງ 106 ສະຫາຍ; ປະເພດເສຍທາດ 30 ສະຫາຍ, ຍິງ 2 ສະຫາຍ; ບໍ່ໄດ້ຕີລາຄາແບ່ງປະເພດ 57.808 ສະຫາຍ, ຍິງ 16.216 ສະຫາຍ.

ຄະນະພັກ, ຄະນະຈັດຕັ້ງສູນກາງພັກ ໄດ້ເອົາໃຈໃສ່ຄົ້ນຄວ້າສັບຊ້ອນ, ຈັດວາງພະນັກງານ ໂດຍອີງຕາມແຜນກຳນົດພະນັກງານ, ຕາມມາດຕະຖານ, ເງື່ອນໄຂ, ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ, ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ສາຍຕັ້ງ ແລະ ສາຍຂວາງ ກ່ອນທີ່ຈະສະເໜີຕໍ່ຄະນະພັກຂັ້ນເທິງພິຈາລະນາຕົກລົງ ເຊິ່ງ 1 ປີຜ່ານມາ ພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງຄຸ້ມຄອງ ໄດ້ຮັບການຍົກຍ້າຍ, ແຕ່ງຕັ້ງ, ເລື່ອນຊັ້ນ, ເລື່ອນຕຳແໜ່ງທັງໝົດ 674 ສະຫາຍ, ຍິງ 40 ສະຫາຍ, ໃນນີ້ ມີນາຍທະຫານ, ນາຍຕຳຫຼວດ ເລື່ອນຊັ້ນພັນເອກຂຶ້ນໄປມີ 336 ສະຫາຍ, ຍິງ 8 ສະຫາຍ; ໄດ້ສ້າງ ແລະ ແຜນການບຳລຸງ-ກໍ່ສ້າງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ທີ່ຢູ່ໃນແຜນກຳນົດພະນັກງານ-ນຳພາຄຸ້ມຄອງ ດ້ວຍຫຼາຍຮູບການ, ວິທີການຕາມເງື່ອນໄຂຕົວຈິງຂອງແຕ່ລະຂະແໜງການ. ນອກຈາກນັ້ນ, ຄະນະພັກ, ຄະນະຈັດຕັ້ງກະຊວງ-ອົງການ ແລະ ທ້ອງຖິ່ນ ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ, ກຳນົດຕຳແໜ່ງງານຕາມທິດກະທັດຮັດ, ສົມເຫດສົມຜົນ, ເຄື່ອນໄຫວມີປະສິດທິຜົນ ແລະ ກົງຈັກການຈັດຕັ້ງໃນລະບົບການເມືອງແຕ່ລະຂັ້ນ ແມ່ນໄດ້ຮັບການປັບປຸງຢ່າງເປັນລະບົບຕໍ່ເນື່ອງ, ການຈັດຕັ້ງແຕ່ລະຂັ້ນສ່ວນຫຼາຍແມ່ນມີຄວາມເຂັ້ມແຂງ, ໜັກແໜ້ນ ແລະ ສາມາດປະຕິບັດພາລະບົດບາດ, ສິດ, ໜ້າທີ່ຂອງຕົນໄດ້ດີ, ປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍມີຜົນສຳເລັດ.

ຄຽງຄູ່ກັບຜົນງານແລະຜົນສຳເລັດດັ່ງກ່າວ, ກໍ່ຍັງມີບາງດ້ານທີ່ຕ້ອງປັບປຸງແກ້ໄຂເປັນຕົ້ນ: ການຄົ້ນຄວ້າສ້າງ, ປັບປຸງນິຕິກຳກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ, ປັບປຸງກົງຈັກການຈັດຕັ້ງ ແລະ ອອກຄຳແນະນຳ ຂອງອົງການເສນາທິການຂອງສູນກາງພັກເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດບັນດານິຕິກຳດັ່ງກ່າວຍັງຊັກຊ້າ, ບໍ່ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ; ການຈັດຕັ້ງຮາກຖານພັກຈຳນວນໜຶ່ງດຳເນີນຊີວິດໜ່ວຍພັກບໍ່ເປັນປົກກະຕິ ຍັງບໍ່ກ້າຕຳນິສິ່ງຂ່າວເຊິ່ງກັນ ແລະ ກັນ; ການນຳພາ-ຊີ້ນຳ ຕໍ່ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ບາງໜ່ວຍພັກຍັງເຮັດບໍ່ທັນໄດ້ດີ ບໍ່ທັນຫັນແຜນການປະຈຳປີມາເປັນແຜນການເຄື່ອນໄຫວປະຈຳເດືອນຂອງຕົນ ແລະ ການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ບໍ່ໄດ້ຕາມນິຕິກຳ, ບໍ່ອີງໃສ່ແຜນການ ແລະ ຜົນສຳເລັດຕົວຈິງ, ການຕີລາຄາບໍ່ຊັດເຈນ, ບໍ່ທັນຮັບປະກັນດ້ານຄຸນນະພາບ; ການຂະຫຍາຍພັກທາງດ້ານຈຳນວນແມ່ນເພີ່ມຂຶ້ນ ແຕ່ຈຳນວນໜຶ່ງຍັງບໍ່ທັນຮັບປະກັນຄຸນນະພາບການຄົ້ນຄວ້າເປົ້າໝາຍບໍ່ລະອຽດເລິກເຊິ່ງ; ການປະຕິບັດແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ມີຫຼາຍພາກສ່ວນບໍ່ທັນປະເມີນຜົນເປັນປົກກະຕິ; ການປັບປຸງກົງຈັກການຈັດຕັ້ງ ບໍ່ໄປຕາມທິດກະທັດຮັດ ຍັງມີບາງວຽກງານຍັງຊໍ້າຊ້ອນ, ການກຳນົດຕຳແໜ່ງງານຍັງເຮັດບໍ່ທັນໄດ້ດີ, ຫຼາຍພາກສ່ວນຍັງບໍ່ທັນສຳເລັດ.

ເພື່ອແກ້ໄຂ, ຈຸດອ່ອນ, ຂໍ້ຄົງຄ້າງທີ່ກ່າວມານັ້ນ, ກອງປະຊຸມໄດ້ວາງທິດທາງແຜນການ ປີ 2024 ໂດຍໄດ້ກຳນົດທິດທາງລວມ ແລະ ທິດທາງໃນແຕ່ລະດ້ານຄື: ຄະນະພັກທຸກຂັ້ນ ຕ້ອງເພີ່ມທະວີການນຳພາ-ຊີ້ນຳແນວຄິດໃຫ້ໜັກແໜ້ນແທດເຖິງ, ຄົ້ນຄວ້າເຊື່ອມຊຶມກຳແໜ້ນນິຕິກຳຕ່າງໆຂອງພັກ, ກົດໝາຍຂອງລັດ, ສືບຕໍ່ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ, ມະຕິກອງປະຊຸມໃຫຍ່ ວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XI ໃນໄລຍະທ້າຍສະໄໝ ໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້, ເປັນເຈົ້າການຈັດຕັ້ງປະຕິບັດຄຳສັ່ງ ເລກທີ411/ຄລສພ, ຄຳແນະນຳ ເລກທີ 211/ຄຈສພ ແລະ ຄຳແນະນຳຂອງອົງການທີ່ກ່ຽວຂ້ອງຂັ້ນສູນກາງ, ຂັ້ນທ້ອງຖິ່ນກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 03 ຂັ້ນຂອງພັກ; ຄະນະຈັດຕັ້ງສູນກາງພັກສືບຕໍ່ຕິດຕາມ, ຊຸກຍູ້ການດຳເນີນກອງປະຊຸມໃຫຍ່ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກອ້ອມຂ້າງແຂວງ-ນະຄອນຫຼວງ ແລະ ຮາກຖານພັກອ້ອມຂ້າງກະຊວງ-ອົງການ ແລະ ສືບຕໍ່ຄົ້ນຄວ້າສ້າງນິຕິກຳກ່ຽວກັບການດຳເນີນຊີວິດໜ່ວຍພັກ, ຄຳແນະນຳ ການກະກຽມດຳເນີນກອງປະຊຸມໃຫຍ່ຂອງໜ່ວຍພັກບ້ານ, ກອງປະຊຸມເລືອກຕັ້ງຄະນະອົງການປົກຄອງບ້ານໃນທົ່ວປະເທດ; ຄຳແນະນຳການຈັດຕັ້ງປະຕິບັດຂໍ້ກຳນົດເລກທີ 416/ຄລສພ ວ່າດ້ວຍການຈັດຕັ້ງການເຄື່ອນໄຫວຂອງຄະນະພັກຮາກຖານກຸ່ມບ້ານ ຫຼື ບ້ານໃຫຍ່; ປັບປຸງຂໍ້ກຳນົດຂອງຄະນະເລຂາທິການສູນກາງພັກກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຮາກຖານພັກສຳນັກງານ-ອົງການ; ຄຳແນະນຳເພີ່ມເຕີມກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ເພີ່ມທະວີເອົາໃຈໃສ່ວຽກງານຂະຫຍາຍພັກໂດຍຖືເອົາຄຸນນະພາບເປັນຫຼັກ, ການຂະຫຍາຍພັກຕ້ອງຕິດພັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານການປັບປຸງ-ກໍ່ສ້າງພັກ, ຕິດພັນກັບຂະບວນການວຽກງານຕົວຈິງ ແລະ ການຂະຫຍາຍສະມາຊິກພັກ

ຢູ່ຮາກຖານພັກບ້ານໃຫ້ມີຈຳນວນເພີ່ມຂຶ້ນ.

ຄະນະພັກແຕ່ລະຂັ້ນເອົາໃຈໃສ່ຈັດຕັ້ງເຊື່ອມຊຶມ, ກຳແໜ້ນມະຕິຂອງກົມການເມືອງສູນກາງພັກ ເລກທີ 21 ວ່າດ້ວຍການຕີລາຄາພະນັກງານ, ເລກທີ 13 ວ່າດ້ວຍການເລືອກເຟັ້ນແຕ່ງຕັ້ງ, ສັບປ່ຽນໜ້າທີ່ ຂອງພະນັກງານນຳພາ-ຄຸ້ມຄອງ ແລະ ຄຳແນະນຳ ເລກທີ 13, 14 ຂອງຄະນະຈັດຕັ້ງສູນກາງພັກກ່ຽວກັບ ການຈັດຕັ້ງປະຕິບັດມະຕິດັ່ງກ່າວ. ຄຽງຄູ່ກັນນັ້ນ, ຄະນະພັກແຕ່ລະຂັ້ນຕ້ອງສືບຕໍ່ປະເມີນຄືນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ຕິດພັນກັບການສັບຊ້ອນ, ຈັດວາງພະນັກງານແຕ່ລະຂັ້ນ; ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຢູ່ລັດວິສາຫະກິດແລະຢູ່ຂັ້ນບ້ານ, ຫັນພະນັກງານໜຸ່ມລົງກໍ່ສ້າງຮາກຖານໃຫ້ມີປະສົບການຈາກພຶດຕິກຳຕົວຈິງເພື່ອສ້າງເປັນພະນັກງານສືບທອດປ່ຽນແທນຢູ່ແຕ່ລະຂັ້ນ.

ເພື່ອເປັນທິດນຳໃນການຈັດຕັ້ງປະຕິບັດວຽກງານໃນຂົງເຂດວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ແລະ ຮັບປະກັນເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການແກ້ໄຂໄປຕາມທິດທີ່ພັກເຮົາໄດ້ກຳນົດໄວ້ ໃນກອງປະຊຸມຄັ້ງນີ້, ສະຫາຍ ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ໄດ້ມີຄຳຄິດຄຳເຫັນຕໍ່ຜູ້ແທນກອງປະຊຸມ, ຜູ້ຕາງໜ້າກົມຈັດຕັ້ງ-ພະນັກງານ ຂອງບັນດາກະຊວງ-ອົງການ ແລະ ຕາງໜ້າຈາກຄະນະຈັດຕັ້ງແຂວງ-ນະຄອນຫຼວງວຽງຈັນເຂົ້າຮ່ວມ ໂດຍໄດ້ເນັ້ນໜັກບາງບັນຫາດັ່ງນີ້:

ໜຶ່ງ: ການກໍ່ສ້າງພັກທາງດ້ານການເມືອງ-ແນວຄິດ: ຖືເປັນວຽກງານສຳຄັນເປັນກົກຂອງທຸກໆວຽກງານຄະນະພັກແຕ່ລະຂັ້ນຕ້ອງສືບຕໍ່ເພີ່ມທະວີວຽກງານສຶກສາອົບຮົມນຳພາການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ, ພະນັກງານ, ລັດຖະກອນ, ທະຫານ-ຕຳຫຼວດ, ປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຮັບຮູ້ເຂົ້າໃຈ ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຢູ່ປະເທດເຮົາ; ບົນພື້ນຖານດັ່ງກ່າວ ປຸກລະດົມ ຊຸກຍູ້ສະມາຊິກພັກ, ພະນັກງານ ເສີມຂະຫຍາຍຈິດໃຈເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຍູ້ແຮງການຜະລິດ, ແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນ, ຜະລິດເປັນສິນຄ້າ ເພື່ອສົ່ງອອກ ແລະ ທົດແທນການນຳເຂົ້າໃຫ້ຫຼາຍ ຕາມທ່າແຮງແຕ່ລະບ່ອນ; ຕັ້ງໜ້າເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດມາດຕະການປະຢັດແຫ່ງຊາດ ແລະ ຕ້ານການຟຸມເຟືອຍ; ສ້າງແບບແຜນວິທີເຮັດວຽກ ແລະ ແບບແຜນດຳລົງຊີວິດໃຫ້ສອດຄ່ອງກັບສະພາບການໃໝ່, ພ້ອມທັງມີສະຕິຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ການໂຄສະນາໃສ່ຮ້າຍປ້າຍສີຂອງພວກຄົນບໍ່ດີ, ຖືສຳຄັນການສຶກສາອົບຮົມມູນເຊື້ອອັນດີງາມຂອງພັກ ຕິດພັນກັບການສຶກສາອົບຮົມຄຸນສົມບັດສິນທຳປະຕິວັດ ເພື່ອສ້າງໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ທີ່ຢູ່ໃນຄວາມຮັບຜິດຊອບ ມີຄວາມອຸນອຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ພ້ອມກັນບຸກບືນ, ແຂ່ງຂັນປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ, ຕີຖອຍແນວຄິດເອື່ອຍອີງ, ຂາດຄວາມຮັບຜິດຊອບ ແລະ ອື່ນໆ.

ສອງ: ການກໍ່ສ້າງພັກທາງດ້ານການຈັດຕັ້ງ ຄະນະພັກແຕ່ລະຂັ້ນ ຕ້ອງສືບຕໍ່ເປັນເສນາທິການໃນການຕິດຕາມ, ຊຸກຍູ້ແຕ່ລະຮາກຖານພັກໃນການເຄື່ອນໄຫວນຳພາຕາມສິດ ແລະ ໜ້າທີ່ເຊິ່ງກຳນົດໃນກົດລະບຽບ ຂອງພັກສະໄໝທີ XI; ສຸມໃສ່ການກະກຽມດຳ

ເປີນກອງປະຊຸມໃຫຍ່ຮາກຖານພັກບ້ານ ແລະ ການເລືອກຕັ້ງນາຍບ້ານ ໃຫ້ໄປຕາມທິດ ເລຂາໜ່ວຍພັກຄວບຕໍາແໜ່ງເປັນນາຍບ້ານ; ບ່ອນທີ່ສໍາເລັດກອງປະຊຸມໃຫຍ່ແລ້ວ ຖ້າມີຄວາມຈໍາເປັນ ກໍ່ຮີບຮ້ອນປັບປຸງໃຫ້ສອດຄ່ອງ ເພື່ອຮັບປະກັນການນໍາພາ, ຄຸ້ມຄອງທີ່ເຂັ້ມແຂງຢູ່ຂັ້ນຮາກຖານພັກ ລວມທັງໜ່ວຍພັກ ແລະ ຄະນະພັກຮາກຖານກຸ່ມບ້ານ ເພື່ອສາມາດຮອງຮັບເປັນອົງຄະນະພັກຕາແສງໃນອະນາຄົດ; ຕໍ່ກັບບັນຫາດັ່ງກ່າວ ກົມວິຊາການຂອງຄະນະຈັດຕັ້ງສູນກາງພັກຕ້ອງໄດ້ກະກຽມຄວາມພ້ອມແຕ່ຫົວທີໃນການສ້າງນິຕິກໍາ ກ່ຽວກັບພາລະບົດບາດ, ໜ້າທີ່ ຂອງອົງຄະນະພັກຕາແສງ ໂດຍອີງໃສ່ຂໍ້ກໍານົດ ເລກທີ 416/ຄລສພ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະພັກຮາກຖານກຸ່ມບ້ານ ແລະ ບ້ານໃຫຍ່ ເບິ່ງວ່າມີບັນຫາໃດທີ່ຕ້ອງໄດ້ປັບປຸງເພີ່ມເຕີມ ແລະ ອັນສອດຄ່ອງທີ່ຈະສືບຕໍ່ນໍາໃຊ້.

ການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ອົງຄະນະພັກຂັ້ນເມືອງ, ຂັ້ນແຂວງ ແລະ ກະຊວງ-ອົງການແມ່ນໃຫ້ສຸມໃສ່ປະຕິບັດ 3 ວຽກຕົ້ນຕໍຄື: 1). ວຽກງານຂະບວນການ ຕ້ອງສຸມໃສ່ນໍາພາຍູ້ຂະບວນການຮອບດ້ານໃຫ້ແຂງແຮງ, ໃຫ້ຟົດຟື້ນ, ຕໍ່ເນື່ອງ ເປັນຕົ້ນແມ່ນການສູ້ຊົນປະຕິບັດບັນດາຄາດໝາຍທີ່ກອງປະຊຸມໃຫຍ່ຂັ້ນຂອງຕົນວາງອອກ ໃຫ້ບັນລຸຕາມລະດັບຄາດໝາຍ, ຂະບວນການປະຕິບັດ 2 ວາລະແຫ່ງຊາດ ແລະ ອື່ນໆ ທັງໝົດນີ້ ຕ້ອງໃຫ້ເປັນຂອງມະຫາຊົນ, ມີການເຂົ້າຮ່ວມຂອງມະຫາຊົນຢ່າງກວ້າງຂວາງ; 2). ກະກຽມດ້ານເນື້ອໃນ ຕ້ອງເລິກເຊິ່ງແທດກັບຕົວຈິງ, ສ່ອງແສງເຖິງຄວາມເປັນຈິງ ແຕ່ຮາກຖານຂຶ້ນມາ ແລະ ສາມາດປະຕິບັດໄດ້; ໃຫ້ເປັນບ່ອນອີງທີ່ມີລັກສະນະຫຼັກການ ໃນການປະຕິບັດຂອງການຈັດຕັ້ງພັກທຸກຂັ້ນ; 3). ການກະກຽມບຸກຄະລາກອນ ຕ້ອງລະອຽດຮອບຄອບ, ຕ້ອງເປີດບັ້ນດໍາເນີນຊີວິດການເມືອງໃຫ້ເລິກເຊິ່ງ, ກວດກາຕີລາຄາຄວາມຮັບຜິດຊອບຂອງໝູ່ຄະນະ, ຂອງບຸກຄົນໃນຄະນະພັກແລະ ພະນັກງານຫຼັກແຫຼ່ງ-ສະມາຊິກພັກ ໃຫ້ຖືກຕ້ອງ; ສ້າງ ແລະ ເລືອກເຟັ້ນເອົາບຸກຄະລາກອນ ຈາກຂະບວນການວຽກງານຕົວຈິງຢູ່ຮາກຖານ ເພື່ອສະໜັກເຂົ້າໃນໂຄງປະກອບຄະນະພັກຊຸດໃໝ່ ຕາມທິດທັນເປັນໜຸ່ມ ແລະ ຖືກຕ້ອງຕາມມາດຕະຖານເງື່ອນໄຂ, ຕິດພັນກັບການປັບປຸງກົງຈັກຂັ້ນຕ່າງໆ; ສະເພາະຮາກຖານພັກ ທີ່ໄດ້ເປີດກອງປະຊຸມໃຫຍ່ສໍາເລັດແລ້ວ ແມ່ນໃຫ້ສືບຕໍ່ປັບປຸງພາລະບົດບາດ, ແບບແຜນວິທີເຮັດວຽກ, ການແບ່ງງານພາຍໃນຄະນະໜ່ວຍພັກໃຫ້ສອດຄ່ອງຕາມຄວາມຮູ້, ຄວາມສາມາດຂອງແຕ່ລະສະຫາຍ; ຕ້ອງສ້າງແຜນການຝຶກອົບຮົມ ເພື່ອຍົກຂີດຄວາມສາມາດໃນການນໍາພາຂອງຄະນະໜ່ວຍພັກ.

ສໍາລັບການຂະຫຍາຍພັກເປັນວຽກງານທີ່ມີຄວາມສໍາຄັນ ແລະ ເພື່ອຊອກເຫັນເປົ້າໝາຍທີ່ມີຄວາມຂະຫຍັນ, ຫ້າວຫັນ, ດີເດັ່ນກວ່າໝູ່ ເພື່ອສຶກສາອົບຮົມກໍ່ສ້າງ ແລ້ວຂະຫຍາຍເຂົ້າພັກ ຕາມລະບຽບຂັ້ນຕອນທີ່ກໍານົດໄວ້ໃນກົດລະບຽບພັກ; ສະນັ້ນ, ການຂະຫຍາຍພັກ ຈຶ່ງມີຈຸດເລັ່ງສະເພາະ ແນໃສ່ແຈກຢາຍກໍາລັງຂອງພັກໃຫ້ທົ່ວເຖິງທຸກຂົງເຂດຊີວິດຂອງສັງຄົມ; ສະເພາະເປົ້າໝາຍມະຫາຊົນທີ່ຖືສາສະໜາຕ່າງໆ, ເປົ້າໝາຍທີ່ແຕ່ງງານກັບຄົນຕ່າງປະເທດ ເປັນບັນຫາທີ່ມີຄວາມຫຼໍ່ແຫຼມ, ສະນັ້ນ, ຄະນະຈັດຕັ້ງສູນກາງພັກ ຕ້ອງຄົ້ນຄວ້າໃຫ້ລະອຽດຕື່ມ.

ສາມ: ການກໍ່ສ້າງພັກທາງດ້ານແບບແຜນນໍາພາ

ແມ່ນໃຫ້ຄະນະພັກແຕ່ລະຂັ້ນ ເອົາໃຈໃສ່ສ້າງແບບແຜນເຮັດວຽກ ທີ່ຍຶດໝັ້ນ ແລະ ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ທຸກບັນຫາສຳຄັນຕ້ອງໄດ້ຮັບການປຶກສາຫາລື ຕົກລົງເປັນໝູ່ຄະນະ, ການນຳພາເປັນໝູ່ຄະນະ ບໍ່ໄດ້ໝາຍຄວາມວ່າ ທຸກອັນກິ່ງກິ່ງ ຕ້ອງໄດ້ປະຊຸມທັງໝົດ; ໝູ່ຄະນະຈະປະຊຸມກັນ ກໍຕໍ່ເມື່ອມີບັນຫາໃໝ່ເກີດຂຶ້ນເທົ່ານັ້ນ, ບັນຫາໃດ ທີ່ໝູ່ຄະນະໄດ້ມີຄຳເຫັນຊີ້ນຳ ແລະ ມອບໝາຍໃຫ້ບຸກຄົນຮັບຜິດຊອບໄປແລ້ວ, ສະຫາຍ ດັ່ງກ່າວຕ້ອງເສີມຂະຫຍາຍຄວາມຮັບຜິດຊອບ ແລະ ລັກສະນະປະດິດສ້າງໃນການຈັດຕັ້ງປະຕິບັດຢ່າງເປັນເຈົ້າການ; ບໍ່ໃຫ້ເອື່ອຍອີງໃສ່ແຕ່ໝູ່ຄະນະອີກ; ຕ້ອງສ້າງແບບແຜນເຮັດວຽກ ເຮັດແທ້ທຳຈິງ; ຕ້ອງຫັນແນວທາງ, ມະຕິ, ຄຳສັ່ງຂອງພັກ ມາເປັນໂຄງການດຳເນີນງານຂອງຂັ້ນຕົນ.

ສີ່: ວຽກງານພະນັກງານອີງຄະນະພັກ ແຕ່ລະຂັ້ນຕ້ອງໄດ້ສືບຕໍ່ເຜີຍແຜ່, ເຊື່ອມຊຶມ ບັນດານິຕິກຳກ່ຽວກັບວຽກງານພະນັກງານ ທີ່ສູນກາງພັກວາງອອກ ເປັນຕົ້ນແມ່ນມະຕິຂອງກົມການເມືອງສູນກາງພັກສະບັບເລກທີ 21/ກມສພ ວ່າດ້ວຍການຕີລາຄາພະນັກງານ ແລະ ມະຕິ ເລກທີ 04/ຄບສພ ແລະ ມະຕິ ເລກທີ 13/ກມສພ ວ່າດ້ວຍການເລືອກຟັ້ນ, ແຕ່ງຕັ້ງ, ສັບປ່ຽນໜ້າທີ່ຂອງພະນັກງານນຳພາ-ຄຸ້ມຄອງ ແລະ ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ຕໍ່ບັນດາມະຕິດັ່ງກ່າວ ໃຫ້ເລິກເຊິ່ງ ເພື່ອໃຫ້ສະມາຊິກພັກ, ພະນັກງານຮັບຮູ້, ກຳແໜ້ນ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ ໃນນີ້ ຄະນະຈັດຕັ້ງແຕ່ລະຂັ້ນ, ກົມຈັດຕັ້ງກະຊວງ-ອົງການຕ້ອງເປັນເສນາທິການ ໃຫ້ແກ່ຄະນະພັກໃນການກະກຽມເນື້ອໃນ ແລະ ບັນດາເງື່ອນໄຂຕ່າງໆ ສຳລັບການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ຢູ່ຂັ້ນຕົນ ແນໃສ່ຮັບປະກັນໃຫ້ວຽກງານຄຸ້ມຄອງພະນັກງານເຂົ້າສູ່ລວງເລິກ ແລະ ໄດ້ຮັບການຈັດຕັ້ງປະຕິບັດມີຄວາມສັກສິດ; ສືບຕໍ່ຕິດຕາມ, ຊຸກຍູ້ ແລະ ປະເມີນພະນັກງານ ຕາມຂັ້ນຕອນ ແລະ ລະບຽບການທີ່ກຳນົດໄວ້ ແລະ ຖືເອົາການປະເມີນຜົນເປັນຂໍ້ມູນເພື່ອສຶກສາອົບຮົມ, ບຳລຸງ-ກໍ່ສ້າງໃນດ້ານຕ່າງໆ ແລະ ເປັນຂໍ້ມູນໃນການຈັດວາງ, ສັບຊ້ອນພະນັກງານ. ອີກບັນຫາໜຶ່ງທີ່ສຳຄັນໃນວຽກງານກໍ່ສ້າງພະນັກງານແມ່ນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍຄຳສັ່ງ ເລກທີ 416/ຄລສພ, ລົງວັນທີ 08 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 03 ຂັ້ນຂອງພັກ ແລະ ຄຳແນະນຳ ເລກທີ 211/ຄຈສພ, ລົງວັນທີ 16 ສິງຫາ 2023 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ເພື່ອກະກຽມບຸກຄະລາກອນເຂົ້າໃນຄະນະພັກຂັ້ນຕ່າງໆຮັບປະກັນຄຸນນະພາບ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນສະເພາະໜ້າ ແລະ ຍາວນານ.

ຫ້າ: ວຽກງານປັບປຸງກົງຈັກການຈັດຕັ້ງຄະນະຈັດຕັ້ງສູນກາງພັກສົມທົບກັບກະຊວງພາຍໃນກະກຽມສະຫຼຸບຖອດຖອນບົດຮຽນກ່ຽວກັບການປັບປຸງກົງຈັກການຈັດຕັ້ງຜ່ານມາ, ພ້ອມທັງຄົ້ນຄວ້າກ່ຽວກັບການສ້າງ ແລະ ປັບປຸງນິຕິກຳເພື່ອເປັນບ່ອນອີງໃນການປັບປຸງກົງຈັກການຈັດຕັ້ງໃນຕໍ່ໜ້າໃຫ້ຮັບປະກັນຕາມທິດກະທັດຮັດແຕ່ມີຄຸນນະພາບ; ສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳວຽກງານກໍ່ສ້າງພັກ, ໃນນີ້ໃຫ້ເອົາໃຈໃສ່ຕື່ມການຄົ້ນຄວ້າໂຄງປະກອບ ແລະ ການເຄື່ອນໄຫວຂອງບັນດາຮາກຖານພັກສຳນັກງານ, ອົງການໂດຍສະເພາະບັນດາຮາກຖານພັກຂອງດ່ານສາກົນໃຫ້ມີຄວາມ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຍາດໄດ້ຜົນສຳເລັດຫຼາຍດ້ານ

ໂດຍ: ກົມປະຊາສຳພັນ ຫສນຍ

ເພື່ອສຳຫຼວດກວດກາຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ກ່ຽວກັບການນຳພາ-ຊີ້ນຳ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ 2 ວາລະແຫ່ງຊາດ ເວົ້າລວມ, ເວົ້າສະເພາະມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ແລະ ແຜນພັດທະນາວຽກງານວິຊາສະເພາະຂອງ ຫສນຍ, ປະກອບສ່ວນເຂົ້າໃນການປັບປຸງ, ເຊີດຊູສະຕິເຄົາລົບ ແລະ ການປະຕິບັດກົດລະບຽບຂອງພັກ, ເຮັດໃຫ້ການເຄົາລົບປະຕິບັດບັນດາຫຼັກການ ແລະ ທິດນຳກໍ່ສ້າງພັກ ໂດຍສະເພາະຫຼັກການລວມສູນປະຊາທິປະໄຕ, ຫຼັກການຕິຊົມຕົນເອງ ແລະ ຕິຊົມເຊິ່ງກັນ ແລະ ກັນ ໃຫ້ມີຄວາມເຂັ້ມງວດ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆພາຍໃນພັກ, ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ສາມາດສືບຕໍ່ນຳພາປະຕິບັດພາລະກິດປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ, ນຳເອົາປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ແລະ ສ້າງປະຖົມປັດໄຈກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມເທື່ອລະກ້າວ.

ໃນໄລຍະເຄິ່ງສະໄໝຜ່ານມາ ອົງຄະນະພັກ ຫສນຍ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ໃນການນຳເອົາທຸກມະຕິ, ຄຳສັ່ງຂອງພັກ ໂດຍສະເພາະມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກ ຫສນຍ ມາເຜີຍແຜ່ດ້ວຍຫຼາຍຮູບການ, ວິທີການ ແລະ ຜັນຂະຫຍາຍອອກເປັນຫຼາຍນິຕິກຳ. ພ້ອມກັນນີ້, ອົງຄະນະພັກ ຫສນຍ ໄດ້ຜັນຂະຫຍາຍເນື້ອໃນການສ້າງການຫັນປ່ຽນ, ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ຕາມມະຕິ XI ຂອງພັກມາເປັນ 3 ຫັນ ຂອງ ຫສນຍ ຄື: (1) ຫັນປ່ຽນຈາກແນວຄິດລໍຖ້າຄຳສັ່ງ ໃຫ້ເປັນເຈົ້າຕົນເອງ; (2) ຫັນປ່ຽນຈາກການເຮັດວຽກບໍ່ມີຈຸດສຸມ, ບໍ່ມີແບບແຜນ, ບໍ່ມີຄາດໝາຍໄປສູ່ວິທະຍາສາດທີ່ມີຈຸດສຸມ, ມີແບບແຜນ, ມີຄາດໝາຍ; ແລະ (3) ຫັນປ່ຽນຈາກລະບົບເຮັດວຽກມີຫຼາຍຂອດຂັ້ນ ໄປສູ່ລະບົບການເຮັດວຽກທີ່ສະດວກ, ວ່ອງໄວ, ຖືກຕ້ອງ ແລະ ທັນສະໄໝກວ່າເກົ່າ ເພື່ອສືບຕໍ່ກໍ່ສ້າງພັກ ແລະ ຍົກສູງຄວາມສາມາດ, ຄວາມເປັນແບບຢ່າງ ແລະ ລັກສະນະນຳໜ້າຂອງພັກ ທັງຍົກສູງຄຸນນະພາບການປະຕິບັດພາລະບົດບາດ 3 ດີ ຂອງ ຫສນຍ ຢ່າງຕັ້ງໜ້າຄື: ເປັນເສນາທິການທີ່ດີ, ປະສານງານທີ່ດີ ແລະ ບໍລິການຮັບໃຊ້ທີ່ດີ ເຮັດໃຫ້ມີບັນຍາກາດໃໝ່ ມີການຫັນປ່ຽນທີ່ຕັ້ງໜ້າ, ກົນໄກຄ່ອງຕົວ, ວ່ອງໄວ ແລະ ຮັດກຸມຂຶ້ນ. ໂດຍປະຕິບັດຕາມພາລະບົດບາດ ດັ່ງກ່າວການຈັດຕັ້ງປະຕິບັດວຽກງານວິຊາສະເພາະຕົວຈິງ ກໍ່ມີຜົນສຳເລັດໃນຫຼາຍດ້ານ ເຊິ່ງສາມາດຮັບປະກັນໄດ້ການເຄື່ອນໄຫວວຽກງານຂອງລັດຖະບານດຳເນີນຕາມແຜນທີ່ກຳນົດໄວ້ ເປັນຕົ້ນ:

ວຽກເສນາທິການ: ສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງວຽກງານແຕ່ລະໄລຍະ; ການຕົກລົງຕັດສິນບັນຫາຂອງລັດຖະບານ ກໍ່ຄື

ນາຍົກ-ບັນດາຮອງນາຍົກລັດຖະມົນຕີ ໂດຍລວມແມ່ນ ຖືກຕ້ອງສອດຄ່ອງກັບແນວທາງ, ກົດໝາຍ ແລະ ລະບຽບການ ແລະ ສາມາດບໍລິຫານລັດຕາມລັດຖະທຳມະນູນ ກໍ່ຄືກົດໝາຍໄດ້ກຳນົດໄວ້ໃນລະດັບດີສົມຄວນ ເຊິ່ງສະແດງອອກ ນັບແຕ່ເດືອນທັນວາ 2022 ຫາເດືອນພຶດສະພາ 2023 ມີເອກະສານເຂົ້າ 9.755 ສະບັບ, ເອກະສານອອກ 5.194 ສະບັບ ແລະ ໄດ້ຄົ້ນຄວ້າຮ່າງເອກະສານຕ່າງໆ ປະກອບມີ: ແຈ້ງການ 3.108 ສະບັບ, ໜັງສືທາງລັດຖະການ 592 ສະບັບ, ຂໍ້ຕົກລົງ 1.822 ສະບັບ, ບົດລາຍງານ 2.238 ສະບັບ, ໜັງສືສະເໜີ 276 ສະບັບ.

ວຽກປະສານງານ: ໄດ້ດຳເນີນຫຼາຍຮູບແບບທີ່ສອດຄ່ອງກັບສະພາບຕົວຈິງ ໃນແຕ່ລະໄລຍະ ໂດຍສະເພາະຮູບແບບຈັດກອງປະຊຸມສ່ອງແສງປະຈຳເດືອນ, ເຮັດໜັງສືທາງລັດຖະການ, ຈົດໝາຍວຽນຂໍຄຳເຫັນ, ການຕິດຕໍ່ສື່ສານກັນໂດຍຜ່ານລະບົບເອເລັກໂຕນິກ, ການພົບປະກັນທາງດ້ານວິຊາການໃນລະດັບຕ່າງໆ, ການລົງເກັບກຳສະພາບການປະຕິບັດມະຕິ, ຄຳສັ່ງຕ່າງໆຂອງຂັ້ນເທິງ ຢູ່ຂະແໜງການຂັ້ນສູນກາງ, ຂັ້ນທ້ອງຖິ່ນຮາກຖານ; ໄດ້ເປັນເຈົ້າການກະກຽມຄວາມພ້ອມຮອບດ້ານ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງແຜນການເຄື່ອນໄຫວຂອງການນຳ, ການກະກຽມເອກະສານຕ່າງໆ ທີ່ຈະນຳເຂົ້າຜ່ານກອງປະຊຸມລັດຖະບານສາມັນ-ວິສາມັນ, ກອງປະຊຸມລັດຖະບານເປີດກວ້າງ, ກອງກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ, ກອງປະຊຸມຄະນະລັດຖະບານ ຮ່ວມກັບຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມກົມການເມືອງສູນກາງພັກ ແລະ ກອງປະຊຸມອື່ນໆ.

ວຽກບໍລິການຮັບໃຊ້: ໄດ້ປະຕິບັດບົນພື້ນຖານສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດວາງອອກ ລວມທັງອີງຕາມເງື່ອນໄຂຄວາມສາມາດຕົວຈິງທາງດ້ານງົບປະມານຂອງລັດ ໃນແຕ່ລະໄລຍະ, ເຊິ່ງສາມາດສ້າງເງື່ອນໄຂອຳນວຍຄວາມສະດວກທຸກດ້ານໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ ທັງຢູ່ພາຍໃນ ແລະ ຕ່າງປະເທດຂອງລັດຖະບານ, ຂອງທ່ານນາຍົກລັດຖະມົນຕີ-ຮອງນາຍົກລັດຖະມົນຕີ ເປັນຕົ້ນການກະກຽມສະຖານທີ່ເຮັດວຽກ, ບ່ອນຮັບແຂກ, ບ່ອນປະຊຸມ, ການປະກອບພາຫະນະ, ວັດຖຸອຸປະກອນເຕັກນິກ ແລະ ອື່ນໆ. ອັນພົ້ນເດັ່ນແມ່ນ ໄດ້ອຳນວຍຄວບຄຸມລະບົບກອງປະຊຸມທາງໄກ ໃຫ້ແກ່ການນຳຂັ້ນສູງນຳພາຄະນະເຂົ້າຮ່ວມກອງປະຊຸມສາກົນຕ່າງໆ ແລະ ກອງປະຊຸມພາຍໃນ. ນອກຈາກນີ້, ຍັງໄດ້ບໍລິການຮັບໃຊ້ວຽກງານຮັບປະກັນຊີວິດການເປັນຢູ່, ການປະຕິບັດນະໂຍບາຍຕ່າງໆ ໃຫ້ແກ່ສະມາຊິກລັດຖະບານ, ທ່ານນາຍົກລັດຖະມົນຕີ-ຮອງນາຍົກລັດຖະມົນຕີ ລວມທັງຜູ້ທີ່ໄດ້ຮັບນະໂຍບາຍບຳນານແຕ່ລະໄລຍະ ແມ່ນມີຄວາມຮັບປະກັນດີສົມຄວນ.

ຜົນການດຳເນີນຊີວິດການເມືອງພາຍໃນຄະນະບໍລິຫານງານພັກ ໃນແຕ່ລະບາດກ້າວ ລວມເຖິງຜົນການທາບທາມຄວາມໄວ້ວາງໃຈ ຕໍ່ການນຳພາລວມ ແລະ ບຸກຄົນ ຄະນະບໍລິຫານງານພັກ ຫສນຍ ເຫັນໄດ້ວ່າ ບັນດາສະຫາຍຄະນະບໍລິຫານງານພັກ ຍັງສືບຕໍ່ໄດ້ຮັບຄວາມໄວ້ວາງໃຈຈາກບັນດາສະມາຊິກພັກ ແລະ ຈັດຢູ່ໃນປະເພດແຂງ. ເພື່ອຢັ້ງຢືນຄືນຕໍ່ຄວາມຮັບຜິດຊອບ, ຄວາມບຸກບືນພະຍາຍາມສູ້ຊົນ ແລະ ຜົນສຳເລັດ ທີ່ອົງຄະນະພັກ ຫສນຍ ສາມາດຍາດມາໄດ້ ໃນໂອກາດນີ້ ສະຫາຍ ກິແກ້ວ ໄຂຄຳພິທູນ ກໍ່ຕີລາຄາສູງຕໍ່ຄະນະພັກ-ຄະນະນຳ ຫສນຍ ໂດຍສະເພາະໃນເງື່ອນໄຂ ຕະຫຼອດໄລຍະ 2 ປີເຄິ່ງຜ່ານມາ ສະພາບສາກົນ, ພາກພື້ນ ແລະ ພາຍໃນປະເທດ ຈະປະເຊີນໜ້າອຸປະສັກ ແລະ ສິ່ງທ້າທາຍທີ່ໃຫຍ່ຫຼວງຫຼາຍປະການ ເປັນຕົ້ນຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຜົນກະທົບຈາກການແຜ່ລະບາດພະຍາດໂຄວິດ-19, ໄພພິບັດທາງທຳມະຊາດ ແລະ ການລະບາດຂອງພະຍາດຕ່າງໆ, ແຕ່ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງບັນດາສະຫາຍຄະນະພັກ ທີ່ໄດ້ຕັ້ງໜ້ານຳພາຊຸກຍູ້ ແຕ່ລະພາກສ່ວນ ສ້າງຂະບວນການຜັນຂະຫຍາຍ ດ້ວຍການຫັນເປັນແຜນງານ, ໂຄງການອັນລະອຽດ; ໄດ້ປັບປຸງ

ແບບແຜນວິທີເຮັດວຽກ ຕາມທິດ 3 ທັນ ຂອງ ທສນຍ, ຄວາມສາມັກຄີພາຍໃນຖັນແຖວສະມາຊິກພັກ, ພະນັກງານ ໄດ້ຮັບການປັບປຸງດີຂຶ້ນ; ປະຕິບັດນະໂຍບາຍຕ່າງໆ ຕໍ່ສະມາຊິກ-ພະນັກງານ ຢ່າງສອດຄ່ອງ ແລະ ສົມເຫດສົມຜົນ; ສຸມໃສ່ນໍາພາ-ຊີ້ນໍາ ການປະຕິບັດວຽກງານວິຊາສະເພາະ ກໍ່ຄືໜ້າທີ່ການເມືອງທີ່ຖືກມອບໝາຍ ແລະ ອື່ນໆ ດ້ວຍຄວາມເປັນເຈົ້າການ. ຍ້ອນແນວນັ້ນ ຈຶ່ງເຮັດໃຫ້ບັນດາອົງການຈັດຕັ້ງພັກ, ລັດ ແລະ ມະຫາຊົນຂອງ ທສນຍ ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ມີຄວາມສະຫງົບ, ສະມາຊິກພັກ-ພະນັກງານ ມີຄວາມຕັ້ງໜ້າກະຕືລືລົ້ນ ແລະ ຫ້າວຫັນໃນການປະຕິບັດໜ້າທີ່ການເມືອງ ກໍ່ຄືໜ້າທີ່ວິຊາສະເພາະຂອງຕົນສາມາດຍາດໄດ້ຮັບຜົນສໍາເລັດເປັນຢ່າງດີ.

ຄຽງຄູ່ກັບຜົນສໍາເລັດທີ່ຍາດມາໄດ້ນັ້ນ ຍັງມີຫຼາຍດ້ານທີ່ຕ້ອງໄດ້ບຸກບືນສູ້ຊົນໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້, ສືບຕໍ່ເອົາໃຈໃສ່ຕື່ມບາງບັນຫາ ເປັນຕົ້ນ:

1). ຕ້ອງເປັນເອກະພາບຕໍ່ຜົນຂອງການທາບທາມ ກໍ່ຄືການປະກອບຄໍາຄິດເຫັນ ຕໍານິສິ່ງຂ່າວຈາກສະມາຊິກພັກ, ພະນັກງານຫຼັກແຫຼ່ງ ທີ່ເຂົ້າຮ່ວມທາບທາມນັ້ນ ຖືວ່າແມ່ນການສະແດງເຖິງຄວາມເປັນຫ່ວງເປັນໄຍ ຕໍ່ການນໍາພາລວມຂອງຄະນະພັກ ແລະ ແຕ່ລະສະຫາຍໃນຄະນະພັກ, ທັງແມ່ນການປະຕິບັດຫຼັກການໃຫ້ຂັ້ນລຸ່ມຕໍານິສິ່ງຂ່າວປະກອບຄໍາເຫັນຕໍ່ຂັ້ນເທິງ ແລະ ຫຼັກການໃຫ້ມະຫາຊົນເຂົ້າຮ່ວມການປັບປຸງກໍ່ສ້າງພັກ, ຄະນະພັກ ແລະ ບຸກຄົນໃນຄະນະພັກ ເພື່ອໃຫ້ບັນດາສະຫາຍສືບຕໍ່ເປັນຫຼັກແຫຼ່ງ, ເປັນແບບຢ່າງ, ເປັນແວ່ນແຍງທີ່ໃສແຈ້ງ ທໍ່ອ້ອງຄະນະພັກ.

2). ຕ້ອງນໍາເອົາຄໍາຄິດເຫັນ ຕໍ່ການນໍາພາລວມ ແລະ ຕໍ່ແຕ່ລະສະຫາຍນັ້ນ ໄປຄົ້ນຄວ້າປັບປຸງບົດນໍາພາລວມຂອງຄະນະພັກໃຫ້ເລິກເຊິ່ງຕື່ມ. ສໍາລັບການປະກອບຄໍາເຫັນຕໍ່ແຕ່ລະສະຫາຍນັ້ນ ກໍ່ໃຫ້ນໍາໄປປັບປຸງແກ້ໄຂ, ອັນໃດບໍ່ຖືກ ຫຼື ບໍ່ມີຄວາມຈິງ ກໍ່ເອົາເປັນບົດຮຽນ, ເປັນການເຕືອນໃຫ້ມີສະຕິ ເພື່ອຫຼີກລຽງບໍ່ໃຫ້ເກີດຂຶ້ນກັບຕົນເອງໃນຕໍ່ໜ້າ;

3). ສືບຕໍ່ປັບປຸງການນໍາພາ ແລະ ວິທີເຮັດວຽກຂອງຄະນະພັກ ໃຫ້ມີວິທະຍາສາດ, ຖືກຕ້ອງຕາມຫຼັກການນໍາພາຂອງພັກ, ແທດເຖິງກັບຕົວຈິງຫຼາຍກວ່າເກົ່າ, ນໍາພາຢ່າງມີຈຸດສຸມ, ແກ້ໄຂບັນຫາຕ່າງໆໃຫ້ໄວ, ທັນການ ແລະ ມີຜົນສໍາເລັດຢ່າງຂາດຕົວ; ທຸກບັນຫາທີ່ໄດ້ວາງອອກ ແລະ ຈັດຕັ້ງນໍາພາປະຕິບັດ ຕ້ອງມີການຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນ ຢ່າງເປັນປົກກະຕິ ເພື່ອເຫັນໄດ້ອັນທີ່ສໍາເລັດ ແລະ ຄົງຄ້າງ ເພື່ອປັບປຸງແກ້ໄຂໃຫ້ທັນເວລາ;

4). ຕ້ອງປັບປຸງ ແລະ ເພີ່ມທະວີຄວາມສາມັກຄີພາຍໃນຄະນະພັກ, ຄະນະປະຈໍາພັກ ໃຫ້ໜັກແໜ້ນ ແລະ ມີຄວາມເປັນເອກະພາບສູງ, ເປັນໃຈກາງນໍາພາເຕົ້າໂຮມຄວາມສາມັກຄີໃນຖັນແຖວສະມາຊິກພັກ-ພະນັກງານ ໃຫ້ເປັນປຶກແຜ່ນແໜ້ນໜາຍິ່ງຂຶ້ນ; ຄະນະປະຈໍາພັກ ຕ້ອງເປັນແບບຢ່າງນໍາໜ້າກວ່າໝູ່ໃນທຸກດ້ານ, ເປັນຫຼັກແຫຼ່ງທີ່ແຂງແກ່ນ ຍົກສູງນໍ້າໃຈເສຍສະຫຼະເດັດດ່ຽວຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກຕ່າງໆ ເພື່ອນໍາພາທໍ່ອ້ອງຄະນະພັກ ສູ້ຊົນປະຕິບັດມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ ໃຫ້ບັນລຸຄາດໝາຍທີ່ວາງໄວ້;

5). ສືບຕໍ່ຕິດຕາມ, ເກັບກໍາສະພາບການເມືອງ-ແນວຄິດຂອງສະມາຊິກພັກ-ພະນັກງານ, ຖືເອົາວຽກງານການເມືອງ-ແນວຄິດ ເປັນຄືສະໜາມຮົບໜຶ່ງ ໂດຍເລີ່ມຈາກຫັນປ່ຽນດ້ານທັດສະນະ, ແນວຄິດ ດ້ວຍການຫັນວິທີຄິດແບບເກົ່າ ໄປສູ່ການປະດິດສ້າງໃໝ່; ແຂ່ງຂັນກັນພັດທະນາ ສ້າງແນວຄິດຕໍ່ສູ້ປົກປ້ອງແນວທາງຂອງພັກ, ເປັນເຈົ້າການຕອບໂຕ້ ຕໍ່ບັນດາ ຖ້ອຍທໍານອງບິດເບືອນ, ການໂຄສະນາທັບຖົມໂຈມຕີຂອງອິດທິກໍາລັງປໍລະປັກ ໂດຍສະເພາະ ທາງສື່ສັງຄົມອອນລາຍ; ຕ້ານແນວຄິດເອື່ອຍອີງ, ແນວຄິດຄອງຄອຍ, ຮັກສາເດີມ, ອັດຕະວິໄສ, ອາດຍາສິດ, ທັງໃຫ້ຮູ້ແກ້ໄຂຈຸດອ່ອນ, ຂໍ້ຂາດຕົກບົກຜ່ອງ-ຂໍ້ຄົງຄ້າງຕ່າງໆ ໃຫ້ທັນການ. ບັນຫາ

ອ່ານຕໍ່ໜ້າ 35

ບາງບົດຮຽນທີ່ຖອດຖອນໄດ້ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້

ໂດຍ: ໄກ່ທອງ ວິລະວົງ

ການຈັດຕັ້ງຮາກຖານພັກແມ່ນພື້ນຖານຂອງພັກ, ເປັນແກນນຳຢູ່ລະບົບການເມືອງຢູ່ຮາກຖານ, ເປັນບ່ອນດຳເນີນຊີວິດການເມືອງຂອງສະມາຊິກພັກ, ສຶກສາອົບຮົມ, ກໍ່ສ້າງ ແລະ ຮັບມະຫາຊົນກ້າວໜ້າເຂົ້າເປັນສະມາຊິກພັກ, ເປັນບ່ອນຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ນະໂຍບາຍ, ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດໃຫ້ປາກົດຜົນເປັນຈິງ, ອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້ ປະກອບດ້ວຍຄະນະພັກຮາກຖານ, ໜ່ວຍພັກຮາກຖານ ແລະ ໜ່ວຍພັກຂຶ້ນກັບຄະນະພັກຮາກຖານ, ເຊິ່ງຈັດຕັ້ງຂຶ້ນຕາມຫົວໜ່ວຍວິຊາການຂອງກົງຈັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ. ໃນທົ່ວອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້ ປະກອບມີທັງໝົດ 71 ຮາກຖານພັກ, ໃນນັ້ນມີ 11 ຄະນະພັກຮາກຖານ, 6 ໜ່ວຍພັກຮາກຖານ ແລະ 54 ໜ່ວຍພັກ ຂຶ້ນກັບຄະນະພັກຮາກຖານ

ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ຄະນະພັກກະຊວງກະສິກຳ ແລະ ປ່າໄມ້ໄດ້ເປັນເຈົ້າການໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມເອກະສານຕ່າງໆເຊັ່ນ: ຄຳສັ່ງ, ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ໃນການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ບັນດາຄະນະພັກຮາກຖານ, ຄະນະກວດກາພັກ ແລະ ປະທານ 3 ອົງຄະນະຈັດຕັ້ງມະຫາຊົນຂັ້ນກະຊວງ ທີ່ຂຶ້ນກັບອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ຢູ່ຂັ້ນຂອງຕົນ, ພ້ອມທັງເຜີຍແຜ່ເຊື່ອມຊຶມໃຫ້ຄະນະໜ່ວຍພັກ ແລະ ພະນັກງານຫຼັກແຫຼ່ງ ທີ່ຢູ່ໃນຄວາມຮັບຜິດຊອບຂອງອົງຄະນະພັກກະຊວງ.

ຄະນະປະຈຳພັກກະຊວງ ໄດ້ອອກມະຕິຕົກລົງແຕ່ງຕັ້ງຄະນະຮັບຜິດຊອບກວດກາການປະເມີນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ຄະນະຮັບຜິດຊອບດັ່ງກ່າວ ໄດ້ສ້າງແຜນການເຄື່ອນໄຫວຂອງຕົນໂດຍໄດ້ລົງກວດກາການປະເມີນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ,ໜັກແໜ້ນ ປະສານສົມທົບຄະນະພັກຮາກຖານ, ໜ່ວຍພັກຮາກຖານ ແລະ ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານອ້ອມຂ້າງອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້, ເພື່ອຮັບຟັງການສະຫຼຸບຕີລາຄາການປະຕິວັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນປີ 2022 ແລະ ວາງແຜນຄາດໝາຍສູ້ຊົນຂອງໜ່ວຍພັກ ປີ 2023, ສະຫຼຸບຕີລາຄາການປະເມີນຜົນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ບົນພື້ນຖານການຕີ

ລາຄາຄຸນນະພາບແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກ; ການຕີລາຄາສະມາຊິກພັກ ແມ່ນເລີ່ມຈາກສະມາຊິກພັກຕີລາຄາ ແລະ ໃຫ້ຄະແນນຕົນເອງ, ໝູ່ຄະນະປະກອບຄໍາເຫັນ, ໃຫ້ຄະແນນປິດລັບ ຫຼັງຈາກນັ້ນຄະນະໜ່ວຍພັກປະຊຸມຄົ້ນຄວ້າ, ພິຈາລະນາ ເພື່ອຢັ້ງຢືນ; ການຕີລາຄາປະເມີນໜ່ວຍພັກແມ່ນອີງຕາມຜົນສໍາເລັດການນໍາພາຕາມ 5 ດ້ານ ແລະ ບົນພື້ນຖານຄວາມເປັນເອກະພາບຂອງສະມາຊິກພັກ ເມື່ອເຫັນວ່າບັນລຸຕາມມາດຕະຖານ (ຄະແນນລວມຂອງໜ່ວຍພັກ 9 ຄະແນນຂຶ້ນໄປ, ສະມາຊິກພັກແຂງກວມ ເອົາ 80% ບໍ່ມີສະມາຊິກອ່ອນ ແລະ ເສຍທາດ) ຈຶ່ງສະເໜີພັກຂັ້ນເທິງພິຈາລະນາຢັ້ງຢືນເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ຜ່ານການຈັດຕັ້ງປະຕິບັດເນື້ອໃນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນປີ 2022 ມີຜົນງານຫຼາຍດ້ານເປັນຕົ້ນ: ການກໍ່ສ້າງໜ່ວຍພັກທາງດ້ານການເມືອງໄດ້ເຮັດໃຫ້ຄະນະໜ່ວຍພັກ, ສະມາຊິກພັກ, ພະນັກງານລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງໜ່ວຍພັກ ມີຄວາມຮັບຮູ້, ເຂົ້າໃຈຕໍ່ແນວທາງ, ອຸດົມການອັນສູງສົ່ງ ຂອງພັກເຮົາບົນພື້ນຖານດັ່ງກ່າວ ສາມາດສ້າງໄດ້ທັດສະນະຫຼັກໝັ້ນຊຶນຊັ້ນ, ຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດທີ່ຖືກຕ້ອງ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ລະບອບໃໝ່ ແລະ ປະເທດຊາດ, ມີນໍ້າໃຈເສຍສະຫຼະຮັບໃຊ້ຊາດ, ຮັບໃຊ້ປະຊາຊົນດີຂຶ້ນ; ຄະນະພັກຮາກຖານ ແລະ ໜ່ວຍພັກຮາກຖານ ຫຼາຍບ່ອນສາມາດຄົ້ນຄ້ວາ, ກໍາແໜ້ນ ແລະ ຜັນຂະຫຍາຍ ບັນດາມະຕິ, ຄໍາສັ່ງ, ຂໍ້ກໍານົດຂອງຄະນະພັກຂັ້ນເທິງ ໃຫ້ເປັນອັນລະອຽດຂອງແຕ່ຮາກຖານພັກພ້ອມທັງນໍາພາຈັດຕັ້ງປະຕິບັດໃຫ້ເກີດຜົນເປັນຈິງ. ທາງດ້ານແນວຄິດ ໄດ້ເຮັດໃຫ້ຄະນະໜ່ວຍພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ ໃນຄວາມຮັບຜິດຊອບຂອງໜ່ວຍພັກ ສ່ວນຫຼາຍໄດ້ເຊື່ອມຊຶມ, ກໍາແໜ້ນ ແລະ ເປັນເອກະພາບ ຕໍ່ແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ, ຮູ້ຕໍ່ສູ້ປົກປັກຮັກສາແນວທາງ, ປົກປ້ອງລະບອບໃໝ່ ແລະ ອຸດົມການ ຂອງພັກເຮົາ, ຕ້ານການປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນພາຍໃນພັກ ແລະ ສັງຄົມ, ມີຄວາມສາມັກຄີເປັນເອກະພາບ, ມີສະຕິລະວັງຕົວຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ເດັດດ່ຽວຕໍ່ຕ້ານການໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຂອງພວກອິດທິກໍາລັງປໍລະປັກ, ກຸ່ມຄົນບໍ່ຫວັງດີຕໍ່ແນວທາງນະໂຍບາຍ, ບົດບາດການນໍາພາຂອງພັກເຮົາ, ມີສະຕິໃນການບໍລິໂພກ ແລະ ນໍາໃຊ້ຂໍ້ມູນຂ່າວສານຕ່າງໆ, ຕ້ານແນວຄິດຫຼາຍເຄົ້າ, ຫຼາຍພັກ, ຈຸ້ມເຈື້ອ, ພັກພວກກຸ່ມກ້ອນ, ຕ້ານແນວຄິດອາຍາສິດ, ເອກະຊົນ, ສໍ້ລາດບັງຫຼວງ, ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອສະແຫວງຫາປະໂຫຍດສ່ວນຕົວ ແລະ ລັດທິສວຍໂອກາດໃນທຸກຮູບແບບ.

ດ້ານການຈັດຕັ້ງ ເຮັດໃຫ້ບັນດາຮາກຖານພັກໄດ້ຮັບການກໍ່ສ້າງ, ປັບປຸງຕາມ 05 ຫຼັກການ ແລະ 03 ທິດນໍາ ໃນການກໍ່ສ້າງພັກ ແລະ ເຄື່ອນໄຫວຖືກຕ້ອງຕາມພາລະບົດບາດ ຂອງຄະນະໜ່ວຍພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ ສ່ວນຫຼາຍກໍາແໜ້ນ ແລະ ປະຕິບັດໜ້າທີ່,ຄວາມຮັບຜິດຊອບຂອງຕົນ, ເຄົາລົບ ແລະ ປະຕິບັດຕາມກົດລະບຽບຂອງພັກ, ສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ ໄດ້ຮັບການເຊີດຊູຫຼາຍຂຶ້ນ, ບັນດາຫົວໜ່ວຍພັກ ໄດ້ເອົາໃຈໃສ່ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕິດພັນກັບການຮັກສາລະບອບດໍາເນີນຊີວິດໜ່ວຍພັກປະຈໍາເດືອນປົກກະຕິ, ເຮັດໃຫ້ສະມາຊິກພັກມີສະຕິເຄົາລົບການຈັດຕັ້ງ ແລະ ປະຕິບັດລະບຽບວິໄນຢ່າງເຂັ້ມງວດ, ໄດ້ເອົາໃຈໃສ່ເຮັດວຽກຂະຫຍາຍພັກ ໂດຍຖືເອົາຄຸນນະພາບເປັນຫຼັກ, ເລືອກເຟັ້ນເອົາຜູ້ທີ່ດີເດັ່ນ,ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນເຂົ້າເປັນສະມາຊິກພັກ, ເດັດດ່ຽວເອົາຜູ້ເສື່ອມຄຸນປ່ຽນທາດອອກຈາກພັກ, ຍ້ອນແນວນັ້ນ, ຈຶ່ງເຮັດໃຫ້ການຈັດຕັ້ງພັກ, ສະມາຊິກພັກ ມີການເຕີບໃຫຍ່ຂະຫຍາຍຕົວມີທັງປະລິມານ ແລະ ຄຸນນະພາບ.

ດ້ານແບບແຜນການນຳພາ ແລະ ການເຮັດວຽກ ເຫັນວ່າ ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ ແລະ ຄະນະໜ່ວຍພັກຂຶ້ນກັບຄະນະພັກຮາກຖານ ສ່ວນຫຼາຍປະຕິບັດຕາມພາລະບົດບາດ, ສິດ, ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດລະບຽບພັກ, ໂດຍຍຶດໝັ້ນ ແລະ ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ມີແຜນການເຄື່ອນໄຫວ, ມີຈຸດສຸມ, ປະຕິບັດລະບອບແບ່ງງານ, ແບ່ງຄວາມຮັບຜິດຊອບ ຂອງສະມາຊິກພັກ, ມີການສະຫຼຸບຕີລາຄາ, ຖອດຖອນບົດຮຽນການປະຕິບັດວຽກງານເປັນແຕ່ລະໄລຍະ, ປະຕິບັດລະບອບປະຊຸມສ່ອງແສງລາຍງານພາຍໃນໜ່ວຍພັກ ແລະ ຮັກສາລະບອບລາຍງານ ເພື່ອຂໍທິດຊີ້ນຳຈາກຄະນະພັກຂັ້ນເທິງເປັນປົກກະຕິ. ການນຳພາປະຕິບັດໜ້າທີ່ການເມືອງ ເຫັນວ່າບັນດາໜ່ວຍພັກສ່ວນຫຼາຍແມ່ນຮູ້ຜັນຂະຫຍາຍ, ຮູ້ນຳພາອົງການຈັດຕັ້ງລັດ ແລະ ຮູ້ນຳພາການປະຕິບັດໜ້າທີ່ວິຊາສະເພາະດ້ວຍການປຸກລະດົມ, ຊຸກຍູ້ສະມາຊິກພັກ, ພະນັກງານ-ລັດຖະກອນ ເອົາໃຈໃສ່ຍົກສູງຄວາມສາມາດ ແລະ ຄວາມຮັບຜິດຊອບ ທີ່ໄດ້ຮັບການມອບໝາຍຮູ້ນຳພາອົງການຈັດຕັ້ງມາຫາຊົນເຄື່ອນໄຫວພາລະບົດບາດ, ເປັນໃຈກາງເຕົ້າໂຮມສາມັກຄີ ແລະ ປະຕິບັດຂໍ້ແຂ່ງຂັນຂອງແຕ່ລະອົງການຈັດຕັ້ງ ເພື່ອເປັນກຳລັງແຮງໃຫ້ໜ່ວຍພັກໃນການປະຕິບັດໜ້າທີ່ວິຊາສະເພາະໃຫ້ມີຜົນສຳເລັດ, ຮູ້ນຳພາວຽກງານປ້ອງກັນພາຍໃນ, ໃນຄວາມຮັບຜິດຊອບສຶກສາອົບຮົມສະມາຊິກພັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນປົກປັກຮັກສາຄວາມປອດໄພ ຂອງສຳນັກງານ ແລະ ບ້ານເມືອງດຳລົງຊີວິດ.

ຜ່ານການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ໃນຈຳນວນທີ່ຖືກປະເມີນທັງໝົດ 59 ໜ່ວຍພັກ ເປັນປະເພດແຂງທັງໝົດ 43 ໜ່ວຍພັກ ເທົ່າກັບ 73%, ປະເພດໜ່ວຍພັກກາງ 16 ໜ່ວຍພັກ ເທົ່າກັບ 27% ຈຳນວນສະມາຊິກພັກທັງໝົດ 1.021 ສະຫາຍ, ຍິງ 331 ສະຫາຍ, ຈັດປະເພດທັງໝົດ ຈຳນວນ 892 ສະຫາຍ, ຍິງ 308 ສະຫາຍ, ບໍ່ໄດ້ຈັດປະເພດ 129 ສະຫາຍ, ຈັດປະເພດແຂງ ຈຳນວນ 834 ສະຫາຍ, ຍິງ 331 ສະຫາຍ, ຈັດປະເພດທັງໝົດ ຈຳນວນ 892 ສະຫາຍ, ຍິງ 308 ສະຫາຍ, ຈັດປະເພດແຂງ ຈຳນວນ 834 ສະຫາຍ, ຍິງ 331 ສະຫາຍເທົ່າກັບ 93,5%, ປະເພດກາງ ຈຳນວນ 58 ສະຫາຍ, ຍິງ 19 ສະຫາຍ ເທົ່າກັບ 6,5%, ບໍ່ໄດ້ຈັດປະເພດ 129 ສະຫາຍ (ພະນັກງານບຳນານ, ຍົກຍ້າຍມາໃໝ່, ໄປຮຽນຕໍ່, ລາພັກປິ່ນປົວຍາວນານ)

ໃນການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2022 ເຫັນວ່າມີຜົນສຳເລັດດີ ແລະ ມີຜົນງານທີ່ພົ້ນເດັ່ນຫຼາຍດ້ານ ແຕ່ກໍ່ຍັງມີຈຸດອ່ອນຂໍ້ຄົງຄ້າງຈຳນວນໜຶ່ງທີ່ອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້ ຍັງຈະສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າເປັນຕົ້ນ: ການຊີ້ນຳຕໍ່ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງຄະນະພັກຈຳນວນໜຶ່ງ ຍັງບໍ່ປົກກະຕິ, ບໍ່ທັນເອົາໃຈໃສ່ຊີ້ນຳການຄົ້ນຄ້ວາຜັນຂະຫຍາຍຄຳສັ່ງ, ຄຳແນະນຳຂອງຂັ້ນເທິງ ກ່ຽວກັບວຽກງານດັ່ງກ່າວ ເປັນຂອງຄະນະພັກຂັ້ນຕົນ ຈຶ່ງເຮັດໃຫ້ການປະຕິບັດຕົວຈິງພົບຄວາມຫຍຸ້ງຍາກ, ບໍ່ມີບ່ອນອີງ ແລະ ເຮັດໃຫ້ວຽກງານຊັກຊ້າບາງຮາກຖານພັກ ບໍ່ທັນເອົາໃຈໃສ່ເຊື່ອມຊຶມແນວທາງ, ແຜນນະໂຍບາຍ, ບັນດາມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເປັນປົກກະຕິ, ຈຶ່ງເຮັດໃຫ້ການນຳເອົາແຜນນະໂຍບາຍ ມາຫັນເປັນແຜນການລະອຽດຂອງໜ່ວຍພັກ ບໍ່ສອດຄ່ອງກັບຄວາມຮັບຜິດຊອບ ແລະ ໜ້າທີ່ການເມືອງຂອງຕົນ, ເຊິ່ງເຮັດໃຫ້ຜົນງານພົ້ນເດັ່ນແຕ່ລະດ້ານ ຍັງບໍ່ສາມາດບັນລຸໄດ້ຕາມຈຸດປະສົງເປົ້າໝາຍເທົ່າທີ່ຄວນຄະນະພັກຈຳນວນໜຶ່ງຍັງກຳພາລະບົດບາດ, ໜ້າທີ່, ສິດຂອງຕົນຍັງບໍ່ໜັກແໜ້ນ, ມີໜ່ວຍພັກຈຳນວນໜຶ່ງດຳເນີນຊີວິດພັກປະຈຳເດືອນບໍ່ທັນເປັນປົກກະຕິ, ເນື້ອໃນບໍ່ເລິກເຊິ່ງ, ຍັງເອົາວຽກວິຊາສະເພາະມາເປັນເນື້ອໃນຕົ້ນຕໍ, ການຂະຫຍາຍພັກ ຂອງໜ່ວຍພັກຈຳນວນໜຶ່ງ ບໍ່ຖືກຕ້ອງ

ຕາມບາດກ້າວ, ຂັ້ນຕອນການຂະຫຍາຍພັກ ທີ່ໄດ້ກໍານົດໄວ້ໃນກົດລະບຽບພັກ, ບາງຄັ້ງເຮັດໃຫ້ຊັກຊ້າແກ່ຍາວດ້ານແບບແຜນການນໍາພາ ແລະ ວິທີເຮັດວຽກເຫັນວ່າຄະນະໜ່ວຍພັກ, ສະມາຊິກພັກເຖິງແມ່ນວ່າ ຍຶດໝັ້ນປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ນໍາພາເປັນໝູ່ຄະນະ, ແບ່ງຄວາມຮັບຜິດຊອບ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ຂັ້ນລຸ່ມປະຕິບັດຕາມຂັ້ນເທິງກໍ່ຕາມ, ແຕ່ການປະຕິບັດຕົວຈິງແມ່ນຍັງບໍ່ສະແດງໃຫ້ເຫັນວິທີການລະອຽດໃນການຊີ້ນໍາເຊັ່ນ: ແຜນການ, ໂຄງການ, ການຕິດຕາມກວດກາ ແລະ ການສະຫຼຸບປະເມີນຜົນ.ເຖິງວ່າມີການຜັນຂະຫຍາຍຄໍາສັ່ງ, ບົດແນະນໍາ ແລ້ວກໍ່ຕາມ ແຕ່ການປະຕິບັດແຜນການປະເມີນຜົນຂອງບາງໜ່ວຍພັກ ຍັງບໍ່ສະແດງໃຫ້ເຫັນຕົວຊີ້ວັດທີ່ຊັດເຈນ ເພື່ອຢັ້ງຢືນຜົນງານຂອງຕົນບາງຮາກຖານພັກ ການປະເມີນຜົນການປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຍັງບໍ່ສາມາດສໍາເລັດຕາມເວລາທີ່ກໍານົດໄວ້ ເຊິ່ງສະແດງອອກໃນເວລາທີ່ຄະນະຮັບຜິດຊອບ ລົງໄປກວດກາການປະເມີນຜົນສ່ວນຫຼາຍ ສໍາເລັດແຕ່ການຕີລາຄາຈັດປະເພດສະມາຊິກພັກ ສ່ວນບົດສະຫຼຸບຕີລາຄາການປະເມີນຍັງບໍ່ສໍາເລັດ.

ເພື່ອຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ອົງຄະນະພັກກະຊວງກະສິກໍາ ແລະ ປ່າໄມ້ ຄັ້ງທີ VI ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງພັກແຕ່ລະຂັ້ນ, ຍົກສູງຄຸນນະພາບຂອງສະມາຊິກພັກ ເຂົ້າສູ່ການຈັດຕັ້ງປະຕິບັດຕົວຈິງ ໃນຕໍ່ໜ້າຈະໄດ້ສຸມໃສ່ບາງທິດທາງແຜນການດັ່ງນີ້:

ໜຶ່ງ. ຄະນະພັກກະຊວງກະສິກໍາ ແລະ ປ່າໄມ້ຕ້ອງຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າ, ປັບປຸງນິຕິກໍາ ກ່ຽວກັບການກໍ່ສ້າງໜ່ວນພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນການກໍານົດແຈ້ງເນື້ອໃນ, ບາດກ້າວ, ຂັ້ນຕອນ, ວິທີການສ້າງແຜນ, ສະຫຼຸບຕີລາຄາປະເມີນຜົນ, ກໍານົດຊີ້ວັດແຕ່ລະດ້ານໃຫ້ລະອຽດ, ຈະແຈ້ງກວ່າເກົ່າ, ເພື່ອເປັນບ່ອນອີງແກ່ໃຫ້ຄະແນນມີລັກສະນະຮູບປະທໍາ.

ສອງ. ຄະນະພັກຮາກຖານ, ໜ່ວຍພັກຮາກຖານ ແລະ ຄະນະໜ່ວຍພັກຂຶ້ນກັບຄະນະພັກຮາກຖານ ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບກວດກາການປະເມີນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂັ້ນຂອງຕົນ, ມີແຜນການເຄື່ອນໄຫວ, ຕິດຕາມຊຸກຍູ້ ບັນດາໜ່ວຍພັກ ຮອດທ້າຍປີ ມີການສະຫຼຸບຖອດຖອນບົດຮຽນ ແລະ ກໍານົດທິດທາງເພື່ອແຂ່ງຂັນກັນສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ເປັນຂະບວນການຟົດຟື້ນ ແລະ ຕໍ່ເນື່ອງ.

ສາມ. ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມບັນດານິຕິກໍາ ກ່ຽວກັບວຽກງານກໍ່ສ້າງພັກ, ຍົກສູງຄວາມສາມາດນໍາພາຂອງຕົນໃຫ້ສູງຂຶ້ນຕື່ມອີກ, ເພີ່ມທະວີການກໍ່ສ້າງພັກຕາມ 05 ຫຼັກການທີ່ໄດ້ກໍານົດໄວ້ໃນກົດລະບຽບພັກ ສະໄໝທີ XI ຕ້ອງຖືເອົາວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນວຽກບຸລິມະສິດ ໃນການຊີ້ນໍາ-ນໍາພາຂອງຕົນເປັນປະຈໍາ.

ສີ່. ກົມຈັດຕັ້ງ ແລະ ພະນັກງານ ແລະ ກົມກວດກາຕ້ອງປະສານສົມທົບກັນຢ່າງກົມກຽວໃນການຕິດຕາມ, ກວດກາ, ຊຸກຍູ້ ການກໍ່ສ້າງ ແລະ ການຕີລາຄາປະເມີນຜົນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຢ່າງແທດເຖິງ, ເປັນປົກກະຕິ, ມີການສະຫຼຸບລາຍງານການຈັດຕັ້ງປະຕິບັດ ກ່ຽວກັບການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ຄະນະປະຈໍາພັກເປັນປົກກະຕິ ເພື່ອຮັບປະກັນໃຫ້ການພິຈາລະນາ, ຕົກລົງ, ຢັ້ງຢືນການຕີລາຄາຄຸນນະພາບ, ແບ່ງປະເພດສະມາຊິກພັກ, ໜ່ວຍພັກ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ ແລະ ສອດຄ່ອງກັບຜົນງານຕົວຈິງ...ຯ

ບາງຄວາມຄິດເຫັນກ່ຽວກັບການເພີ່ມທະວີການກໍ່ສ້າງ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ເມືອງ ອາດສະພອນ ແຂວງ ສະຫວັນນະເຂດ

ໂດຍ: ພູວຽງ ໄຊຍະແສງສາ

ພັກປະຊາຊົນປະຕິວັດລາວ ແມ່ນກອງນຳໜ້າທີ່ມີການຈັດຕັ້ງ, ແມ່ນການຈັດຕັ້ງການເມືອງສູງສຸດຂອງຊົນຊັ້ນກຳມະກອນ ແລະ ຂອງລະບອບປະຊາທິປະໄຕປະຊາຊົນລາວ, ເປັນຕົວແທນທີ່ຈິງຮັກພັກດີຢ່າງສະເໝີຕົ້ນສະເໝີປາຍຕໍ່ສິດ ແລະ ຜົນປະໂຫຍດຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າ ແລະ ຂອງຊາດລາວທັງໝົດ, ເປັນພັກກຳອຳນາດ, ເປັນແກນນຳໃນລະບົບການເມືອງ, ພັກເປັນຜູ້ນຳພາ ແລະ ວາງແນວທາງ, ແຜນນະໂຍບາຍ, ກຳນົດທິດທາງຂະຫຍາຍຕົວຂອງສັງຄົມ, ທ່າອ່ຽງຂອງຍຸກສະໄໝຕອບສະໜອງຄວາມມຸ່ງມາດປາຖະໜາອັນແຮງກ້າຂອງປະຊາຊົນລາວບັນດາເຜົ່າ, ຮັບປະກັນຄວາມສາມັກຄີເປັນເອກະພາບທົ່ວປວງຊົນລາວທັງຊາດ; ພັກເຮົາຍຶດໝັ້ນລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ມູນເຊື້ອອັນດີງາມຂອງພັກເປັນພື້ນຖານທາງດ້ານແນວຄິດ, ທິດສະດີຂອງພັກ, ເປັນເຂັມຊີ້ທິດໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພັກ. ຮັບເອົາສິ່ງຍອດຍິ່ງ, ຄວາມກ້າວໜ້າທາງດ້ານວິທະຍາສາດ, ອະລິຍະທຳກ້າວໜ້າຂອງມວນມະນຸດໝູນໃຊ້ບົດຮຽນຂອງສາກົນໃຫ້ແທດເໝາະກັບສະພາບພຶດຕິກຳ ແລະ ເງື່ອນໄຂຕົວຈິງຂອງປະເທດເຮົາ; ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ, ຂອງພັກ, ນ້ຳໃຈສາມັກຄີປອງດອງຂອງທົ່ວປວງຊົນລາວທັງຊາດ ສົມທົບລັດທິຮັກຊາດອັນແທ້ຈິງກັບລັດທິສາກົນອັນຜ່ອງໃສຂອງຊົນຊັ້ນກຳມະກອນ ເພື່ອກຳນົດແນວທາງ, ແຜນນະໂຍບາຍຂອງພັກ; ຍົກສູງຄວາມສາມາດ ແລະ ຄຸນນະພາບການນຳພາຂອງພັກ ຕໍ່ທຸກຂົງເຂດວຽກງານ; ຕ້ານແນວຄິດຫຼາຍເຄົ້າ-ຫຼາຍພັກການເມືອງ.

ວັດຖຸປະສົງຂອງພັກແມ່ນນຳພາປວງຊົນລາວທັງຊາດ ດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກ, ປົກປັກຮັກສາປະເທດຊາດໄວ້ໃຫ້ໝັ້ນຄົງ, ກໍ່ສ້າງລະບອບປະຊາທິປະໄຕປະຊາຊົນ ໃຫ້ບັນລຸຕາມຈຸດໝາຍສັງຄົມນິຍົມ. ເພື່ອບັນລຸອຸດົມການ, ວັດຖຸປະສົງຂອງພັກທີ່ກ່າວມາຂ້າງເທິງນັ້ນ, ສືບຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ນຳເອົາປະເທດເຮົາກ້າວຂຶ້ນສູ່ຈຸດໝາຍແຫ່ງຄວາມຈະເລີນວັດທະນາຖ້ອຍທ່ວງທ່າອັນໜັກແໜ້ນ ພັກຈຳເປັນຕ້ອງໄດ້ຍົກສູງຄວາມສາມາດ ແລະ ເພີ່ມທະວີບົດບາດການນຳພາຂອງພັກຕໍ່ທຸກຂົງເຂດວຽກງານ, ເອົາໃຈໃສ່ປັບປຸງກໍ່ສ້າງຕົນເອງໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ແມ່ນວຽກໜຶ່ງທີ່ມີຄວາມໝາຍສຳຄັນ ແລະ ຈຳເປັນພາວະວິໄສ ແມ່ນບັນຫາຍຸດທະສາດທີ່ພົວພັນເຖິງການຄົງຕົວ ແລະ ຂະຫຍາຍຕົວຂອງພັກ, ຂອງລະບອບປະຊາທິປະໄຕ ປະຊາຊົນຢູ່ປະເທດເຮົາ.

ສະນັ້ນ, ການປັບປຸງການຈັດຕັ້ງຮາກຖານພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ແມ່ນການຍົກສູງຄຸນນະພາບຂອງຄະນະໜ່ວຍພັກ ແລະ ສະມາຊິກພັກໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີນຳພານັ້ນເອງ, ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວຂອງການຈັດຕັ້ງຮາກຖານພັກໃຫ້ຖືກຕ້ອງຕາມຫຼັກການ, ທິດນຳໃນການກໍ່ສ້າງ ແລະ ປັບປຸງພັກ

ທີ່ກຳນົດໄວ້ໃນກົດລະບຽບຂອງພັກສະໄໝທີ XI, ຖືກຕ້ອງຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງການຈັດຕັ້ງຮາກຖານພັກ, ປັບປຸງຄຸນທາດການເມືອງ, ທັດສະນະຫຼັກໝັ້ນຊຶນຊັ້ນ, ຄຸນສົມບັດສິນທຳປະຕິວັດ, ຍົກສູງລະດັບຄວາມຮູ້, ຄວາມສາມາດໃຫ້ແກ່ຖັນແຖວພະນັກງານ-ສະມາຊິກພັກ, ປັບປຸງສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ; ແມ່ນການເພີ່ມທະວີການຍົກສູງຄຸນນະພາບຂອງການຈັດຕັ້ງພັກ-ລັດ ແລະ ການເຄື່ອນໄຫວຂອງກົນໄກການຄຸ້ມຄອງໃຫ້ຮັບປະກັນເຖິງປະສິດທິພາບ ແລະ ປະສິດທິຜົນຂອງວຽກງານ; ແມ່ນການຍົກສູງຄຸນນະພາບຂອງການເຄື່ອນໄຫວຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບ ແລະ ກົດໝາຍຂອງລັດ ແລະ ບັນດານິຕິກຳທີ່ກ່ຽວຂ້ອງກັບວຽກງານຕ່າງໆຂອງການຈັດຕັ້ງແຕ່ລະຂັ້ນ ເພື່ອກະທົບໃສ່ເປົ້າໝາຍໃດໜຶ່ງ ແນໃສ່ເຮັດໃຫ້ເປົ້າໝາຍດັ່ງກ່າວນັ້ນ ມີຄວາມປອດໃສ ເຂັ້ມແຂງ ແລະ ໜັກແໜ້ນ ມີການຫັນປ່ຽນທີ່ດີ ສົມບູນແບບຂຶ້ນເລື້ອຍໆ ນັບທັງດ້ານຮູບການ ແລະ ເນື້ອໃນຂອງຮາກຖານພັກ.

ອົງຄະນະພັກເມືອງອາດສະພອນ ແມ່ນອົງຄະນະພັກໜຶ່ງທີ່ເປັນການຈັດຕັ້ງພັກຂັ້ນທ້ອງຖິ່ນ ທີ່ປະຕິບັດໜ້າທີ່ການເມືອງຂອງຕົນ ກ່ຽວກັບການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຂອງພັກໃຫ້ເຂົ້າສູ່ລວງເລິກໃນຂອບເຂດທີ່ຕົນຮັບຜິດຊອບ, ໂດຍເລີ່ມຈາກການຫັນເອົາບັນດາມະຕິ, ຄຳສັ່ງ, ລະບຽບພັກ, ກົດໝາຍຂອງລັດ ລົງສູ່ບັນດາຫົວໜ່ວຍຮາກຖານສຳນັກງານ-ອົງການ, ກຳລັງປະກອບອາວຸດ ແລະ ຫົວໜ່ວຍຮາກຖານບ້ານ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ສາມາດເປັນແກນນຳໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ເຮັດໃຫ້ທົ່ວສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ.

ໄລຍະຜ່ານມາ ອົງຄະນະພັກເມືອງ, ອົງການເສນາທິການທີ່ເຮັດວຽກງານກໍ່ສ້າງພັກ ໄດ້ມີຄວາມພະຍາຍາມ ແລະ ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍເນື້ອໃນຄຳສັ່ງຂອງກົມການເມືອງສູນກາງພັກ ເລກທີ 01/ກມສພ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ເລກທີ 291/ຄຈສພ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງກົມການເມືອງ ເລກທີ 01/ກມສພ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ຖືກຕ້ອງສອດຄ່ອງ ແລະ ເປັນເອກະພາບໃນທົ່ວເມືອງ ເພື່ອເຮັດໃຫ້ໜ່ວຍພັກຮູ້ສ້າງແຜນການ, ຮູ້ນຳພາຈັດຕັ້ງປະຕິບັດ, ຮູ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນການ, ຕີລາຄາຄຸນນະພາບ ແລະ ແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກ, ພ້ອມທັງເປັນການສະຫຼຸບລາຍງານການເຄື່ອນໄຫວນຳພາ-ຊີ້ນຳລວມຂອງໜ່ວຍພັກ ເພື່ອສ້າງແຜນການສູ້ຊົນໂດຍອີງໃສ່ສະພາວະຄວາມເປັນຈິງຂອງໜ່ວຍພັກ ແລະ ໂດຍອີງໃສ່ 5 ເນື້ອໃນຄຳສັ່ງຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, 5 ໜ້າທີ່ ແລະ 9 ຂໍ້ຫ້າມຂອງສະມາຊິກພັກ ທີ່ໄດ້ກຳນົດໄວ້ໃນກົດລະບຽບພັກ ພ້ອມທັງຕີລາຄາຄຸນນະພາບ ແລະ ແບ່ງປະເພດສະມາຊິກພັກ ຜ່ານການຈັດຕັ້ງປະຕິບັດເນື້ອໃນທິດນຳດັ່ງກ່າວ ສາມາດຍາດໄດ້ຜົນສຳເລັດ ເຊິ່ງສະແດງອອກໃນແຕ່ລະດ້ານດັ່ງນີ້:

ດ້ານການເມືອງ: ຄະນະບໍລິຫານງານພັກເມືອງໄດ້ຖືເອົາວຽກງານການເມືອງເປັນສຳຄັນສ້າງໃຫ້ຄະນະພັກ, ສະມາຊິກພັກ-ພະນັກງານ, ທະຫານ, ຕຳຫຼວດ ແລະ ມະຫາຊົນ ຢູ່ໃນຂອບເຂດຄວາມຮັບຜິດຊອບ ມີຄວາມຮັບຮູ້ເຂົ້າໃຈຕໍ່ແນວທາງ, ອຸດົມການຂອງພັກ, ສ້າງໄດ້ທັດສະນະຫຼັກໝັ້ນຊຶນຊັ້ນ, ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດທີ່ຖືກຕ້ອງ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ, ຄະນະພັກຮາກຖານ ແລະ ໜ່ວຍພັກຄົ້ນຄວ້າ, ກຳແໜ້ນ ແລະ ຜັນຂະຫຍາຍບັນດາມະຕິ, ຄຳສັ່ງ, ລະບຽບການຕ່າງໆ ຂອງຄະນະພັກຂັ້ນເທິງວາງອອກໃຫ້ເປັນອັນລະອຽດ ແລ້ວນຳໄປຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

ດ້ານແນວຄິດ: ເຫັນໄດ້ວ່າ ຄະນະພັກແຕ່ລະຂັ້ນ, ສະມາຊິກພັກ-ພະນັກງານ, ທະຫານ, ຕຳຫຼວດ ແລະ ມະ

ຫາຊົນ ໃຫ້ມີແນວຄິດເປັນເອກະພາບຕໍ່ກັບແນວທາງ, ແຜນນະໂຍບາຍ, ລະບຽບກົດໝາຍ, ມີຄວາມສາມັກຄີເປັນເອກະພາບ, ມີສະຕິລະວັງຕົວຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ຮູ້ຈໍາແນກໄດ້ມິດສັດຕູ ຕ້ານແນວຄິດຫຼາຍເຄົ້າ, ພັກພວກ-ກຸ່ມກ້ອນ, ຈຸ້ມເຈື້ອເຊື້ອສາຍ, ແນວຄິດເອກະຊົນ, ສົ້ລາດບັງຫຼວງ, ສວຍໃຊ້ໜ້າທີ່ຕໍາແໜ່ງຫາຜົນປະໂຫຍດສ່ວນຕົວ.

ດ້ານການຈັດຕັ້ງ: ຄະນະພັກແຕ່ລະຂັ້ນ ໄດ້ຍຶດໝັ້ນ ແລະ ປະຕິບັດ ຢ່າງເຂັ້ມງວດ 5 ຫຼັກການ, 3 ທິດນໍາ ໃນການກໍ່ສ້າງປັບປຸງພັກ, ເອົາໃຈໃສ່ໃນການດໍາເນີນຊີວິດການເມືອງເປັນປົກກະຕິ ຫຼາຍໜ່ວຍພັກສາມາດຮັບປະກັນໄດ້ 3 ລັກສະນະການຮ່ວມຊີວິດພັກ ແລະ ຄະນະພັກ, ສະມາຊິກພັກ ເປັນເຈົ້າການຍົກສູງສະຕິເຄົາລົບ ແລະ ປະຕິບັດກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດຢ່າງເຂັ້ມງວດ ແລະ ເປັນແບບຢ່າງທີ່ດີໃນການເຄື່ອນໄຫວ ແລະ ການດໍາລົງຊີວິດທີ່ປອດໃສ; ເອົາໃຈໃສ່ຄຸ້ມຄອງ ແລະ ຂະຫຍາຍມະຫາຊົນເຂົ້າພັກ ບົນພື້ນຖານປະຕິບັດຢ່າງຖືກຕ້ອງຕາມຫຼັກການ, ມາດຕະຖານ, ເງື່ອນໄຂ ແລະ ບາດກ້າວ, ຂັ້ນຕອນທີ່ກໍານົດໄວ້. ມາຮອດປະຈຸບັນອົງຄະນະພັກເມືອງອາດສະພອນ ປະກອບມີ 5 ຄະນະພັກຮາກຖານ, ມີ 2 ຄະນະພັກຮາກຖານກໍາລັງປະກອບອາວຸດ ແລະ ມີ 3 ຄະນະພັກຮາກຖານຈຸດສຸມກຸ່ມບ້ານ; ມີໜ່ວຍພັກທັງໝົດ 111 ໜ່ວຍພັກ, ມີໜ່ວຍພັກຮາກຖານ 67 ໜ່ວຍພັກ ແລະ ມີໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ 44 ໜ່ວຍພັກ; ໃນນັ້ນສາມາດສ້າງໄດ້ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ທັງໝົດມີ 92 ໜ່ວຍພັກ; ມີສະມາຊິກພັກທັງໝົດ 1.964 ສະຫາຍ, ຍິງ 466 ສະຫາຍ; ຜ່ານການຕີລາຄາແບ່ງປະເພດສະມາຊິກພັກ ໃນປີ 2022 ມີສະມາຊິກພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ປະເພດແຂງ 1.669 ສະຫາຍ ກວມ 84,97% ຂອງສະມາຊິກພັກທັງໝົດ, ກາງ 31 ສະຫາຍ ກວມ 1,57% , ອ່ອນ 0 %, ບໍ່ໄດ້ຈັດປະເພດ 264 ສະຫາຍ ກວມ 13,44%.

ດ້ານແບບແຜນການນໍາພາຂອງພັກ: ຄະນະພັກແຕ່ລະຂັ້ນ ໄດ້ເອົາໃຈໃສ່ປັບປຸງແບບແຜນນໍາພາ ແລະ ວິທີເຮັດວຽກຂອງຕົນໃຫ້ຖືກຕ້ອງຕາມກົດລະບຽບຂອງພັກ ແລະ ມີວິທະຍາສາດ, ສົມທົບແໜ້ນ ລະຫວ່າງການເພີ່ມທະວີການນໍາພາຂອງພັກກັບການເຊີດຊູຄວາສັກສິດໃນການຄຸ້ມຄອງລັດ ແລະ ເສີມຂະຫຍາຍບົດບາດເປັນເຈົ້າຂອງອົງການຈັດຈັ້ງມະຫາຊົນ, ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນໍາພາເປັນໝູ່ຄະນະບຸກຄົນຮັບຜິດຊອບຢ່າງເຂັ້ມງວດ, ເສີມຂະຫຍາຍປະຊາທິປະໄຕພາຍໃນພັກ ແລະ ໃນໝູ່ມະຫາຊົນຢ່າງກວ້າງຂວາງ ເຮັດໃຫ້ພາຍໃນພັກມີຄວາມສາມັກຄີເປັນເອກະພາບໄດ້ ກາຍເປັນໃຈກາງໃນການເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ, ເປັນກໍາລັງແຮງໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ປະຕິບັດລະບອບດໍາເນີນຊີວິດການເມືອງພາຍໃນພັກຢ່າງເປັນປົກກະຕິ, ຍົກສູງນໍ້າໃຈຕໍານິຕົນເອງ ແລະ ຕໍານິກັນຢູ່ສະເໝີ, ການພົວພັນປະສານສົມທົບ ລະຫວ່າງຄະນະພັກ ແລະ ອົງການຈັດຕັ້ງມະຫາຊົນກໍ່ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ.

ດ້ານການນໍາພາປະຕິບັດໜ້າທີ່ການເມືອງ: ຄະນະພັກ, ສະມາຊິກພັກ ແຕ່ລະສະຫາຍໄດ້ເປັນເຈົ້າການ ແລະ ຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງ ເອົາໃຈໃສ່ນໍາພາ-ຊີ້ນໍາວິຊາສະເພາະແຕ່ລະຂົງເຂດຈັດຕັ້ງປະຕິບັດເຮັດໃຫ້ໜ່ວຍພັກ ແລະ ສະມາຊິກພັກ ມີຄວາມເຕີບໃຫຍ່ຂະຫຍາຍຕົວທາງດ້ານຈໍານວນ ແລະ ຄຸນນະພາບ, ໜ່ວຍພັກບ້ານໄດ້ຮູ້ນໍາພາປະຊາຊົນພັດທະນາບ້ານຊ່ອງຂອງຕົນ, ປົວແປງ ແລະ ແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນ. ໜ່ວຍພັກສໍານັກງານ-ອົງການ, ກົມກອງໄດ້ມີການຫັນປ່ຽນຢ່າງຕັ້ງໜ້າຮູ້ນໍາພາ ແລະ ປະຕິບັດຕາມຂອບເຂດ, ສິດໜ້າທີ່ຂອງຕົນເອງ ໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຢູ່ຂັ້ນຮາກຖານ ໃຫ້ມີຜົນສໍາເລັດ; ນໍາພາວຽກງານ ປກຊ-ປກສ ເຮັດໃຫ້ສໍານັກງານ-ອົງການ, ກົມກອງ, ບ້ານມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

ຄຽງຄູ່ກັບຜົນສໍາເລັດ ແລະ ດ້ານດີທີ່ກ່າວມາຂ້າງ

ເຖິງນັ້ນ, ກໍ່ຍັງມີບາງບັນຫາທີ່ຕັ້ງຂຶ້ນ ທີ່ຄະນະພັກ, ຄະນະຮັບຜິດຊອບ, ພະນັກງານ-ສະມາຊິກພັກແຕ່ລະສະຫາຍ ຈະຕ້ອງໄດ້ຍົກສູງຄວາມຮັບຜິດຊອບ ແລະ ເປັນເຈົ້າການໃນການປະກອບສ່ວນກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນດັ່ງນີ້:

1). ການຄົ້ນຄວ້າ, ເຊື່ອມຊຶມເພື່ອກຳແໜ້ນບັນດາເນື້ອໃນຈິດໃຈບັນດານິຕິກຳ ກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຍັງບໍ່ທັນເລິກເຊິ່ງ ແລະ ທົ່ວເຖິງ; ມີບາງຄະນະພັກ, ບາງສະຫາຍສະມາຊິກພັກ, ບາງຄັ້ງຄາວຍັງຖືເບົາ, ຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ, ບໍ່ທັນກວ້າງຂວາງ ແລະ ບໍ່ທັນຮູ້ຜັນຂະຫຍາຍເນື້ອໃນມາດຕະຖານຕ່າງໆ ໃຫ້ແທດເໝາະກັບສະພາບຈຸດພິເສດຂອງໜ່ວຍພັກຕົນ ເພື່ອນຳພາ-ຊີ້ນຳ ແລະ ປະຕິບັດຕົວຈິງ.

2). ການສຶກສາອົບຮົມການເມືອງ, ນຳພາແນວຄິດ ຢູ່ບາງໜ່ວຍພັກ, ໜ່ວຍງານ ຍັງມີລັກສະນະລວມໆ, ບໍ່ຕິດພັນກັບຕົວຈິງ, ບໍ່ແທດເໝາະກັບແຕ່ລະເປົ້າໝາຍ ຈຶ່ງເຮັດໃຫ້ການກໍ່ສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງ, ແນວຄິດຍັງບໍ່ທັນໄດ້ດີ. ເຮັດໃຫ້ການຕື່ນຕົວ ໃນການເປັນເຈົ້າປະກອບສ່ວນຂອງພະນັກງານ ແລະ ປະຊາຊົນຈຳນວນໜຶ່ງເຂົ້າໃນການສ້າງສາພັດທະນາ ບໍ່ທັນສູງເທົ່າທີ່ຄວນ ແລະ ເຮັດໃຫ້ສະມາຊິກພັກບາງສະຫາຍ, ພະນັກງານຈຳນວນໜຶ່ງ, ປະຊາຊົນສ່ວນໜຶ່ງ ບໍ່ຮູ້ພັດທະນາ ແລະ ປັບປຸງຕົນເອງ.

3). ຄວາມເປັນເຈົ້າການ ຂອງບາງສະຫາຍໃນຄະນະພັກ, ສະມາຊິກພັກ ຕໍ່ການປັບປຸງກົງຈັກການຈັດຕັ້ງຂອງບາງໜ່ວຍພັກ ຍັງເຮັດບໍ່ທັນຕໍ່ເນື່ອງ ແລະ ບາງຄັ້ງຍັງບໍ່ທັນສ້າງເງື່ອນໄຂທີ່ດີ ໃຫ້ແກ່ມະຫາຊົນເຂົ້າຮ່ວມຂະບວນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ. ບາງຄັ້ງຍັງບໍ່ທັນເອົາໃຈໃສ່ເປັນເຈົ້າການໃນການສ້າງແຜນ ແລະ ຈັດຕັ້ງແຜນດັ່ງກ່າວ ຈຶ່ງເຮັດໃຫ້ການເຄື່ອນໄຫວວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຂອງແຕ່ລະໜ່ວຍພັກ ບໍ່ທັນມີປະສິດທິຜົນເທົ່າທີ່ຄວນ.

4). ໃນດ້ານແບບແຜນວິທີນຳພາ ຍັງມີບາງໜ່ວຍພັກ ຍັງບໍ່ທັນເຂັ້ມງວດໃນການປະຕິບັດຫຼັກການລວມສູນ ເຮັດໃຫ້ຄະນະພັກ, ສະມາຊິກພັກ ຍັງອູ້ມອຽກ, ບໍ່ທັນແບ່ງໜ້າທີ່ກັນຢ່າງຈະແຈ້ງ, ພ້ອມນັ້ນການປະສານສົມທົບການປຶກສາຫາລືພາຍໃນພັກ ມີປະກົດເປັນລັກສະນະຮູບການ, ການເສີມຂະຫຍາຍຫົວຄິດປະດິດສ້າງ, ທຸ້ມເທເຫື່ອແຮງກຳລັງເຂົ້າໃນການປະຕິບັດແຜນການ, ອີກດ້ານໜຶ່ງແບບແຜນການນຳພາຂອງຄະນະໜ່ວຍພັກຍັງຂາດການຫັນເອົາແຜນພັດທະນາຍຸດທະສາດແຕ່ລະດ້ານວຽກງານຂອງພັກ ແລະ ລັດມາເປັນຈຸດສຸມເຄື່ອນໄຫວນຳພາຂອງຕົນ.

5). ການປະຕິບັດໜ້າທີ່ການເມືອງ ຂອງຄະນະພັກ, ສະມາຊິກພັກ ຢູ່ບາງໜ່ວຍພັກ ຍັງຂາດຄວາມເປັນແບບຢ່າງໃນການປະຕິບັດໜ້າວຽກເຮັດໃຫ້ວຽກງານປ້ອງກັນພັກ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຂອງພັກ ຍັງບໍ່ທັນແຂງແຮງເທົ່າທີ່ຄວນ, ສະຕິລະວັງຕົວຂອງປະຊາຊົນຈຳນວນໜຶ່ງຕໍ່ກົນອຸບາຍຂອງອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ຫວັງດີບໍ່ທັນສູງ, ປະກົດການຫຍໍ້ທໍ້ໃນສັງຄົມ.

ຈາກການຕີລາຄາຕໍ່ກັບຂໍ້ຄົງຄ້າງ ແລະ ບັນຫາຕັ້ງຂຶ້ນຕາມທັດສະນະ ຂອງຜູ້ຂຽນແລ້ວ ຂໍມີຄຳເຫັນແລກປ່ຽນບາງເນື້ອໃນ ເພື່ອປະກອບສ່ວນປັບປຸງ ແລະ ເປັນທິດທາງ ແລະ ວິທີການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃນຕໍ່ໜ້າດັ່ງນີ້:

1. ຕ້ອງເພີ່ມທະວີການນຳພາຂອງຄະນະພັກຕໍ່ການກໍ່ສ້າງ-ປັບປຸງການຈັດຕັ້ງຮາກຖານພັກບ້ານ, ສຳນັກງານ-ອົງການຢູ່ແຕ່ລະບ່ອນໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ແບບແຜນວິທີນຳພາ ແລະ ຍົກສູງຄວາມຮັບຜິດຊອບທາງດ້ານການເມືອງຂອງໜ່ວຍພັກ, ສາມາດເຮັດສຳເລັດໜ້າທີ່ນຳພາຂອງຕົນຢູ່ຫົວໜ່ວຍຮາກຖານ. ພ້ອມກັນນັ້ນ, ກໍ່ເຮັດວຽກງານຂະຫຍາຍພັກທາງດ້ານປະລິມານ ແລະ ຄຸນນະພາບ, ຝຶກຝົນຫຼໍ່ຫຼອມຖັນແຖວພະນັກງານ, ສະມາຊິກພັກມີຄຸນທາດການເມືອງໜັກແໜ້ນ, ຄຸນສົມບັດສິນທຳປະຕິວັດດີ, ມີຫຼັກໝັ້ນຊົນຊັ້ນກຳມະກອນຈະແຈ້ງ ແລະ ມີແບບ

ແຜນດຳລົງຊີວິດທີ່ສົດໃສ ແລະ ກ້າວໜ້າ.

2. ເພື່ອຍົກສູງຄຸນນະພາບການນຳພາ-ຊີ້ນຳ ຂອງຄະນະພັກ, ແຕ່ລະຂັ້ນກ່ຽວກັບການກໍ່ສ້າງ-ປັບປຸງການຈັດຕັ້ງຮາກຖານພັກ ໃຫ້ມີຄວາມເຂັ້ມແຂງ ສາມາດເປັນແກນນຳໃນລະບົບການເມືອງ ຢູ່ຫົວໜ່ວຍຮາກຖານ, ແມ່ນການສ້າງໃຫ້ພະນັກງານ, ສະມາຊິກພັກແຕ່ລະສະຫາຍສາມາດເສີມຂະຫຍາຍທຸກກຳລັງແຮງທີ່ມີຄວາມສາມາດປະດິດສ້າງເຂົ້າໃນທຸກຂົງເຂດວຽກງານທີ່ຕົນຮັບຜິດຊອບ.

3. ການກໍ່ສ້າງພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ແມ່ນການປະຕິບັດວຽກງານກໍ່ສ້າງ-ປັບປຸງການຈັດຕັ້ງຮາກຖານພັກ ໃຫ້ເປັນຫົວໜ່ວຍແກ່ນສານນຳພາວຽກງານຮອບດ້ານ ຢູ່ຮາກຖານເຊັ່ນ: ນຳພາລະບົບການເມືອງຢູ່ຮາກຖານໃຫ້ມີສະຖຽນສະພາບ, ນຳພາເສດຖະກິດ-ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ດີຂຶ້ນ, ນຳພາວຽກ ປກຊ-ປກສ ໃຫ້ມີຄວາມເຂັ້ມແຂງ ຮັບປະກັນໃຫ້ຮາກຖານມີຄວາມສະຫງົບປອດໄພໃນສັງຄົມ, ນຳພາວັດທະນະທຳ-ສັງຄົມ ຮັບປະກັນໃຫ້ວັດທະນະທຳອັນດີງາມໄດ້ຮັບການປົກປັກຮັກສາ ແລະເສີມຂະຫຍາຍ.

4. ຄະນະພັກເມືອງເວົ້າລວມ, ເວົ້າສະເພາະແມ່ນຄະນະຈັດຕັ້ງເມືອງເຊິ່ງເປັນເສນາທິການໃຫ້ຄະນະພັກເມືອງ, ພ້ອມທັງເປັນຜູ້ຮັບຜິດຊອບໃນຄະນະກຳການປະເມີນໜ່ວຍພັກ ຕ້ອງໄດ້ມີການຕິດຕາມ, ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບບັນດາຄະນະພັກຮາກຖານ, ຄະນະໜ່ວຍພັກ ໄດ້ຝຶກອົບຮົມ, ເຊື່ອມຊຶມບັນດາເອກະສານຄຳສັ່ງ, ຄຳແນະນຳ ກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ເຂົ້າໃຈ, ກຳແໜ້ນວິທີການ ແລະ ຂັ້ນຕອນໃນການສ້າງແຜນກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

5. ຍົກສູງຄວາມຮັບຜິດຊອບ ແລະ ເພີ່ມທະວີການນຳພາ-ຊີ້ນຳ, ກວດກາຂອງຄະນະພັກຂັ້ນເທິງ ຕໍ່ການຈັດຕັ້ງຮາກຖານພັກ, ຄະນະພັກຮາກຖານ, ຕ້ອງໄດ້ມີຄວາມຮັບຜິດຊອບຕິດຕາມ-ກວດກາ, ຕີລາຄາຢ່າງຖືກຕ້ອງພາວະວິໄສ ແລະ ສະພາບຄວາມເປັນຈິງຂອງແຕ່ລະປະເພດຮາກຖານພັກ ເພື່ອວາງທິດທາງແຜນການລະອຽດໃນການປັບປຸງການຈັດຕັ້ງຮາກຖານພັກໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະແມ່ນຕ້ອງເລັ່ງໃສ່ບັນດາໜ່ວຍພັກອ່ອນກວ່າໝູ່ແນໃສ່ລົບລ້າງໜ່ວຍພັກອ່ອນ ແລະ ສະມາຊິກພັກອ່ອນໃຫ້ໝົດໄປເທື່ອລະກ້າວ; ເອົາໃຈໃສ່ຊຸກຍູ້, ຕິດຕາມ, ນຳພາ-ຊີ້ນຳຢ່າງໃກ້ຊິດຕໍ່ບັນດາໜ່ວຍພັກທີ່ພວມມີປັດໄຈໃໝ່ທີ່ຕັ້ງໜ້າ ເພື່ອສືບຕໍ່ສ້າງໃຫ້ກາຍເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ສັງລວມແລ້ວ: ການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຢູ່ເມືອງອາດສະພອນ ແຂວງສະຫວັນນະເຂດ ແມ່ນມີບົດບາດສຳຄັນຫຼາຍໃນການປັບປຸງການຈັດຕັ້ງຮາກຖານພັກ ເພາະວຽກງານດັ່ງກ່າວເປັນປັດໄຈສຳຄັນໃນການຍົກສູງຄວາມສາມາດນຳພາຂອງຄະນະໜ່ວຍພັກ, ສະມາຊິກພັກແຕ່ລະສະຫາຍ ເພື່ອເປັນແກນນຳໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງພັກ, ວຽກງານຂອງສະມາຊິກພັກ-ພະນັກງານ ແຕ່ລະຂະແໜງການທີ່ຕົນຮັບຜິດຊອບ, ເພາະຖ້າຫາກສະມາຊິກພັກທຸກສະຫາຍພາຍໃນໜ່ວຍພັກ, ຫາກມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ສັດຊື່ບໍລິສຸດ ສາມາດກຳໄດ້ເຖິງທາດແທ້ ແລະ ອຸດົມການຂອງພັກ ກໍ່ຈະເຮັດໃຫ້ການຈັດຕັ້ງຮາກຖານພັກມີຄວາມໜັກແໜ້ນເຂັ້ມແຂງ ໃນການນຳພາທຸກຂະແໜງການປະຕິບັດໜ້າທີ່ວຽກງານ ວິຊາສະເພາະຂອງຕົນ, ເຮັດໃຫ້ການຈັດຕັ້ງພັກສາມາດສ້າງໜ່ວຍພັກໃຫ້ເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢ່າງມີປະສິດທິພາບສູງ, ເຮັດໃຫ້ວຽກງານໃນທຸກຂົງເຂດທີ່ຂຶ້ນກັບຄວາມຮັບຜິດຊອບແຕ່ລະຂັ້ນມີຄວາມເຂັ້ມແຂງ ໄປຕາມໆກັນປະກອບສ່ວນເຂົ້າໃນໜ້າທີ່ວຽກງານ, ການເມືອງຂອງພັກ-ລັດ ນຳພາປະເທດຊາດຈະເລີນກ້າວໜ້າຕາມເສັ້ນທາງສັງຄົມນິຍົມເທື່ອລະກ້າວ...໗

ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກໃຫ້ມີຄວາມເຂັ້ມແຂງ

ໂດຍ: ບຸນທະວີ ບັນດາສັກ

ເພື່ອຮັບປະກັນການປະຕິບັດແນວທາງ, ແຜນນະໂຍບາຍ ຂອງພັກ-ລັດ ກໍ່ຄືທິດທາງ, ໜ້າທີ່, ຄາດໝາຍສູ້ຊົນ. ສະນັ້ນ, ຫ້ອງການ ຈໍາເປັນຕ້ອງໄດ້ເອົາໃຈໃສ່ປັບປຸງໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນ ແລະ ລະບອບແບບແຜນວິທີເຮັດວຽກຂອງຕົນໃຫ້ມີຄວາມເຂັ້ມແຂງໃນທຸກດ້ານ, ເພີ່ມຂີດຄວາມສາມາດໃນການເຄື່ອນໄຫວວຽກງານຢ່າງມີປະສິດທິພາບ, ປະສິດທິຜົນສູງ, ສ້າງບັນດາລະບຽບທີ່ເປັນພື້ນຖານຢ່າງເປັນລະບົບຄົບຊຸດ, ມີຂັ້ນຕອນການບໍລິຫານທີ່ມີຄວາມສະດວກ, ຄ່ອງຕົວ, ກົງຈັກການຈັດຕັ້ງມີສະຖຽນລະພາບກະທັດຮັດ, ສົມເຫດສົມຜົນ ແລະ ເຄື່ອນໄຫວໄດ້ໃນລະດັບອັນແນ່ນອນ, ປັບປຸງຂອດປະສານງານພາຍໃນ ລະຫວ່າງ ບັນດາພະແນກໃນຫ້ອງການ ຫຼື ຫ້ອງການກັບບັນດາກົມຕ່າງໆທັງພາຍໃນ ແລະ ນອກຫ້ອງການໃຫ້ມີຄວາມຄ່ອງຕົວຊັດເຈນ, ກົມກຽວກັນ ແລະ ຖືກຕ້ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກໍານົດໄວ້. ບຸກຄະລາກອນມີຄວາມຮູ້, ມີຄວາມສາມາດ, ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ມີຄຸນສົມບັດ, ມີຈັນຍາບັນ, ຈັນຍາທໍາ ແລະ ມີຄວາມໂປ່ງໃສໃນການບໍລິການຮັບໃຊ້. ດ້ວຍເຫດນັ້ນ, ການປັບປຸງວຽກງານຫ້ອງການທາງດ້ານກົງຈັກ ແລະ ບຸກຄະລາກອນໃຫ້ມີຄວາມເຂັ້ມແຂງ ແມ່ນຄວາມຈໍາເປັນພາວະວິໄສ, ແມ່ນຂະບວນວິວັດທີ່ຕ້ອງເປັນໄປຕາມຂັ້ນຕອນ, ບາດກ້າວຢ່າງຕໍ່ເນື່ອງ ໂດຍສອດຄ່ອງກັບຈຸດພິເສດ, ລະດັບຄວາມສາມາດ, ຄວາມພ້ອມ ຂອງພະນັກງານລັດຖະກອນ, ການຈັດຕັ້ງ ຂອງຫ້ອງການ ຈຶ່ງຈະສາມາດປະຕິບັດໄດ້ຕາມທິດທາງທີ່ວ່າ ກະທັດຮັດສົມເຫດ-ສົມຜົນ ແລະ ມີປະສິດທິພາບ ແກ້ໄຂສະພາບຊໍ້າຊ້ອນດ້ານພາລະບົດບາດ ແລະ ເຮັດໃຫ້ສາຍໃຍການຈັດຕັ້ງມີການກໍານົດພາລະບົດບາດທີ່ຈະແຈ້ງ ແລະ ຮັດກຸມເຮັດໃຫ້ຂະໜາດຂອງກົງຈັກບໍ່ໃຫຍ່ໂຕ, ອີງປະກອບສາຍງານກະທັດຮັດ ແຕ່ເປັນລະບົບໂລ່ງລ່ຽນ ແລະ ກ້າວສູ່ການເຊື່ອມ ລະຫວ່າງ ຂອດຕ່າງໆ ດ້ວຍອຸປະກອນທັນສະໄໝ ຄຽງຄູ່ກັບການເຮັດໃຫ້ຖັນແຖວລັດຖະກອນ ມີຈໍານວນໜ້ອຍລົງ ແຕ່ຄຸນນະພາບເພີ່ມຂຶ້ນ, ໃຊ້ຈ່າຍຢ່າງປະຢັດ, ຂັບເຄື່ອນວຽກງານຕາມກົດໝາຍຢ່າງມີປະສິດທິພາບ; ປັບປຸງກົນໄກຄຸ້ມຄອງໃຫ້ມີຄວາມເປັນລະບົບເອກະພາບ ແລະ ເຂັ້ມແຂງ ຄຽງຄູ່ກັບຮັບປະກັນແບບແຜນ.

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແມ່ນອົງການວິຊາການ ທີ່ຂຶ້ນກັບຄະນະບໍລິຫານງານສູນກາງພັກ ແລະ ລັດຖະບານ; ຢູ່ໃຕ້ການຊີ້ນໍາ-ນໍາພາໂດຍກົງ ຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ; ມີຖານະທຽບເທົ່າກັບບັນດາຄະນະຕ່າງໆຂອງພັກຂັ້ນສູນກາງ ແລະ ກະຊວງ-ອົງການຕ່າງໆ ຂອງລັດຖະບານ ເຮັດໜ້າທີ່ໃນການຄົ້ນຄວ້າທິດສະດີມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ, ມູນເຊື້ອ ແລະ ປະຫວັດສາດຂອງພັກ, ຂອງຊາດ, ແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ວິທະຍາສາດການເມືອງ-ການປົກຄອງ, ວິທະຍາສາດການນໍາພາ-ຄຸ້ມຄອງ, ຮັບໃຊ້ການຮຽນການສອນ, ສະໜອງຂໍ້ມູນດ້ານວິທະຍາສາດ ໃຫ້ແກ່ການວາງແນວທາງ, ນະໂຍບາຍຂອງພັກ ແລະ ລັດ, ການບໍາລຸງພະນັກງານນໍາພາ-ຄຸ້ມຄອງຂັ້ນຍຸດທະສາດ ແລະ ການນໍາຂັ້ນສູງ, ພະນັກງານນໍາພາ-ຄຸ້ມຄອງ; ຍົກລະດັບທິດສະດີການເມືອງຂັ້ນກາງ, ຂັ້ນສູງ; ກໍ່ສ້າງພະນັກງານຄົ້ນຄວ້າ

ວິທະຍາສາດທິດສະດີການເມືອງ-ການປົກຄອງ.

ເພື່ອປະຕິບັດພາລະບົດບາດ ແລະ ເຮັດລ້ອນໜ້າທີ່ພັກ-ລັດຖະບານມອບໝາຍໃຫ້ບັນລຸຜົນສຳເລັດ ຈຶ່ງມີຄວາມຈຳເປັນຕ້ອງມີອົງການເສນາທິການຊ່ວຍທີ່ມີຄວາມເຂັ້ມແຂງ ແລະ ໜັກແໜ້ນ, ໃນການຊ່ວຍ ຄະນະພັກ, ຄະນະອຳນວຍການ ໂດຍສະເພາະແມ່ນຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແມ່ນການຈັດຕັ້ງໜຶ່ງໃນໂຄງປະກອບການຈັດຕັ້ງ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຢູ່ພາຍໃຕ້ການຊີ້ນຳ-ນຳພາໂດຍກົງ, ຮອບດ້ານ ຂອງຄະນະບໍລິຫານງານພັກ, ຄະນະອຳນວຍການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ມີຖານະທຽບເທົ່າບັນດາກົມ, ບັນດາຄະນະ ແລະ ສູນ ທີ່ຂຶ້ນກັບສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເປັນເສນາທິການ ແລະ ມີຄວາມຮັບຜິດຊອບຕໍ່ຄະນະບໍລິຫານງານພັກ, ຄະນະອຳນວຍການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໃນການຊ່ວຍວຽກໃຫ້ແກ່ຄະນະພັກ, ຄະນະອຳນວຍການສະຖາບັນທີ່ຕິດພັນ ແລະ ປົ່ນອ້ອມຢູ່ທຸກໆການເຄື່ອນໄຫວຊີ້ນຳ-ນຳພາ ຂອງອົງຄະນະພັກສະຖາບັນ, ຕິດພັນກັບຜົນສຳເລັດ ຂອງການຈັດຕັ້ງປະຕິບັດທຸກໆວຽກງານລວມ ຂອງສະຖາບັນ, ຕິດພັນກັບລະບອບ, ລະບຽບ, ນະໂຍບາຍລວມ ຂອງພັກ ແລະ ລັດ; ເປັນເສນາທິການໃນການຄົ້ນຄວ້ານະໂຍບາຍທີ່ຕິດພັນກັບຜົນປະໂຫຍດໂດຍກົງໃນດ້ານວັດຖຸ ແລະ ຈິດໃຈ ຂອງພະນັກງານ-ລັດຖະກອນ ແລະ ນັກສຶກສາທຸກໆຄົນໃນທົ່ວສະຖາບັນ ແລະ ເປັນເສນາທິການ ດ້ານວຽກງານການຕ່າງປະເທດ ຂອງສະຖາບັນ ແລະ ຕິດຕໍ່ປະສານງານກັບພາຍນອກທີ່ມີສາຍກ່ຽວພັນກັບການປະຕິບັດໜ້າທີ່ການເມືອງ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ມີພະນັກງານທັງໝົດ 47 ຄົນ, ຍິງ 18 ຄົນ, ໃນນັ້ນ, ມີໜ້າປະຈຳການ 42 ຄົນ, ຍິງ 17 ຄົນ, ໄປຮຽນຕໍ່ຢູ່ພາຍໃນ 3 ຄົນ, ຍິງ 1 ຄົນ ແລະ ຢູ່ຕ່າງປະເທດ 2 ຄົນ, ຍິງ 1 ຄົນ. ໄລຍະປີຜ່ານມາໄດ້ມີການສັບຊ້ອນ, ຍົກຍ້າຍ, ແຕ່ງຕັ້ງຕຳແໜ່ງບໍລິຫານຄື: ປີ 2019 ໄດ້ແຕ່ງຕັ້ງຂັ້ນພະແນກ 3 ທ່ານ ແລະ ຍົກຍ້າຍຂັ້ນກົມ 2 ທ່ານ, ຍິງ 1 ທ່ານ; ປີ 2020 ໄດ້ແຕ່ງຕັ້ງຂັ້ນພະແນກ 3 ທ່ານ, ຍົກຍ້າຍຂັ້ນພະແນກ 1 ທ່ານ ແລະ ວິຊາການ 2 ທ່ານ, ຍິງ 1 ທ່ານ; ປີ 2021 ໄດ້ແຕ່ງຕັ້ງຂັ້ນພະແນກ 2 ທ່ານ ແລະ ຍົກຍ້າຍຂັ້ນພະແນກ 3 ທ່ານ; ປີ 2022 ໄດ້ແຕ່ງຕັ້ງຮອງຫົວໜ້າ ສມປຊ 1 ທ່ານ, ຂັ້ນກົມ 1 ທ່ານ, ຂັ້ນພະແນກ 2 ທ່ານ, ຍົກຍ້າຍຂັ້ນພະແນກ 1 ທ່ານ; ປີ 2023 ໄດ້ແຕ່ງຕັ້ງຂັ້ນກົມ 1 ທ່ານ, ຂັ້ນພະແນກ 6 ທ່ານ ແລະ ຍົກຍ້າຍຂັ້ນກົມ 2 ທ່ານ, ຍິງ 1 ທ່ານ.

ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການນຳພາ-ຊີ້ນຳການຈັດຕັ້ງປະຕິບັດແຜນການເຄື່ອນໄຫວຂອງຕົນໃນທ່າມກາງສະພາບການທັງພາກພື້ນສາກົນມີການຜັນແປ ແລະ ຄາດການໄດ້ຍາກ, ມີການແຜ່ລະບາດຂອງພະຍາດໂຄວິດ-19 ສົ່ງຜົນກະທົບທາງດ້ານເສດຖະກິດ ແລະ ງົບປະມານ, ອັດຕາເງິນເຟີ້ສູງ, ລາຄານ້ຳມັນ ແລະ ລາຄາສິນຄ້າຕ່າງໆເພີ່ມຂຶ້ນສູງຢ່າງໄວວາຈົນມາຮອດປະຈຸບັນ ແຕ່ເຖິງຢ່າງໃດກໍ່ຕາມ, ຫ້ອງການ ສມປຊ ກໍ່ຍັງໄດ້ເອົາໃຈໃສ່ຕັ້ງໜ້າປະຕິບັດຕາມແຜນການວາງໄວ້ຢ່າງມີຜົນສຳເລັດໃນແຕ່ລະດ້ານດັ່ງລຸ່ມນີ້:

ວຽກງານບໍລິຫານ: ເປັນເສນາທິການໃຫ້ແກ່ຄະນະຫ້ອງການໃນການດຳເນີນວຽກງານບໍລິຫານບໍລິການຄື: ຄຸ້ມຄອງນ້ຳມັນເຊື້ອໄຟ, ບັດໂທລະສັບ, ຄຸ້ມຄອງ ແລະ ບູລະນະຮັກສາພາຫະນະ, ສ້ອມແປງອາຄານສຳນັກງານສິ່ງປຸກສ້າງ, ວັດຖຸອຸປະກອນປະເພດຕ່າງໆ, ລະບົບເຄື່ອງສຽງ, ລິບ, ແອເຢັນ, ລະບົບໄຟຟ້າ, ນ້ຳປະປາ, ສະຖານີດູດນ້ຳ ແລະ ລະບົບບຳບັດນ້ຳເສຍ, ຄຸ້ມຄອງເຄື່ອງໃນສາງ, ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ, ຄຸ້ມຄອງການນຳໃຊ້ຫໍພັກນັກສຶກສາ, ຫ້ອງຮຽນ, ຫ້ອງການ, ຄຸ້ມຄອງເອກະສານຂາເຂົ້າ-ຂາອອກ ແລະ ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຂັ້ນເທິງ.

ພະແນກແຜນການ-ການເງິນ: ຈັດຕັ້ງຜັນຂະຫຍາຍກົດໝາຍງົບປະມານແຫ່ງລັດ ແລະ ລະບຽບການຕ່າງໆກ່ຽວກັບງົບປະມານແຫ່ງລັດ, ສ້າງແຜນງົບປະມານແຫ່ງລັດປະຈຳປີ, ຈັດສັນຕົວເລກງົບປະມານ

ໃຫ້ບັນດາກົມ, ຫ້ອງການ, ຄະນະຕ່າງໆ, ສູນຄົ້ນຄວ້າແນວຄິດ ໄກສອນ ພົມວິຫານ ແລະ ສູນຂໍ້ມູນຂ່າວສານ, ຄຸ້ມຄອງການນຳໃຊ້ງົບປະມານແຫ່ງລັດ, ໃຫ້ຖືກຕ້ອງຕາມກົດໝາຍງົບປະມານ, ກົດໝາຍການລົງທຶນ ແລະ ລະບຽບຫຼັກການ-ການເງິນວາງອອກຢ່າງເຂັ້ມງວດ, ສະຫຼຸບຕີລາຄາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ, ປະຈຳເດືອນ, ງວດ, 6 ເດືອນ ແລະ ປະຈຳປີສົ່ງໃຫ້ຂັ້ນເທິງ ຂອງຕົນ, ສົ່ງໃຫ້ກະຊວງການເງິນ ແລະ ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ຂອງຂັ້ນເທິງ.

ວຽກງານພົວພັນຕ່າງປະເທດ: ສ້າງແຜນຍຸດທະສາດການພົວພັນຮ່ວມມືກັບຕ່າງປະເທດໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ, ຄົ້ນຄວ້າ, ກະກຽມບົດບັນທຶກ ຫຼື ສັນຍາການຮ່ວມມື, ເຂົ້າຮ່ວມການເຈລະຈາກັບຕ່າງປະເທດ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການພົວພັນຮ່ວມມື, ການຈັດຕັ້ງປະຕິບັດໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ, ຄົ້ນຄວ້າ ແລະ ດຳເນີນການວຽກງານພິທີການ ເຊັ່ນ: ຮັບຕ້ອນ ແລະ ເຮັດວຽກຮ່ວມກັບຄະນະຜູ້ແທນຕ່າງປະເທດທີ່ມາເຮັດວຽກ ແລະ ຢ້ຽມຢາມ, ແຂກຕ່າງປະເທດຂອງຄະນະນຳສະຖາບັນ, ພົວພັນເອກະສານທາງການ, ສົ່ງຄະນະຜູ້ແທນຂອງສະຖາບັນໄປເຮັດວຽກ ແລະ ຢ້ຽມຢາມຕ່າງປະເທດ, ສະຫຼຸບການຈັດຕັ້ງປະຕິບັດແຜນການປະຈຳເດືອນ, ງວດ, 6 ເດືອນ, ປະຈຳປີ ແລະ ແຜນການ 5 ປີ ຂອງວຽກງານພົວພັນຕ່າງປະເທດ ລາຍງານໃຫ້ຂັ້ນເທິງເປັນປົກກະຕິ, ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ຂອງຂັ້ນເທິງ.

ພະແນກຄຸ້ມຄອງຊັບສິນຂອງລັດ ແລະ ໄອທີ: ຈັດຕັ້ງປະຕິບັດ ວ່າດ້ວຍກົດໝາຍຄຸ້ມຄອງຊັບສິນ ຂອງລັດ ແລະ ຊຸກຍູ້ການປະຕິບັດລະບຽບກົດໝາຍ ຂອງພາກສ່ວນຕ່າງໆ, ຄຸ້ມຄອງຈັດສັນທີ່ດິນ ແລະ ເຮືອນ ຂອງລັດ, ລົງກວດກາຕົວຈິງວຽກງານກໍ່ສ້າງ, ສ້ອມແປງອາຄານສຳນັກງານຕ່າງໆ ແລະ ວັດຖຸອຸປະກອນ, ຕິດຕາມ, ກວດກາການນຳໃຊ້ອາຄານສຳນັກງານ ແລະ ສິ່ງປຸກສ້າງທັງໝົດ, ຄຸ້ມຄອງການຂຶ້ນບັນຊີພາຫະນະ ແລະ ອຸປະກອນຮັບໃຊ້ຕ່າງໆ, ເຂົ້າຮ່ວມ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຕິດຕາມ, ກວດກາການຈັດຊື້, ກໍ່ສ້າງ-ສ້ອມແປງຕາມລະບຽບກົດໝາຍ ແລະ ສະຫຼຸບຕີລາຄາສະພາບການເຄື່ອນໄຫວວຽກງານ ຂອງພະແນກລາຍງານໃຫ້ຂັ້ນເທິງເປັນປົກກະຕິ, ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ຂອງຂັ້ນເທິງ.

ວຽກງານພະແນກຄົ້ນຄວ້າສັງລວມ: ຕິດຕາມ, ເກັບກຳສະພາບການເຄື່ອນໄຫວການປະຕິບັດໜ້າທີ່ ຂອງບັນດາກົງຈັກການຈັດຕັ້ງ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເພື່ອຕອບສະໜອງຂໍ້ມູນຂ່າວສານທີ່ຈຳເປັນໃຫ້ແກ່ການນຳພາ-ຊີ້ນຳ ແລະ ການວາງທິດທາງແຜນການ ຂອງຄະນະນຳສະຖາບັນໃນແຕ່ລະໄລຍະໃຫ້ແທດເໝາະກັບສະພາວະຄວາມເປັນຈິງ ຂອງໜ້າທີ່ການເມືອງ, ຄົ້ນຄວ້າສ້າງແຜນຍຸດທະສາດ, ແຜນການໄລຍະຍາວ, ໄລຍະກາງ ແລະ ໂຄງການການພັດທະນາສະຖາບັນໃນແຕ່ລະໄລຍະ, ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ, ດຳເນີນການສະຫຼຸບຕີລາຄາ, ຖອດຖອນບົດຮຽນ, ຈັດຕັ້ງການສ່ອງແສງລາຍງານຕາມລະບອບ ແລະ ລະບຽບການ, ປະສານສົມທົບກັບພາກສ່ວນກ່ຽວຂ້ອງກ່ຽວກັບເອກະສານ, ຕິດຕາມເອກະສານ ທີ່ນຳເຂົ້າຂໍຄຳຄິດຄຳເຫັນ ແລະລາຍເຊັນ ຂອງຄະນະນຳສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ ຂອງຂັ້ນເທິງ.

ເຖິງຢ່າງໃດກໍ່ຕາມ ຜ່ານການຕິດຕາມກວດກາ, ຕີລາຄາ ການປະຕິບັດສິດ ແລະ ໜ້າທີ່ຂອງຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໃນໄລຍະທີ່ຜ່ານມາ ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງທີ່ຍັງບໍ່ທັນໄດ້ຮັບການແກ້ໄຂເຊັ່ນ:

ໜຶ່ງ: ເຖິງວ່າໄດ້ມີການຈັດຕັ້ງການເຜີຍແຜ່, ເຊື່ອມຊຶມເອກະສານ, ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດຕ່າງໆ ແລ້ວກໍ່ຕາມ; ແຕ່ພະນັກງານຈຳນວນໜຶ່ງຍັງບໍ່ທັນເປັນເຈົ້າການຄົ້ນຄວ້າຢ່າງເລິກເຊິ່ງ ແລະ ບໍ່ສາມາດນຳມາຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນເອງ.

ສອງ: ຍ້ອນການຕິດຕາມ, ກວດກາ, ຊຸກຍູ້ວຽກ

ງານ ແຕ່ລະດ້ານບໍ່ທັນເປັນລະບົບຕໍ່ເນື່ອງ, ການຄົ້ນຄວ້າ ແລະ ຊອກເຫັນຈຸດດີເພື່ອສືບຕໍ່ຜັນຂະຫຍາຍ, ຊອກເຫັນຈຸດອ່ອນ, ຂໍ້ຄົງຄ້າງທີ່ເກີດຂຶ້ນແຕ່ລະໄລຍະເພື່ອປັບປຸງປ່ຽນແປງແກ້ໄຂນັ້ນຍັງບໍ່ທັນໄດ້ດີ.

ສາມ: ຍ້ອນພະນັກງານຈໍານວນໜຶ່ງ ຍັງມີແນວຄິດຄອງເດີມ, ບໍ່ກ້າຫັນປ່ຽນແບບແຜນວິທີເຮັດວຽກຂອງຕົນ, ບໍ່ຮູ້ຖອດຖອນບົດຮຽນ, ປະສົບການ ເພື່ອປັບປຸງພັດທະນາການເຮັດວຽກຂອງຕົນໃຫ້ດີຂຶ້ນ.

ສີ່: ຍ້ອນຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ລາຄານໍ້າມັນດິດຕົວສູງຂຶ້ນ, ລາຄາສິນຄ້າຕ່າງໆສູງຂຶ້ນ ອັດຕາເງິນເຟີ້, ງົບປະມານທີ່ຈໍາກັດແລ້ວຈໍາກັດອີກ ເຮັດໃຫ້ກະທົບໃສ່ຊີວິດການເປັນຢູ່ຂອງພະນັກງານ ແລະ ການທົບໃສ່ວຽກງານຕ່າງໆ ເຮັດໃຫ້ບໍ່ສາມາດຕອບສະໜອງວຽກງານໄດ້ຢ່າງພຽງພໍ.

ເພື່ອເສີມຂະຫຍາຍຜົນສໍາເລັດ ແລະ ແກ້ໄຂບັນຫາທີ່ຍັງຄົງຄ້າງ ຂອງຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ໃຫ້ມີປະສິດທິພາບສູງ ຕາມທັດສະນະຂອງຜູ້ຂຽນ ຄວນເອົາໃຈໃສ່ບາງບັນຫາດັ່ງນີ້:

ໜຶ່ງ, ຄະນະຫ້ອງການ, ຄະນະພະແນກ ແລະ ພະນັກງານທົ່ວຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າ, ເຊື່ອມຊຶມກໍາແໜ້ນເອກະສານ, ແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ ຢ່າງເລິກເຊິ່ງ ແລ້ວສາມາດນໍາໄປຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.

ສອງ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານທິດສະດີ, ວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດໃຫ້ພະນັກງານ-ລັດຖະກອນຂອງຕົນຢ່າງເປັນລະບົບ, ຄົບຊຸດ ແລະ ຕໍ່ເນື່ອງ ເຮັດໃຫ້ພະນັກງານ-ລັດຖະກອນມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທໍາປະຕິວັດ, ມີຈັນຍາບັນ, ຈັນຍາທໍາ ແລະ ຮູ້ນໍາໃຊ້ເຄື່ອງມືເຕັກໂນໂລຊີທີ່ທັນສະໄໝເຂົ້າໃນວຽກງານຂອງຕົນ.

ສາມ, ສ້າງລະບົບເອກະສານ ທີ່ເປັນການແນະນໍາກ່ຽວກັບວຽກງານຫ້ອງການ ເພື່ອແກ້ໄຂບັນຫາທີ່ເຫັນວ່າເປັນລັກສະນະຊັກຊ້າ, ບໍ່ຖືກຕາມຂັ້ນຕອນ, ປັບປຸງຂອດການປະສານງານ, ກົນໄກການສະໜອງຂໍ້ມູນຂ່າວສານຂອງວຽກງານຫ້ອງການ ລະຫວ່າງ ບັນດາກົມ, ຄະນະ ແລະສູນ ໃຫ້ມີຄວາມເປັນເອກະພາບທົ່ວສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ສີ່, ຄຸ້ມຄອງ, ຕິດຕາມ, ຊຸກຍູ້ ແລະ ກວດກາການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ໂດຍສະເພາະພະນັກງານສະມາຊິກພັກທີ່ເຮັດວຽກຫ້ອງການທຸກຄົນຕ້ອງເປັນຜູ້ບໍລິຫານຮັບໃຊ້ທີ່ມີຄວາມຈົງຮັກພັກດີຕໍ່ອຸດົມການຂອງພັກ, ມີຄວາມເສຍສະຫຼະ, ຕື່ນຕົວຫ້າວຫັນຕໍ່ໜ້າທີ່ວຽກງານ. ສະເໜີຂັ້ນເທິງຍ້ອງຍໍ-ຊົມເຊີຍ, ຕໍາແໜ່ງບໍລິຫານຢ່າງເໝາະສົມ.

ສັງລວມແລ້ວ, ການປັບປຸງວຽກງານຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແມ່ນການສ້າງຄວາມເຂັ້ມແຂງໃນຫ້ອງການ ຕິດພັນກັບການພັດທະນາລະບົບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພັກ-ລັດ ເພື່ອຮັບປະກັນການບໍລິການຮັບໃຊ້ທຸກພາກສ່ວນ ແລະ ປະຕິບັດໄດ້ຕາມແຜນການ, ແຜນຍຸດທະສາດ, ວິໄສທັດທີ່ຂັ້ນເທິງວາງໄວ້. ພ້ອມນັ້ນ, ເອົາໃຈໃສ່ຍົກສູງຄຸນນະພາບຂອງພະນັກງານທີ່ເຮັດວຽກຫ້ອງການໃຫ້ຮັບປະກັນດ້ານວິຊາສະເພາະ, ມີຄວາມຊໍານິຊໍານານບົນພື້ນຖານການບໍາລຸງ ແລະ ກໍ່ສ້າງ, ຖືເອົາການພັດທະນາວຽກງານຫ້ອງການເປັນວຽກງານໜຶ່ງທີ່ເປັນໃຈກາງກວ່າວຽກງານອື່ນ ເພື່ອຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດໃຫ້ເປັນແຜນງານ, ໂຄງການພ້ອມທັງມີການນໍາພາ-ຊີ້ນໍາຈັດຕັ້ງປະຕິບັດ, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນວຽກງານຫ້ອງການເປັນປະຈໍາ ເພື່ອເຮັດໃຫ້ຫ້ອງການສະຖາບັນການ ເມືອງ ແລະ ການປົກຄອງແຫ່ງຊາດ ໄດ້ຮັບການພັດທະນາ ແລະ ກ້າວໜ້າຂຶ້ນ ສາມາດເຮັດລ້ອນໜ້າທີ່ການເມືອງຂອງຕົນ...ຯ

ບາງບັນຫາກ່ຽວກັບວຽກງານກວດສອບ ແລະ ມາດຕະການໃນການຍົກສູງຄຸນນະພາບການກວດສອບ

ໂດຍ: ວຽງທະວິສອນ ເທບພະຈັນ ກຳມະການສຳຮອງສູນກາງພັກ,
ປະທານອົງການກວດສອບແຫ່ງລັດ

ເປັນທີ່ຮັບຮູ້ນຳກັນໂດຍທົ່ວໄປແລ້ວວ່າ ວຽກງານກວດສອບແຫ່ງລັດ ແມ່ນຂະແໜງການໜຶ່ງທີ່ມີບົດບາດສຳຄັນຕໍ່ການຄົງຕົວ ແລະ ຂະຫຍາຍຕົວຂອງພັກ, ຂອງຊາດ ເວົ້າລວມ, ເວົ້າສະເພາະ ຕໍ່ການພັດທະນາເສດຖະກິດ-ສັງຄົມ ໂດຍອີງໃສ່ພາລະບົດບາດ, ໜ້າທີ່, ຂອບເຂດສິດ ໃນການດຳເນີນການກວດສອບ, ການຄຸ້ມຄອງ, ການນຳໃຊ້ງົບປະມານ, ການເງິນ ແລະ ຊັບສິນຂອງລັດ, ອົງການຈັດຕັ້ງການເມືອງ-ສັງຄົມ, ກົມກອງທີ່ຂຶ້ນກັບກຳລັງປະກອບອາວຸດ, ທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ວິສາຫະກິດທີ່ລັດລົງທຶນ; ໂຄງການລົງທຶນ ແລະ ກິດຈະການເຄື່ອນໄຫວຕ່າງໆ ທີ່ນຳໃຊ້ງົບປະມານ ແລະ ຊັບສິນຂອງລັດໃຫ້ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນສູງ.

ບົນພື້ນຖານການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ກໍ່ຄືການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ່ II ຂອງອົງຄະນະພັກອົງການກວດສອບແຫ່ງລັດ ທ່າມກາງສະພາບເສດຖະກິດຂອງພາກພື້ນ ແລະ ສາກົນ ມີການຜັນແປຢ່າງສັບສົນ ເຊິ່ງໃນນັ້ນ, ກໍລວມທັງບັນຫາສິ່ງທ້າທາຍໃນການດຳເນີນການກວດສອບ ແລະ ມາດຕະການໃນການຍົກສູງຄຸນນະພາບການກວດສອບ ແລະ ວຽກງານອື່ນໆ ທີ່ປິ່ນອ້ອມ ເຊິ່ງບັນຫາທີ່ກ່າວມານັ້ນໄດ້ສົ່ງຜົນກະທົບໂດຍກົງຕໍ່ກັບການພັດທະນາເສດຖະກິດ-ສັງຄົມ; ບັນຫາການເງິນ-ເງິນຕາຂອງປະເທດເຮົາປະສົບກັບຄວາມຫຍຸ້ງຍາກ ໂດຍສະເພາະການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດບັນດາວຽກງານຈຸດສຸມຂອງບັນດາການຈັດຕັ້ງຂອງລັດ, ສະພາແຫ່ງຊາດ ແລະ ລັດຖະບານ ເວົ້າລວມ, ເວົ້າສະເພາະ ອົງການກວດສອບແຫ່ງລັດ. ພາຍໃຕ້ການນຳພາ ແລະ ຊີ້ນຳຢ່າງໃກ້ຊິດຂອງພັກ, ສະພາແຫ່ງຊາດ ແລະ ລັດຖະບານ; ອົງການກວດສອບແຫ່ງລັດ ກໍ່ຄື ອົງການກວດສອບປະຈຳພາກ ໄດ້ເອົາໃຈໃສ່ປະຕິບັດວຽກງານວິຊາສະເພາະຂອງຕົນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການກວດສອບແຫ່ງລັດ ແລະ ມະຕິກອງປະຊຸມສະພາແຫ່ງຊາດຢ່າງເຂັ້ມງວດ ພ້ອມກັນສູ້ຊົນຍາດໄດ້ຜົນງານ, ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານກວດສອບໃນໄລຍະຜ່ານມາ ພ້ອມທັງກຳນົດທິດທາງໃນການເຄື່ອນໄຫວວຽກງານກວດສອບ ແລະ ມາດຕະການໃນການຍົກສູງຄຸນນະພາບການກວດສອບໃນຕໍ່ໜ້າຈຳນວນໜຶ່ງ ເພື່ອແນໃສ່ຄຸ້ມຄອງກິດຈະການເຄື່ອນໄຫວຕ່າງໆ ທີ່ນຳໃຊ້ງົບປະມານ ແລະ ຊັບສິນຂອງລັດ ໃຫ້ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນສູງ.

ການຈັດຕັ້ງປະຕິບັດວຽກງານກວດສອບ ຂອງອົງການກວດສອບແຫ່ງລັດ ແມ່ນອີງໃສ່ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ສະບັບປັບປຸງ ທີ່ຖືກ

ຮັບຮອງເອົາໂດຍສະພາແຫ່ງຊາດໃນເດືອນ ທັນວາ ປີ 2022 ຜ່ານມາ ແລະ ປະກາດໃຊ້ຕາມລັດຖະດໍາລັດຂອງປະທານປະເທດ ສະບັບເລກທີ 025/ປປທ, ລົງວັນທີ 10 ກຸມພາ 2023; ນິຕິກໍາລຸ່ມກົດໝາຍ, ປຶ້ມຄູ່ມືແນະນໍາການປະເມີນຄະນະກວດສອບ ແລະ ບົດບັນທຶກການປະສານງານຮ່ວມກັບພາກສ່ວນຕ່າງໆ ເຊັ່ນ: ໜຶ່ງ, ອົງການກວດສອບປະຈໍາພາກເໜືອ ກັບຄະນະກໍາມາທິການເສດຖະກິດແຜນການ ແລະ ການເງິນ ສະພາປະຊາຊົນຂອງ 8 ແຂວງພາກເໜືອ; ສອງ, ອົງການກວດສອບປະຈໍາພາກກາງ ກັບຄະນະກໍາມາທິການເສດຖະກິດແຜນການ ແລະ ການເງິນ ສະພາປະຊາຊົນ ຂອງ 5 ແຂວງພາກກາງ; ສາມ, ອົງການກວດສອບປະຈໍາພາກໃຕ້ ກັບຄະນະກໍາມາທິການເສດຖະກິດແຜນການ ແລະ ການເງິນ ສະພາປະຊາຊົນ ຂອງ 2 ແຂວງພາກໃຕ້; ສີ່, ອົງການກວດສອບແຫ່ງລັດ ກັບກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ອົງການກວດກາແຫ່ງລັດ, ອົງການໄອຍະການປະຊາຊົນສູງສຸດ ແລະ ທະນາຄານແຫ່ງ ສປປ ລາວ ເພື່ອເປັນບ່ອນອີງໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານກວດສອບ.

ພຶດຕິກໍາໄດ້ຍົກໃຫ້ເຫັນວ່າ ປີຜ່ານມາ ອົງຄະນະພັກອົງການກວດສອບແຫ່ງລັດ ຕະຫຼອດເຖິງພະນັກງານ, ສະມາຊິກພັກ ໄດ້ປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບການມອບໝາຍ ດ້ວຍຄວາມຮັບຜິດຊອບສູງ ໂດຍຖືເອົາການກວດສອບ ແລະ ມາດຕະການໃນການຍົກສູງຄຸນນະພາບການກວດສອບ ເປັນວຽກງານສໍາຄັນ; ປະຕິບັດຕາມພາລະບົດບາດ, ໜ້າທີ່, ຂອບເຂດສິດ ໃນການດໍາເນີນການກວດສອບ ໄດ້ດໍາເນີນການກວດສອບເອກະສານລາຍງານການເງິນ, ຄວາມສອດຄ່ອງທາງດ້ານກົດໝາຍ ແລະ ຜົນການຈັດຕັ້ງປະຕິບັດ ແຕ່ລະເປົ້າໝາຍສໍາເລັດຜົນຕາມແຜນການທີ່ກໍານົດໄວ້, ແຜນການ ຈໍານວນ 108 ເປົ້າໝາຍ, ປະຕິບັດໄດ້ ຈໍານວນ 101 ເປົ້າໝາຍ ໃນນັ້ນ: ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ຈໍານວນ 33 ເປົ້າໝາຍ, ໂຄງການລົງທຶນຂອງລັດ 23 ເປົ້າໝາຍ, ໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ 19 ເປົ້າໝາຍ, ວິສາຫະກິດລັດ 20 ເປົ້າໝາຍ ແລະ ທະນາຄານທຸລະກິດລັດລົງທຶນ 06 ເປົ້າໝາຍ; ພ້ອມທັງແຈ້ງຜົນການກວດສອບ ຈໍານວນ 94 ເປົ້າໝາຍ, ຍັງຄ້າງ 07 ເປົ້າໝາຍ. ໃນນີ້, ສາມາດກວດສອບເຫັນປະກົດການຫຍໍ້ທໍ້ໃນການຄຸ້ມຄອງ, ນໍາໃຊ້ ງົບປະມານ ແລະ ຊັບສິນຂອງລັດ ຈໍານວນບໍ່ໜ້ອຍເປັນຕົ້ນ: ການເກັບລາຍຮັບມາໄດ້ແຕ່ບໍ່ມອບເຂົ້າງົບປະມານແຫ່ງລັດ, ການໃຊ້ຈ່າຍງົບປະມານຟູມເຟືອຍ, ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ມີການສ້າງນິຕິກໍາກ່ຽວກັບການຄຸ້ມຄອງລາຍຮັບ, ລາຍຈ່າຍ ທີ່ບໍ່ສອດຄ່ອງກັບກົດໝາຍ; ການສ້າງໂຄງການນອກແຜນ ການປ່ອຍສິນເຊື່ອ ຂອງທະນາຄານລັດ ແລະ ລັດຮ່ວມທຶນບໍ່ສອດຄ່ອງຕາມລະບຽບການ; ວິສາຫະກິດລັດ ແລະ ລັດຮ່ວມທຶນຈໍານວນໜຶ່ງໄດ້ສ້າງລະບຽບການນະໂຍບາຍພາຍໃນ ເຊິ່ງບໍ່ສອດຄ່ອງກັບກົດໝາຍ ແລະ ຜົນການດໍາເນີນທຸລະກິດ ແລະ ບັນຫາອື່ນໆທັງໝົດນັ້ນ, ມັນໄດ້ສົ່ງຜົນກະທົບຕໍ່ການຄຸ້ມຄອງງົບປະມານແຫ່ງລັດ, ການຄຸ້ມຄອງເສດຖະກິດ ແລະ ນະໂຍບາຍການເງິນ-ເງິນຕາ ຂອງປະເທດເຮົາ.

ຄຽງຄູ່ກັບການເຄື່ອນໄຫວວຽກງານຕົວຈິງນັ້ນ, ອົງການກວດສອບແຫ່ງລັດ ໄດ້ສ້າງບົດສະຫຼຸບລາຍງານການເຄື່ອນໄຫວວຽກງານປະຈໍາປີ ແລະ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ, ບໍລິສັດລັດລົງທຶນ ແລະ ຜົນການກວດສອບໂຄງການລົງທຶນຂອງລັດ ຕໍ່ປະທານປະເທດ, ນາຍົກລັດຖະມົນຕີ, ຄະນະປະຈໍາສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ, ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ. ນອກນັ້ນ, ຍັງໄດ້ສົ່ງບົດສະຫຼຸບຜົນການກວດສອບ ໃຫ້ອົງການຄຸ້ມຄອງເປົ້າໝາຍຖືກກວດສອບ ແລະ ເປົ້າໝາຍຖືກກວດສອບທັນຕາມກໍານົດເວລາ ແລະ ຜົນການກວດສອບ ໄດ້ປະກອບສ່ວນເຮັດໃຫ້ຫົວໜ່ວຍງົບປະມານ, ຫົວໜ່ວຍທຸ

ລະກິດລັດລົງທຶນ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ, ສະກັດກັ້ນປະກົດການຫຍໍ້ທໍ້ທາງດ້ານການເງິນ, ງົບປະມານແຫ່ງລັດ, ປົກປ້ອງຜົນປະໂຫຍດຂອງລັດລວມໝູ່, ປະຊາຊົນເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ມີຄວາມເຂັ້ມແຂງ, ໂປ່ງໃສ; ທັງເປັນການກະຕຸກຊຸກຍູ້ການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວ ແລະ ມີຄວາມໝັ້ນທ່ຽງ.

ບັນຫາການກວດສອບ ແລະ ມາດຕະການໃນການຍົກສູງຄຸນນະພາບການກວດສອບ ທີ່ຜູ້ຂຽນຕັ້ງຂຶ້ນນັ້ນ ແມ່ນວຽກງານສໍາຄັນ, ເປັນວຽກໃຈກາງໃນການປະຕິບັດວຽກງານກວດສອບ. ດ້ວຍບົດບາດ ແລະ ຄວາມສໍາຄັນດັ່ງກ່າວ ການປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຈຶ່ງເປັນບັນຫາສໍາຄັນ ໃນການເຄື່ອນໄຫວວຽກງານກວດສອບ ເນື່ອງຈາກວ່າ ມາດຕະການໃນການກວດສອບ ແລະ ການກວດສອບທີ່ມີຄຸນນະພາບ ແມ່ນບັນຫາວິທະຍາສາດທີ່ກ່ຽວພັນໂດຍກົງກັບການປັບປຸງກົງຈັກການຈັດຕັ້ງ ໃຫ້ກະທັດຮັດ, ມີປະສິດທິພາບ ໂດຍສະເພາະ ດ້ານບຸກຄະລາກອນທັງດ້ານຈໍານວນ ແລະ ຄຸນນະພາບ ກໍ່ຕ້ອງສອດຄ່ອງກັບແຜນກໍານົດຕໍາແໜ່ງງານ ແລະ ຕ້ອງເປັນຜູ້ທີ່ມີຄວາມຮູ້-ຄວາມສາມາດ, ມີຄຸນສົມບັດສົມທໍາປະຕິວັດ.

ປະຈຸບັນກົງຈັກການຈັດຕັ້ງຂອງອົງການກວດສອບແຫ່ງລັດ ທັງສູນກາງ ແລະ ອົງການກວດສອບປະຈໍາພາກ ໄດ້ຮັບການປັບປຸງຕາມມະຕິ ຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 85/ສພຊ, ລົງວັນທີ 8 ເມສາ 2022, ກົດໝາຍ ວ່າດ້ວຍການກວດສອບແຫ່ງລັດ (ສະບັບປັບປຸງ) ປີ 2022 ກໍ່ຄື ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດສອບແຫ່ງລັດ ເລກທີ 699/ອກສລ, ລົງວັນທີ 29 ກໍລະກົດ 2022 ໂຮມກົມຈາກ 11 ກົມທຽບເທົ່າ ມາເປັນ 10 ກົມທຽບເທົ່າ; ສ້າງຕັ້ງອົງການກວດສອບປະຈໍາພາກ ຕື່ມ 02 ແຫ່ງ (ອົງການກວດສອບປະຈໍາພາກເໜືອ 2 ຢູ່ແຂວງອຸດົມໄຊ ແລະ ອົງການກວດສອບປະຈໍາພາກກາງ 2 ຢູ່ແຟັກ, ຄະນະນໍາຂອງອົງການກວດສອບແຫ່ງລັດ, ອົງການກວດສອບປະຈໍາພາກ ຕ້ອງໄດ້ເປັນເຈົ້າການນໍາພາ-ຊີ້ນໍາຢ່າງໃກ້ຊິດ ແລະ ຕໍ່ເນື່ອງ ທັງໝົດນັ້ນ ເພື່ອແນ່ໃສ່ເຮັດໃຫ້ການຍົກສູງຄຸນນະພາບວຽກງານການກວດສອບ ແລະ ມາດຕະການໃນການກວດສອບ ໄດ້ຮັບການປັບປຸງໂດຍສະເພາະ ບັນຫາການຕິດຕາມ, ຊຸກຍູ້ ແລະ ກວດສອບຄືນ ການແກ້ໄຂຜົນການກວດສອບ ເພື່ອເຮັດໃຫ້ອົງການຄຸ້ມຄອງເປົ້າໝາຍຖືກກວດສອບ ແລະ ເປົ້າໝາຍຖືກກວດສອບ ເປັນເຈົ້າການຈັດຕັ້ງປະຕິບັດມາດຕະການແກ້ໄຂຜົນການກວດສອບ ຕາມມະຕິກອງປະຊຸມສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ.

ຜ່ານມາ ເຖິງວ່າອົງການກວດສອບແຫ່ງລັດໄດ້ມີຄວາມພະຍາຍາມສູງ ໃນການຄົ້ນຄວ້າ, ການປັບປຸງ, ການສ້າງນິຕິກໍາຕ່າງໆ ເພື່ອຮອງຮັບໃຫ້ແກ່ການກວດສອບ, ແຕ່ສັງເກດເຫັນວ່າ ນິຕິກໍາຫຼາຍອັນຍັງບໍ່ຮັດກຸມ ເຊິ່ງສະແດງອອກໃນການປະເມີນຄຸນນະພາບການກວດສອບ ແລະ ການສ້າງບົດລາຍງານຜົນການກວດສອບ, ການກວດສອບເຫັນຫຼາຍບັນຫາແຕ່ຂອດການແກ້ໄຂຜົນການກວດສອບ ຍັງເຮັດໄດ້ໜ້ອຍ, ຊັກຊ້າ ແລະ ບາງບັນຫາບໍ່ສາມາດແກ້ໄຂໄດ້ສາເຫດແມ່ນເປັນຍ້ອນຄຸນນະພາບຂອງວຽກງານກວດສອບບໍ ຫຼື ເປັນຍ້ອນພາກສ່ວນກ່ຽວຂ້ອງຖືເບົາການແກ້ໄຂຕາມຜົນການກວດສອບ?. ພຶດຕິກໍາໄດ້ຍົກໃຫ້ເຫັນແຈ້ງວ່າ ຜົນການກວດສອບ ແມ່ນເຫັນຫຼາຍບັນຫາ ທີ່ມີການລະເມີດວິໄນແຜນການ-ການເງິນ, ລະເມີດລະບຽບກົດໝາຍ ແລະ ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດບາງໂຄງການບໍ່ມີຄຸນນະພາບ ຫຼື ຄຸນນະພາບບໍ່ສູງ; ແຕ່ການແກ້ໄຂຜົນການກວດສອບຍັງບໍ່ທັນມີປະສິດທິພາບ ແລະ ມີປະສິດທິຜົນ; ການແກ້ໄຂຍັງເຮັດໄດ້ໜ້ອຍ, ຊັກຊ້າ, ແກ່ຍາວ ແລະ ບາງບັນຫາແກ້ໄຂບໍ່ໄດ້ ເຊິ່ງມີສາເຫດມາຈາກ 02 ປັດໃຈ

ຄື: (1) ປັດໄຈພາຍໃນ ແມ່ນຕິດພັນກັບຄຸນນະພາບຜົນການກວດສອບ ແລະ (2) ປັດໄຈພາຍນອກ ຕິດພັນກັບອົງການຄຸ້ມຄອງເປົ້າໝາຍ ແລະ ເປົ້າໝາຍຖືກກວດສອບ.

ພວກເຮົາມາຄົ້ນເລິກນໍາກັນວ່າ ສາເຫດທີ່ເກີດຈາກ **ປັດໄຈພາຍໃນ** ແມ່ນເກີດມາຈາກສາເຫດອັນໃດ?, ມັນມີສາຍກ່ຽວພັນກັບຄຸນນະພາບຜົນການກວດສອບແນວໃດ? ແລະ ບັນຫາທໍາອິດ ທີ່ພວກເຮົາຕ້ອງຍອມຮັບນໍາກັນວ່າ ຜົນການກວດສອບ ເຖິງວ່າຈະເຫັນຫຼາຍບັນຫາ ແຕ່ຂອດການແກ້ໄຂຜົນການກວດສອບ ຍັງເຮັດໄດ້ໜ້ອຍ, ຊັກຊ້າ ແລະ ບາງບັນຫາບໍ່ສາມາດແກ້ໄຂໄດ້; ຍ້ອນຄຸນນະພາບຜົນການກວດສອບຈໍານວນໜຶ່ງ ຍັງບໍ່ທັນສູງເທົ່າທີ່ຄວນ, ກວດເຫັນຫຼາຍບັນຫາກໍ່ຈິງ, ແຕ່ການຕີລາຄາສາເຫດບາງບັນຫາບໍ່ຖືກຕ້ອງກັບຄວາມເປັນຈິງ, ການຕີລາຄາບາງບັນຫາບໍ່ທັນຈະແຈ້ງ, ບາງບັນຫາບໍ່ຮູ້ສາເຫດ ຫຼື ບໍ່ໄດ້ຊອກຫາສາເຫດ ເຮັດໃຫ້ການໃຫ້ຄໍາແນະນໍາ ໃນການປັບປຸງ, ແກ້ໄຂບາງບັນຫາບໍ່ຖືກຕ້ອງ, ບາງບັນຫາໃຫ້ຄໍາແນະນໍາຖືກຕ້ອງຕາມລະບຽບກົດໝາຍ ແຕ່ໃຫ້ຄໍາແນະນໍາແບບລວມ ບໍ່ຈະແຈ້ງເຖິງວິທີການຈັດຕັ້ງປະຕິບັດ ຫຼື ແນະນໍາວິທີຈັດຕັ້ງປະຕິບັດບໍ່ແທດເໝາະກັບສະພາບຕົວຈິງ ເຊິ່ງເຮັດໃຫ້ຜູ້ຈະແກ້ໄຂບໍ່ເຂົ້າໃຈ, ບໍ່ຮູ້ວິທີການແກ້ໄຂ ຫຼື ແກ້ໄຂແຕ່ບໍ່ຖືກຕ້ອງຕາມລະບຽບຫຼັກການ ອັນນີ້ແມ່ນພົວພັນເຖິງຄຸນນະພາບຜົນການກວດສອບ.

ສ່ວນສາເຫດທີ່ເກີດຈາກ **ປັດໄຈພາຍນອກ** ໝາຍເຖິງ ບັນຫາທີ່ຕິດພັນກັບອົງການຄຸ້ມຄອງເປົ້າໝາຍ ແລະ ເປົ້າໝາຍຖືກກວດສອບ ພຶດຕິກໍາໄດ້ຍົກໃຫ້ພວກເຮົາເຫັນວ່າ: ຄວາມເປັນເຈົ້າການ ໃນການນໍາພາ-ຊີ້ນໍາແກ້ໄຂຜົນການກວດສອບ ຂອງອົງການຄຸ້ມຄອງເປົ້າໝາຍ ແລະ ເປົ້າໝາຍຖືກກວດສອບບາງຂະແໜງການ ຍັງບໍ່ທັນສູງ, ຍັງບໍ່ທັນຖືເປັນບັນຫາ ແລະ ຄວາມຮັບຜິດຊອບໂດຍກົງຂອງຕົນ, ຍັງຖືເບົາໃນການຊີ້ນໍາ ຕໍ່ການແກ້ໄຂຜົນການກວດສອບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ; ຄວາມເຂົ້າໃຈ ຂອງອົງການຄຸ້ມຄອງເປົ້າໝາຍ ແລະ ເປົ້າໝາຍຖືກກວດສອບ ກ່ຽວກັບຄວາມຮັບຜິດຊອບໃນການແກ້ໄຂຜົນການກວດສອບບາງຂະແໜງການຍັງບໍ່ເລິກເຊິ່ງ ຍັງເຂົ້າໃຈວ່າ ການແກ້ໄຂຜົນການກວດສອບແມ່ນໜ້າທີ່ຂອງອົງການກວດສອບແຫ່ງລັດ ແລະ ຄວາມເອົາໃຈໃສ່ ແລະ ເປັນເຈົ້າການໃນການແກ້ໄຂຜົນການກວດສອບຂອງເປົ້າໝາຍຖືກກວດສອບຈໍານວນໜຶ່ງ ຍັງບໍ່ທັນສູງ ແລະ ບາງບັນຫາທີ່ກວດສອບເຫັນມີຄວາມສະຫຼັບສັບຊ້ອນ, ເປັນບັນຫາເກົ່າທີ່ບໍ່ສາມາດທວງຫາວຫາຜູ້ຮັບຜິດຊອບແຕ່ລະຂັ້ນໄດ້; ບາງບັນຫາການຖືບັນຊີ ຍັງບໍ່ທັນຖືກຕ້ອງ ແລະ ຄົບຖ້ວນຕາມມາດຕະຖານການບັນຊີ ເຮັດໃຫ້ບໍ່ມີຂໍ້ມູນລະອຽດ ໃນການດໍາເນີນການແກ້ໄຂໃຫ້ສອດຄ່ອງຕາມລະບຽບກົດໝາຍ. ເວົ້າລວມແລ້ວ, ລະຫວ່າງ ປັດໃຈພາຍໃນ ກັບ ປັດໃຈພາຍນອກນີ້, ຍາມໃດກໍ່ມີການພົວພັນນໍາກັນຢ່າງຊະນິດແໜ້ນ ພວກເຮົາບໍ່ສາມາດໃຫ້ຄວາມສໍາຄັນ ຫຼື ປະຕິບັດດ້ານໃດດ້ານໜຶ່ງ ກົງກັນຂ້າມອົງການກວດສອບແຫ່ງລັດ ກໍຄືນັກກວດສອບພວກເຮົາ ຍິ່ງຕ້ອງໄດ້ເປັນເຈົ້າການໃນການຍົກສູງຄຸນນະພາບຜົນການກວດສອບ ແລະ ການຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດການແກ້ໄຂຜົນການກວດສອບໄປພ້ອມໆກັນຢ່າງເຂັ້ມງວດ ແລະ ຮັດກຸມ.

ບົນພື້ນຖານການຈັດຕັ້ງຜັນຂະຫຍາຍເນື້ອໃນດັ່ງກ່າວນັ້ນ ແມ່ນແນໃສ່ເຮັດໃຫ້ວຽກງານກວດສອບ ແລະ ມາດຕະການໃນການຍົກສູງຄຸນນະພາບການກວດສອບ ມີປະສິດທິພາບ ແລະ ມີປະສິດທິຜົນ ກ້າວໄປສູ່ການຄຸ້ມຄອງ, ການນໍາໃຊ້ງົບປະມານ, ການເງິນ ແລະ ຊັບສິນຂອງລັດ, ອົງການຈັດຕັ້ງການເມືອງ-ສັງຄົມ, ກົມກອງທີ່ຂຶ້ນກັບກໍາລັງປະກອບອາວຸດ, ທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ວິສາຫະກິດທີ່ລັດລົງທຶນ; ໂຄງການລົງທຶນ ແລະ ກິດຈະການເຄື່ອນໄຫວຕ່າງໆ ທີ່ນໍາໃຊ້ງົບປະມານ ແລະ ຊັບສິນຂອງລັດ ໃຫ້ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນສູງ ອົງການກວດສອບແຫ່ງລັດ,

ອົງການກວດສອບປະຈຳພາກ, ນັກກວດສອບ ຈະຕ້ອງສຸມໃສ່ບາງບັນຫາສຳຄັນດັ່ງນີ້:

ໜຶ່ງ, ຖືເອົາການເຜີຍແຜ່ກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ສະບັບປັບປຸງ) ເລກທີ 29/ສພຊ, ລົງວັນທີ 29 ທັນວາ 2022 ໃຫ້ພະນັກງານ-ລັດຖະກອນ ພາຍໃນອົງການກວດສອບແຫ່ງລັດ ແລະ ອົງການກວດສອບປະຈໍາພາກ ຕະຫຼອດເຖິງບັນດາເປົ້າໝາຍຖືກກວດສອບ ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງເພື່ອເປັນບ່ອນອີງໃນການ ເຄື່ອນໄຫວວຽກງານ ຕາມພາລະບົດບາດຂອງຕົນ; ພ້ອມດຽວກັນນັ້ນ ກໍ່ຄົ້ນຄວ້າ, ສ້າງບັນດານິຕິກຳໃຕ້ກົດໝາຍ ຮັບໃຊ້ວຽກງານປະເມີນຄຸນນະພາບຜົນການກວດສອບ ເປັນຕົ້ນ ສ້າງປຶ້ມຄູ່ມືແນະນຳ ແລະ ມາດຕະຖານເງື່ອນໄຂທີ່ຕິດພັນກັບວຽກງານການປະເມີນການກວດສອບໃນແຕ່ລະໄລຍະ; ປັບປຸງຄືນຂໍ້ກຳນົດວ່າດ້ວຍມາດຕະຖານການກວດສອບຜົນການຈັດຕັ້ງປະຕິບັດຂອງອົງການກວດສອບແຫ່ງລັດ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ;

ສອງ, ເປັນເຈົ້າການ ແລະ ເຂັ້ມງວດໃນການຈັດຕັ້ງປະຕິບັດການປະເມີນການກະກຽມກວດສອບ ກໍຄືການປະເມີນແຜນການກວດສອບໃຫ້ມີຄວາມລະອຽດ ແລະ ຊັດເຈນຂຶ້ນຕື່ມ ໂດຍສະເພາະການແບ່ງຄວາມຮັບຜິດຊອບພາຍໃນຄະນະກວດສອບ ແລະ ແຜນການກວດສອບລະອຽດ ລວມທັງການຈັດຕັ້ງປະຕິບັດການປະເມີນໄລຍະການດຳເນີນການກວດສອບ ແລະ ການສະຫຼຸບຜົນການກວດສອບ;

ສາມ, ເປັນເຈົ້າການໃນການຄົ້ນຄວ້າ, ສ້າງແຜນກ່ຽວກັບການສ້າງປຶ້ມຄູ່ມືປະເມີນຄຸນນະພາບການກວດສອບ ຫຼື ປຶ້ມຄູ່ມືການຄວບຄຸມຄຸນນະພາບການກວດສອບ; ພ້ອມດຽວກັນນັ້ນ, ກໍຄົ້ນຄວ້າ, ປັບປຸງຄືນຂໍ້ກຳນົດວ່າດ້ວຍມາດຕະຖານການກວດສອບ, ຜົນການຈັດຕັ້ງປະຕິບັດ ຂອງອົງການກວດສອບແຫ່ງລັດ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ;

ສີ່, ເອົາໃຈໃສ່ສ້າງພະນັກງານໃຫ້ມີຄຸນທາດທາງດ້ານການເມືອງໜັກແໜ້ນ, ມີຈັນຍາບັນ, ຈັນຍາທຳ, ມີຄວາມໂປ່ງໃສ, ທ່ຽງທຳໃນການປະຕິບັດໜ້າທີ່ວຽກງານ; ໝາຍວ່າໃນສະເພາະໜ້າ ແລະ ຍາວນານ ຈະຕ້ອງໄດ້ຍົກສູງປະສິດທິພາບຂອງພະນັກງານນຳພາ-ຄຸ້ມຄອງ, ພະນັກງານວິຊາການ ເພື່ອສ້າງໃຫ້ມີການຫັນປ່ຽນໃໝ່ຢ່າງແຂງແຮງ ແລະ ເລິກເຊິ່ງ ເພື່ອບຸກທະລຸໃຫ້ໄດ້ການປ່ຽນແປງໃໝ່ວຽກງານພະນັກງານ. ໃນນີ້ແມ່ນສຸມໃສ່ 3 ວຽກຕົ້ນຕໍຄື: **ໜຶ່ງ,** ຂອດຄຸ້ມຄອງພະນັກງານ, ການສ້າງແຜນກຳນົດພະນັກງານ ເປັນຂໍກຸນແຈສຳຄັນ. **ສອງ,** ຂອດການກໍ່ສ້າງ-ບຳລຸງພະນັກງານຢ່າງເປັນລະບົບ ແລະ **ສາມ,** ຂອດການຈັດວາງ ແລະ ສັບຊ້ອນພະນັກງານ ຕ້ອງມີການປະເມີນການປະຕິບັດໜ້າທີ່ຂອງພະນັກງານ ໂດຍຖືເອົາຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານເປັນບ່ອນອີງໃຫ້ຄະນະພັກ ໃນການປະເມີນບຸກຄະລາກອນ.

ຫ້າ, ຈັດຝຶກອົບຮົມ, ແລກປ່ຽນ ແລະ ຖອດຖອນບົດຮຽນວຽກງານດັ່ງກ່າວ ກັບອົງການກວດສອບຂອງບັນດາປະເທດໃນພາກພື້ນ ແລະ ສາກົນ ເປັນຕົ້ນ: ສສ.ຫວຽດນາມ, ມາເລເຊຍ ແລະ ສານກວດສອບຝຣັ່ງ ຕາມເງື່ອນໄຂຕົວຈິງ ເພື່ອສ້າງຄວາມຮັບຮູ້, ເຂົ້າໃຈ ແລະ ຍົກລະດັບຄວາມຮູ້, ຄວາມສາມາດ ໃນການຈັດຕັ້ງປະຕິບັດວຽກງານປະເມີນຄຸນນະພາບການກວດສອບ ໃຫ້ໄດ້ຢ່າງມີປະສິດທິພາບ;

ຫົກ, ພັດທະນາພື້ນຖານໂຄງລ່າງ ແລະ ຫັນເປັນທັນສະໄໝ ໂດຍຖືເອົາການຍົກສູງ ແລະ ນຳໃຊ້ລະບົບຂໍ້ມູນ-ຂ່າວສານ ເຊື່ອມຕໍ່ກັບລະບົບເຄືອຂ່າຍການຄຸ້ມຄອງງົບປະມານແຫ່ງລັດ ຂອງກະຊວງການເງິນເຂົ້າໃນການສ້າງແຜນການກວດສອບ ໃຫ້ມີຄວາມຊັດເຈນແຕ່ຫົວທີ; ພ້ອມດຽວກັນນັ້ນ, ກໍຊອກຫາແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາການຫັນວຽກງານກວດສອບເປັນທັນສະໄໝ (E-Audit) ໃນນີ້ແມ່ນເລັ່ງໃສ່ການສ້າງຄວາມເຂັ້ມແຂງຫັນເປັນທັນສະໄໝ ໃນ 5 ວຽກທີ່ເປັນພື້ນຖານສຳຄັນໃຫ້ແກ່ການພົວພັນ, ປະສານງານ ໃນການເຄື່ອນໄຫວວຽກງານກວດສອບໃຫ້ມີຄວາມຮັບປະກັນ, ວ່ອງໄວ ເປັນຕົ້ນການສະໜອງວັດຖຸອຸປະກອນໃຫ້ຄົບຖ້ວນ, ຕິດຕັ້ງລະບົບບໍລິຫານຫ້ອງການທັນສະ

ໄໝ (E-Office), ຕິດຕັ້ງລະບົບຄຸ້ມຄອງເອກະສານ (Document Management System), ລະບົບຈົດໝາຍອີເລັກໂຕນິກ (E-mail Server) ແລະ ລະບົບຖານເກັບກຳຂໍ້ມູນ Cloud Server.

ທັງໝົດທີ່ກ່າວມາເທິງນັ້ນ, ແມ່ນບາງທັດສະນະ, ບາງຄວາມຄິດເຫັນ ເຖິງວ່າຈະບໍ່ຄົບຖ້ວນ, ແຕ່ຜູ້ຂຽນຄິດວ່າຈະເປັນບາງບົດຮຽນເພື່ອນຳໄປຄົ້ນຄວ້າ, ວິເຄາະ, ວິໄຈ ແນໃສ່ເຮັດໃຫ້ການກວດສອບ ແລະ ມາດຕະການໃນການຍົກສູງຄຸນນະພາບການກວດສອບ ມີຄວາມເຂັ້ມແຂງຢ່າງຮອບດ້ານ. ເພື່ອເຮັດໃຫ້ການກວດສອບ ແລະ ມາດຕະການໃນການຍົກສູງຄຸນນະພາບການກວດສອບ ມີຄວາມເຂັ້ມແຂງ, ທັນສະໄໝ ບົນພື້ນຖານຄວາມເປັນເຈົ້າການ ຂອງຄະນະພັກ, ຄະນະນຳ, ພະນັກງານນັກກວດສອບ ຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າ, ກວດຄືນ ບັນດານິຕິກຳທີ່ພົວພັນກັບວຽກງານກວດສອບ ໂດຍສະເພາະ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແລະ ນິຕິກຳໃຕ້ກົດໝາຍ ຕະຫຼອດເຖິງບັນຫາປົ່ນອ້ອມຕ່າງໆ ທີ່ມີຜົນຕໍ່ວຽກງານກວດສອບ ແລະ ເຊື່ອແນ່ວ່າ ດ້ວຍຄວາມເປັນຫ່ວງເປັນໄຍຢ່າງໃກ້ຊິດຂອງພັກ-ລັດຖະບານ ກໍຄືຄວາມເປັນເຈົ້າການນຳພາ-ຊີ້ນຳ ຂອງອົງຄະນະພັກ ອົງການກວດສອບແຫ່ງລັດ, ອົງການກວດສອບປະຈຳພາກ ໃນການປະຕິບັດໜ້າທີ່ການເມືອງທີ່ໜັກໜ່ວງແຕ່ມີກຽດສະຫງ່າ ທີ່ພັກ-ລັດມອບໝາຍໃຫ້ດ້ວຍຜົນສຳເລັດທີ່ໜັກແໜ້ນ...ຯ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ...

ຕໍ່ຈາກໜ້າ 16

ສຳຄັນ, ຕ້ອງເຮັດວຽກງານນຳພາແນວຄິດ ຂອງສະມາຊິກພັກ, ພະນັກງານໃຫ້ມີຄວາມອຸ່ນອຽນທຸ່ນທ່ຽງ, ມີຄວາມໜັກແໜ້ນ ແລະ ມີຄວາມເຂົ້າໃຈຕໍ່ກັບສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ພ້ອມກັນສູ້ຊົນຜ່ານຜ່າ ດ້ວຍການປະຕິບັດໜ້າທີ່ການເມືອງຂອງຕົນຢ່າງຕັ້ງໜ້າ.

6). ສືບຕໍ່ເພີ່ມທະວີການປັບປຸງການຈັດຕັ້ງໃຫ້ປອດໃສ, ໜັກແໜ້ນ, ເຂັ້ມແຂງ, ແທດເໝາະກັບເງື່ອນໄຂ ໃນສະພາບແວດລ້ອມໃໝ່ ແລະ ສາມາດປະຕິບັດສຳເລັດໜ້າທີ່ການເມືອງຂອງຕົນ; ປະຕິບັດສິດອຳນາດຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆ ທີ່ວາງອອກຢ່າງເຂັ້ມງວດ.

7). ສືບຕໍ່ເພີ່ມທະວີການນຳພາ-ຊີ້ນຳການປະຕິບັດພາລະບົດບາດຂອງຕົນ ຕາມຄຳຂວັນ 3 ດີ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ໂປ່ງໃສໃຫ້ແກ່ລັດຖະບານ ກໍ່ຄືນາຍົກ-ບັນດາຮອງນາຍົກລັດຖະມົນຕີ ໃນການພິຈາລະນາຕົກລົງ ແລະ ຕັດສິນບັນຫາຢ່າງມີປະສິດທິພາບ ແລະ ນຳຜົນປະໂຫຍດມາສູ່ປະເທດຊາດ.

ສັງລວມແລ້ວ, ການດຳເນີນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ຫສນຍ ສະໄໝທີ V ກໍ່ຄືການດຳເນີນຊີວິດການເມືອງເທື່ອນີ້ ຖືເປັນຜົນສຳເລັດທີ່ສຳຄັນຫຼາຍ, ເປັນຂໍ້ມູນພື້ນຖານເພື່ອສືບຕໍ່ຄົ້ນຄວ້າ, ສຳຫຼວດ ກວດກາຄືນຕົນເອງ ແລະ ການຈັດຕັ້ງ, ອັນໃດມີຄວາມຈິງ-ບໍ່ມີຄວາມຈິງ ເພື່ອເປັນເຈົ້າການປັບປຸງແກ້ໄຂໃຫ້ຕົກໄປ ໂດຍມີການໄຈ້ແຍກໃຫ້ຈະແຈ້ງວ່າ ອັນໃດເປັນຄວາມຮັບຜິດຊອບລວມຂອງໝູ່ຄະນະ, ຈຸດສຸມໃນການແກ້ໄຂ, ອັນໃດເປັນຄວາມຮັບຜິດຊອບການເມືອງ ແລະ ບັນຫາສ່ວນຕົວຂອງແຕ່ລະສະຫາຍ ຄະນະບໍລິຫານງານພັກ ກໍ່ຄືຄະນະພັກແຕ່ລະຂັ້ນທີ່ຕ້ອງປັບປຸງແກ້ໄຂໃຫ້ມີການຫັນປ່ຽນແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານຢ່າງແທ້ຈິງ...ຯ

ຍົກສູງຄຸນທາດການເມືອງ ໃຫ້ພະນັກງານ, ສະມາຊິກພັກ ຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ໂດຍ: ອໍລະໄທ ວິໄລທົງ

ພັກປະຊາຊົນປະຕິວັດລາວ ແມ່ນກອງນຳໜ້າທີ່ມີອົງການຈັດຕັ້ງ, ແມ່ນການຈັດຕັ້ງການເມືອງສູງສຸດຂອງຊົນຊັ້ນກຳມະກອນ ແລະ ຂອງລະບອບປະຊາທິປະໄຕປະຊາຊົນລາວ, ເປັນຕົວແທນທີ່ຈິງຮັກພັກດີຢ່າງສະເໝີຕົ້ນສະເໝີປາຍຕໍ່ສິດ ແລະ ຜົນປະໂຫຍດຂອງຊົນຊັ້ນກຳມະກອນລາວ, ຊາວຜູ້ອອກແຮງງານ ແລະ ຂອງຊາດລາວທັງໝົດ; ວັດຖຸປະສົງຂອງພັກປະຊາຊົນປະຕິວັດລາວ ແມ່ນນຳພາປວງຊົນທັງຊາດດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກ, ປົກປັກຮັກສາປະເທດຊາດໄວ້ໃຫ້ໝັ້ນຄົງ, ກໍ່ສ້າງລະບອບປະຊາທິປະໄຕປະຊາຊົນໃຫ້ບັນລຸຕາມຈຸດໝາຍສັງຄົມນິຍົມ, ສ້າງປະເທດລາວ ໃຫ້ເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນະຖາວອນ, ນຳເອົາປະເທດຊາດ ແລະ ປະຊາຊົນຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ດ້ອຍພັດທະນາ.

ເພື່ອບັນລຸວັດຖຸປະສົງດັ່ງກ່າວ ມັນຮຽກຮ້ອງໃຫ້ພວກເຮົາທຸກຄົນ ເວົ້າລວມ, ເວົ້າສະເພາະແມ່ນພະນັກງານ, ສະມາຊິກພັກຕ້ອງໄດ້ຍົກສູງຄຸນທາດການເມືອງ, ສົມບັດສິນທຳປະຕິວັດ ເນື່ອງຈາກວ່າຄຸນສົມບັດແມ່ນຄຸນ ແລະ ທາດຂອງພະນັກງານ-ສະມາຊິກພັກຜູ້ໜຶ່ງບໍ່ວ່າຢູ່ໃນລະບອບການເມືອງ ຫຼື ເງື່ອນໄຂໃດກໍ່ຕາມ ຄຸນສົມບັດ ແມ່ນສິ່ງທີ່ຈຳເປັນ ແລະ ຂາດບໍ່ໄດ້, ຄຸນສົມບັດເປັນໄມ້ຫຼາວັດແທກເຖິງປະສິດທິພາບຂອງການປະຕິບັດພາລະກິດປ່ຽນແປງໃໝ່ຂອງພັກກໍ່ຄືການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຕ່າງໆໃຫ້ສຳເລັດຜົນ ໂດຍສະເພາະໃນເງື່ອນໄຂປະຈຸບັນທີ່ປະເທດເຮົາ ພວມດຳເນີນກົນໄກເສດຖະກິດຕະຫຼາດ, ເປີດກວ້າງການພົວພັນຮ່ວມມືກັບສາກົນ ແລະ ພາກພື້ນ ຍັງສືບຕໍ່ມີການຜັນແປຢ່າງສະຫຼັບສັບຊ້ອນ; ການປ່ຽນແປງໃໝ່ຢູ່ພາຍໃນປະເທດຂອງພວກເຮົາປະເຊີນກັບສິ່ງທ້າທາຍທົດສອບຫຼາຍດ້ານ ເປັນຕົ້ນແມ່ນດ້ານຫຍໍ້ທໍ້ຂອງເສດຖະກິດຕະຫຼາດ, ການເປີດກວ້າງການພົວພັນ ແລະ ເຊື່ອມໂຍງກັບສາກົນ ໄດ້ສົ່ງຜົນສະທ້ອນທາງລົບບໍ່ໜ້ອຍ ຕໍ່ຄຸນທາດການເມືອງຂອງພະນັກງານ, ສະມາຊິກພັກ

ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໄດ້ກຳນົດວ່າ: "ເພີ່ມທະວີການເຄື່ອນໄຫວດ້ານການເມືອງ ແລະ ນຳພາດ້ານແນວຄິດຢູ່ພາຍໃນການຈັດຕັ້ງພັກທຸກຂັ້ນຕິດພັນກັບການດຳເນີນການປົວແປງພາຍໃນຢ່າງຕໍ່ເນື່ອງ ໂດຍຖືການຕໍ່ສູ້ຕ້ານແນວຄິດຄອງເດີມ, ທັດສະນະການເມືອງທີ່ຜິດເຂວ, ແບບແຜນນຳພາທີ່ບໍ່ຖືກຕ້ອງ ກໍ່ຄືຄ່ານິຍົມທີ່ບໍ່ເໝາະສົມ ຢູ່ພາຍໃນຖັນແຖວສະມາຊິກພັກ...ເປັນເນື້ອໃນພື້ນຖານຂອງການດຳເນີນຊີວິດຂອງຄະນະພັກແຕ່ລະຂັ້ນ ທັງດຳເນີນການປຸກລະດົມຂະບວນການຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ຄວາມເປັນແບບຢ່າງນຳໜ້າຂອງພະນັກງານ, ສະມະຊິກພັກເປັນຕົ້ນແມ່ນພະນັກງານ, ສະມະຊິກພັກ, ທີ່ເປັນຫຼັກແຫຼ່ງນຳພາຢູ່ແຕ່ລະບ່ອນ, ແກ້ໄຂສະພາບການຖືເບົາການພັດທະນາຕົນເອງໃນດ້ານນີ້". ເວົ້າລວມ, ເວົ້າສະເພາະກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແມ່ນກະຊວງໜຶ່ງທີ່ຕິດພັນກັບການບໍລິຫານ ແລະ ການພົວພັນສັງຄົມ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນ

ການຄຸ້ມຄອງມະຫາພາກດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃນຂອບເຂດທົ່ວປະເທດ, ປະກອບມີ 8 ກົມ ແລະ 3 ພາກສ່ວນຂຶ້ນກັບຄື ສະຖາບັນພັດທະນາສີມືແຮງງານ, ອົງການປະກັນສັງຄົມແຫ່ງຊາດ ແລະ ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ຍົກສູງຄຸນທາດການເມືອງພະນັກງານ-ສະມາຊິກພັກ ເພື່ອສ້າງໄດ້ຖັນແຖວພະນັກງານ-ສະມາຊິກພັກຜູ້ທີ່ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດທີ່ໜັກແໜ້ນ ນຳພາຈັດຕັ້ງຜັນຂະຫຍາຍແນວທາງທາງຂອງພັກໃຫ້ບັນລຸຕາມຄາດໝາຍທີ່ກຳນົດໄວ້.

ໃນໄລຍະໜຶ່ງປີຜ່ານມາ ອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ຖືຄວາມສຳຄັນ ແລະໄດ້ເອົາໃຈໃສ່ໃນການຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດດ້ວຍຫຼາຍຮູບແບບສະແດງອອກຄື: ຈັດຕັ້ງເຜີຍແຜ່ມະຕິ, ຄຳສັ່ງ, ຂໍ້ກຳນົດ, ລະບຽບ, ກົດໝາຍ, ແຜນນະໂຍບາຍ ແລະ ເອກະສານທີ່ສຳຄັນຕ່າງໆ ເປັນຕົ້ນແມ່ນມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ, ປາຖະກະຖາເລົ່າມູນເຊື້ອວັນຊາດທີ 2 ທັນວາ ຄົບຮອບ 47 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານຄົບຮອບ 102 ປີ ແລະ ເອກະສານສຳຄັນອື່ນໆ ເຊິ່ງສາມາດຈັດຕັ້ງປະຕິບັດໄດ້ທັງໝົດ 9 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 1.195 ເທື່ອສະຫາຍ, ຍິງ 555 ເທື່ອສະຫາຍ. ໄດ້ຈັດຊຸດຝຶກອົບຮົມທິດສະດີການເມືອງ ແລະ ການປົກຄອງໄລຍະສັ້ນ 45 ວັນຊຸດທີ 6 ປະຈຳປີ 2022 ມີຜູ້ເຂົ້າຮ່ວມ 30 ສະຫາຍ, ຍິງ 15 ສະຫາຍ, ຈັດຝຶກອົບຮົມວຽກງານກໍ່ສ້າງພັກ-ພະນັກງານ ແລະ ວຽກງານປ້ອງກັນພັກປະຈຳປີ 2022 ໃຫ້ບັນດາຄະນະໜ່ວຍພັກທົ່ວອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ພ້ອມກັນນັ້ນ, ຍັງໄດ້ສົ່ງໄປບຳລຸງ-ກໍ່ສ້າງທາງດ້ານທິດສະດີການເມືອງ ແລະ ການປົກຄອງ ໄດ້ 33 ສະຫາຍ, ລື່ນຄາດໝາຍ 10% ຂອງແຜນການປີ, ສົ່ງໄປບຳລຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 1 ສະຫາຍ, ບຳລຸງວຽກງານຈັດຕັ້ງຢູ່ ສສ ຫວຽດນາມ 1 ສະຫາຍ, ຍົກລະດັບວິຊາສະເພາະໄລຍະຍາວຢູ່ພາຍໃນ ແລະ ຕ່າງປະເທດ 18 ສະຫາຍ, ປະຊຸມສຳມະນາວິຊາການດ້ານຕ່າງໆຢູ່ພາຍໃນປະເທດ, ຢູ່ຕ່າງປະເທດແບບ (ທາງໄກ) ແລະ ເຄື່ອນໄຫວວຽກທາງລັດຖະການຢູ່ພາຍໃນປະເທດ 179 ຄັ້ງ, ມີ 886 ເທື່ອຄົນ, ຍິງ 286 ເທື່ອຄົນ.

ນອກຈາກນີ້ຍັງໄດ້ຕິດຕາມ, ຊຸກຍູ້, ກວດກາການຂະຫຍາຍສະມາຊິກພັກຂອງບັນດາຮາກຖານພັກ ໂດຍໃຫ້ປະຕິບັດເຂັ້ມງວດຕາມກົດລະບຽບພັກ, ໂດຍເລີ່ມຈາກການກຳນົດ ແລະ ຕິດຕາມເປົ້າໝາຍມະຫາຊົນກ້າວໜ້າ ໃຫ້ມີມາດຕະຖານເງື່ອນໄຂຄົບຖ້ວນ ເພື່ອຂະຫຍາຍເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ, ເຊິ່ງໄດ້ອະນຸມັດຮຽນເອກະສານສະໜັບສະໜູນໃຫ້ມະຫາຊົນກ້າວໜ້າ 23 ສະຫາຍ, ຍິງ 10 ສະຫາຍ; ຮຽນກົດລະບຽບພັກ 31 ສະຫາຍ, ຍິງ 16 ສະຫາຍ; ຮັບມະຫາຊົນກ້າວໜ້າເຂົ້າເປັນສຳຮອງ 28 ສະຫາຍ, ຍິງ 16 ສະຫາຍ, ລື່ນແຜນການ 86,66%, ເລື່ອນສະມາຊິກພັກສຳຮອງເຂົ້າເປັນສົມບູນ 7 ສະຫາຍ, ຍິງ 4 ສະຫາຍ.

ທົ່ວອົງຄະນະພັກກະຊວງ ມີໜ່ວຍພັກຮາກຖານຂຶ້ນກັບທັງໝົດ 11 ໜ່ວຍພັກ; ມີສະມາຊິກພັກທັງໝົດ 289 ສະຫາຍ, ຍິງ 123 ສະຫາຍ;ໃນນີ້: ສົມບູນ 261 ສະຫາຍ, ຍິງ 111 ສະຫາຍ (ບຳນານ 9 ສະຫາຍ, ຍິງ 2 ສະຫາຍ;), ສຳຮອງ 28 ສະຫາຍ, ຍິງ 16 ສະຫາຍ; ມີພະນັກງານທັງໝົດ 329 ຄົນ, ຍິງ 148 ຄົນ.

ຜ່ານການເອົາໃຈໃສ່ນຳພາ-ຊີ້ນຳຫຼາຍດ້ານຂອງອົງຄະນະພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຫັນໄດ້ເຖິງພະນັກງານ, ສະມາຊິກພັກສ່ວນ

ຫຼາຍແມ່ນຍັງຮັກສາໄດ້ດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີທັດສະນະຫຼັກໝັ້ນຊື່ນຊົ້ນກຳມະກອນທີ່ຈະແຈ້ງ, ຮັບຮູ້, ເຂົ້າໃຈຕໍ່ແນວທາງຂອງພັກ, ມະຕິ, ຄຳສັ່ງ, ລະບຽບ, ກົດໝາຍຂອງລັດວາງອອກເປັນຢ່າງດີ, ມີຄວາມເປັນເອກະພາບສູງຕໍ່ແນວທາງນະໂຍບາຍຂອງພັກ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ, ຮູ້ຈຳແນກມິດ ແລະ ສັດຕູຢ່າງຈະແຈ້ງ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ເປັນແບບຢ່າງທີ່ດີ, ມີຄວາມບຸກບືນຕັ້ງໜ້າຝຶກຝົນຫຼໍ່ຫຼອມ ແລະ ພັດທະນາຕົນເອງ ແລະ ເປັນເຈົ້າການໃນການປະກອບສ່ວນຈັດຕັ້ງປະຕິບັດໜ້າທີ່ທີ່ການຈັດຕັ້ງມອບໝາຍໃຫ້ເປັນຢ່າງດີ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ ທຽບໃສ່ຄວາມຮຽກຮ້ອງຕ້ອງການ ໃນໄລຍະໃໝ່ເຫັນວ່າຍັງບໍ່ທັນຕອບສະໜອງໄດ້ກັບສະພາບການຕົວຈິງ ເຫັນວ່າຍັງມີຫຼາຍດ້ານທີ່ຕ້ອງໄດ້ປັບປຸງແກ້ໄຂໃນສະເພາະໜ້າດັ່ງນີ້:

1) ການສຶກສາອົບຮົມການເມືອງ-ແນວຄິດ ເຖິງແມ່ນວ່າໄດ້ມີຄວາມຕັ້ງໜ້າພະຍາຍາມເຮັດຢ່າງລຽນຕິດແລ້ວກໍ່ຕາມ, ແຕ່ການສຶກສາອົບຮົມແຕ່ລະເປົ້າໝາຍຍັງບໍ່ທັນເລິກເຊິ່ງ ແລະ ແທດເຖິງ ຈຶ່ງພາໃຫ້ເກີດມີພະນັກງານ-ສະມາຊິກພັກຈຳນວນໜຶ່ງ ມີການຫັນປ່ຽນທາງດ້ານແນວຄິດ ແລະ ທັດສະນະ, ຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກຫຼຸດໜ້ອຍຖອຍລົງ, ສະແດງອອກຢູ່ບ່ອນວ່າ ນໍ້າໃຈຮັກຊາດ, ຮັກລະບອບໃໝ່, ຄວາມເສຍສະຫຼະ ເພື່ອສ່ວນລວມບໍ່ສູງ ແລະ ຄວາມເຊື່ອໝັ້ນຕໍ່ແນວທາງອຸດົມການສັງຄົມນິຍົມບໍ່ເລິກເຊິ່ງ ແລະ ໜັກແໜ້ນ, ມີແນວຄິດຫວັ່ນໄຫວຄອນແຄນຕໍ່ການນຳພາຂອງພັກ.

2). ການຈັດຕັ້ງຮາກຖານພັກບາງໜ່ວຍພັກບາງຄັ້ງຍັງຖືເບົາການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ຖັນແຖວພະນັກງານ, ສະມາຊິກພັກ ການຈັດຕັ້ງປະຕິບັດບໍ່ທັນຮັດກຸມ ຍັງເຮັດແບບລວມໆ, ເນື້ອໃນບໍ່ທັນເລິກເຊິ່ງ, ບໍ່ແທດເຖິງເປົ້າໝາຍ, ຄຸນນະພາບບໍ່ທັນສູງ, ເຮັດໃຫ້ເປົ້າໝາຍຈຳນວນໜຶ່ງບໍ່ທັນຮັບຮູ້ ແລະ ຄວາມເຂົ້າໃຈ ຕໍ່ຈຸດປະສົງ ແລະ ບໍ່ທັນເປັນເຈົ້າການໃນການຫັນປ່ຽນທີ່ຕັ້ງໜ້າ. ການປະຕິບັດລະບຽບການປະຊຸມຮ່ວມຊີວິດພັກປະຈຳເດືອນ, ການສະຫຼຸບລາຍງານຕໍ່ຂັ້ນເທິງຍັງບໍ່ທັນໄດ້ປະຕິບັດເປັນປົກກະຕິ, ການຕຳນິຕົນເອງ ແລະ ສົ່ງຂ່າວໝູ່ເພື່ອນ, ສະມາຊິກພັກພາຍໃນໜ່ວຍຍັງບໍ່ທັນແຂງແຮງ, ບໍ່ທັນໄດ້ດີ, ບາງຄັ້ງຍັງບໍ່ທັນຖືກຕ້ອງຕາມກົດລະບຽບພັກ ຍັງມີລັກສະນະເປັນພຽງຮູບການ ຂອງຄະນະໜ່ວຍພັກ, ບັນດາອົງການຈັດຕັ້ງມະຫາຊົນ,

3). ພະນັກງານ, ສະມາຊິກພັກຈຳນວນໜຶ່ງຂາດຄວາມກະຕືລືລົ້ນ ໃນການຄົ້ນຄວ້າລະດັບຄວາມຮູ້, ຄວາມສາມາດຕົນເອງ, ບໍ່ເປັນເຈົ້າການໃນການຄົ້ນຄວ້າການກຳແໜ້ນແນວທາງນະໂຍບາຍ, ເຮັດການປະກອບສ່ວນຈັດຕັ້ງປະຕິບັດໜ້າທີ່ທີ່ການຈັດຕັ້ງມອບໝາຍໃຫ້ບໍ່ທັນຮັບປະກັນໄດ້ດ້ານຄຸນນະພາບ.

ເພື່ອຍົກສູງຄຸນທາດການເມືອງໃຫ້ພະນັກງານ, ສະມາຊິກພັກ, ແຕ່ລະຂັ້ນຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງຂຶ້ນກວ່າເກົ່າ ຄວນເອົາໃຈໃສ່ປັບປຸງແກ້ໄຂວຽກງານທີ່ສຳຄັນບາງດ້ານດັ່ງນີ້:

ໜຶ່ງ. ຄະນະພັກ, ຄະນະນຳແຕ່ລະຂັ້ນຄວນເອົາໃຈໃສ່ຢ່າງໃກ້ຊິດຕິດແທດນຳພາ-ຊີ້ນຳການເມືອງ-ແນວຄິດເປັນກົກ, ເປັນວຽກງານນຳໜ້າ, ປັບປຸງປ່ຽນແປງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງ, ພະນັກງານ, ສະມາຊິກພັກ, ສ້າງສະຕິເຄົາລົບ ແລະ ປະຕິບັດວິໄນຢ່າງເຂັ້ມງວດ, ຕ້ານ ແລະ ສະກັດກັ້ນແນວຄິດເອກະຊົນ, ອາດຍາສິດ, ແນວຄິດກຸ່ມກ້ອນ, ເຊື້ອສາຍ, ຫ່າງເຫີນມະຫາຊົນ, ຫຼົງມົວກິນຟຸມເຟືອຍ, ຖ້າຫາກພົບປະກົດການດັ່ງກ່າວຄະນະພັກ, ຄະນະນຳຄວນແກ້ໃຫ້ວ່ອງໄວ ແລະ ທັນການ.

ສອງ. ຄະນະພັກແຕ່ລະຂັ້ນ ຕ້ອງເພີ່ມທະວີເອົາ

ໃຈໃສ່ວຽກງານການເມືອງ-ແນວຄິດໃຫ້ສູງຂຶ້ນກວ່າເກົ່າ ໂດຍສະເພາະແມ່ນເອົາໃຈໃສ່ປັບປຸງເນື້ອໃນ, ຮູບການ, ວິທີການສຶກສາອົບຮົມໃຫ້ສອດຄ່ອງກັບສະພາບຈຸດພິເສດແຕ່ລະເປົ້າໝາຍ, ເນື້ອໃນຕ້ອງຕິດພັນກັບການອະທິບາຍ, ຊີ້ແຈງ ແລະ ວິທີການແກ້ໄຂບັນຫາທີ່ເກີດຂຶ້ນໃນຂະບວນວິວັດແຫ່ງການເຄື່ອນໄຫວນຳພາຂອງພັກ ໃນແຕ່ລະໄລຍະ. ພ້ອມກັນນັ້ນ, ກໍ່ຄວນກຳເນີນຊີວິດພັກປະຈຳເດືອນໃຫ້ມີເນື້ອໃນຄົບຖ້ວນ, ສຳຫຼວດກວດກາ, ຕຳນິຕິຊົມກໍ່ສ້າງເຊິ່ງກັນ ແລະ ກັນໃຫ້ກາຍເປັນພະນັກງານ, ສະມາຊິກພັກ, ທີ່ເດີນຕາມອຸດົມການສັງຄົມນິຍົມ, ມີນ້ຳໃຈເສຍສະລະເພື່ອຜົນປະໂຫຍດສ່ວນລວມ, ມີຄວາມຈົງຮັກພັກດີຕໍ່ລະບອບປະຊາທິປະໄຕປະຊາຊົນ, ມີຄວາມເຊື່ອໝັ້ນຕໍ່ແນວທາງຂອງພັກ, ມີນ້ຳໃຈຮັກຊາດ, ມີສະຕິຕໍ່ການຈັດຕັ້ງ, ເຄື່ອນໄຫວຖືກຕ້ອງຕາມກົດໝາຍ, ລະບຽບ ແລະ ຕ້ານທຸກເລ່ຫຼ່ຽມກົນອຸບາຍ ຫັນປ່ຽນໂດຍສັນຕິຂອງສັດຕູທີ່ຫວັງມ້າງເພທຳລາຍລະບອບໃໝ່ຂອງພວກເຮົາ.

ສາມ. ຄະນະພັກແຕ່ລະຂັ້ນ, ສະມາຊິກພັກແຕ່ລະສະຫາຍ ຕ້ອງຍົກສູງຄວາມເປັນແບບຢ່າງນຳໜ້າ, ມີນ້ຳໃຈເສຍສະລະເພື່ອຊາດ, ເພື່ອປະຊາຊົນ, ເປັນເຈົ້າການສຸມສະຕິປັນຍາ ເພື່ອຮັບໃຊ້ຊາດ, ຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດໃຈ, ຮັກສາແບບແຜນການດຳລົງຊີວິດທີ່ປອດໃສ, ມີຄວາມບໍລິສຸດສັດຊື່, ດຸໝັ່ນ, ອົດທົນ, ປະຢັດ, ບຸກບືນຄົ້ນຄວ້າຮຽນພັດທະນາຕົນເອງໃນທຸກໆດ້ານ, ເດັດດ່ຽວເປັນເຈົ້າການສະກັດກັ້ນພະຍາດອາຍາສິດ, ເອກະຊົນ, ຕ້ານທຸກພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ, ປະກົດການຫຍໍ້ທໍ້ພາຍໃນພັກ ແລະ ທົ່ວສັງຄົມ ເພື່ອສ້າງຄວາມເຊື່ອໝັ້ນ ແລະ ສ້າງເປັນແບບຢ່າງທີ່ດີໃຫ້ມະຫາຊົນປະຕິບັດຕາມ.

ສີ່. ຄະນະພັກ, ໜ່ວຍພັກຕ້ອງຖືສຳຄັນວຽກງານກວດກາ ດ້ວຍການສ້າງກົນໄກການກວດກາທີ່ເປັນລະບົບຄົບຊຸດ, ກວດກາພັກ, ກວດກາລັດ, ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ, ບັນດາປະກົດການຫຍໍ້ທໍ້ໃນພະນັກງານ, ສະມາຊິກພັກ, ກວດກາຕາມກົດລະບຽບຂອງພັກ, ຕາມກົດໝາຍ ແລະ ລະບຽບຂອງລັດ, ຖືເອົາວຽກງານກວດກາສອດທ້ອຍເຂົ້າໃນແຕ່ລະຂົງເຂດວຽກງານການເມືອງກວດກາພົບເຫັນແລ້ວຕ້ອງມີມາດຕະການເດັດຂາດໃນການແກ້ໄຂ ແລະ ປັບປຸງຕາມລະບຽບຂອງພັກ ຕາມກົດໝາຍ ແລະ ລະບຽບຂອງລັດ ທັງຮັບປະກັນໄດ້ຄວາມຍຸຕິທຳ, ຄວນເອົາໃຈໃສ່ປະຕິບັດລະບອບນະໂຍບາຍຕໍ່ພະນັກງານ, ສະມາຊິກພັກຢ່າງສົມເຫດສົມຜົນ, ຖືກຕ້ອງເປັນທຳ, ເອົາໃຈໃສ່ຍ້ອງຍໍວຽກດີເດັ່ນເພາະວ່າການປະຕິບັດນະໂຍບາຍເປັນປັດໄຈຂອງຖັນແຖວພະນັກງານ, ສະມາຊິກພັກ, ໃຫ້ມີແນວຄິດອຸ່ນອຽນທຸ່ມທ່ຽງຕໍ່ໜ້າທີ່ວຽກງານດ້ວຍຄວາມຮັບຜິດຊອບຫຼາຍຂຶ້ນກວ່າເກົ່າ, ບໍ່ຫວັ່ນໄຫວ-ຄອນແຄນ ແລະ ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກໃນໄລຍະໃໝ່.

ສັງລວມແລ້ວ, ຄຸນທາດການເມືອງ ເປັນມາດຕະຖານກົກ ໃນການວັດແທກທັດສະນະຫຼັກໝັ້ນຊົນຊັ້ນ, ທັດສະນະຫຼັກໝັ້ນມິດ-ສັດຕູ, ນ້ຳໃຈຮັກຊາດ, ຮັກປະຊາຊົນບັນດາເຜົ່າ, ຄວາມຊື່ສັດບໍລິສຸດ, ຄວາມສາມາດໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ, ຄວາມເດັດດ່ຽວໜຽວແໜ້ນຕໍ່ອຸດົມການອຸດົມການຂອງພັກກ້າວຂຶ້ນສັງຄົມນິຍົມ. ດັ່ງນັ້ນ, ການຍົກສູງຄຸນທາດການເມືອງໃຫ້ພະນັກງານ, ສະມາຊິກພັກແມ່ນວຽກງານທີ່ມີຄວາມສຳຄັນ ແລະ ແມ່ນຄວາມຮັບຜິດຊອບໂດຍກົງຂອງຄະນະພັກແຕ່ລະຂັ້ນຕ້ອງໄດ້ເຮັດຢ່າງ ເປັນປົກກະຕິ ແລະ ຕໍ່ເນື່ອງ ຖ້າຫາກວ່າຄະນະພັກແຕ່ລະຂັ້ນ, ມີສະມາຊິກພັກ-ພະນັກງານທີ່ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄວາມຮູ້ຄວາມສາມາດ ກໍ່ຈະກາຍເປັນກຳລັງແຮງທີ່ສຳຄັນໃນການຈັດຕັ້ງປະຕິບັດຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ ບັນລຸຕາມຈຸດປະສົງ ແລະ ຄາດໝາຍທີ່ກຳນົດໄວ້...໗

ບາງຄວາມຄິດເຫັນກ່ຽວກັບການຍົກສູງຄຸນນະພາບ ວຽກງານພະນັກງານ ຢູ່ແຂວງຫຼວງພະບາງ

ໂດຍ: ໄບມະນີ ເຢ່ຍກົ່ວນໍ່ເຮີວ່າງ

ພັກເຮົາໄດ້ຢືນຢັນມາຕະຫຼອດວ່າ: ພະນັກງານມີບົດບາດຕັດສິນຕໍ່ຜົນໄດ້ຜົນເສຍ ຂອງການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ວຽກງານພະນັກງານແມ່ນຂໍກຸນແຈສຳຄັນໃນຂະບວນວິວັດການຈັດຕັ້ງປະຕິບັດບົດບາດນຳພາຂອງພັກຕໍ່ພາລະກິດປະຕິວັດ. ໃນເງື່ອນໄຂໃໝ່ຂອງການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ, ຍຸກໂລກາພິວັດ, ຂໍ້ມູນຂ່າວສານເຕັກນິກວິທະຍາສາດທີ່ກ້າວໜ້າທັນສະໄໝ ພັກເຮົາໄດ້ເລັ່ງທວງໃຫ້ຖັນແຖວພະນັກງານ ຕ້ອງພັດທະນາຄວາມຮູ້, ຄວາມສາມາດ, ມີຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ຕໍ່ພາລະກິດປະຕິວັດຂອງພັກ, ຮັບໃຊ້ປະຊາຊົນຢ່າງບໍ່ຮູ້ອິດຮູ້ເມື່ອຍ, ມີຄວາມກະຕືລືລົ້ນ, ຫ້າວຫັນບຸກບືນສູ້ຊົນຝຶກຝົນຫຼໍ່ຫຼອມກໍ່ສ້າງຕົນເອງ ແລະ ອອກແຮງຄົ້ນຄວ້າຮໍ່າຮຽນ ເພື່ອຍົກລະດັບຄວາມຮູ້ໃນທຸກດ້ານຢ່າງບໍ່ຢຸດຢັ້ງ, ປັດໄຈທີ່ສຳຄັນກວ່າແມ່ນຕ້ອງໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນວຽກງານພະນັກງານ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການປັບປຸງໄປສູ່ຄຸນນະພາບ. ສະນັ້ນ, ສູນກາງພັກ ຈຶ່ງໄດ້ອອກຕິຕິກຳ ກ່ຽວກັບວຽກງານພະນັກງານ ໃຫ້ຄະນະພັກແຕ່ລະຂັ້ນເປັນບ່ອນອີງໃນການຈັດຕັ້ງປະຕິບັດເປັນຕົ້ນແມ່ນ ມະຕິກົມການເມືອງສູນກາງພັກ ສະບັບເລກທີ 030/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍມາດຕະຖານພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 031/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍວຽກງານຄຸ້ມຄອງພະນັກງານ ແລະ ມະຕິ ຂອງກົມການເມືອງສູນກາງພັກ ສະບັບ ເລກທີ 032/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງກົມການເມືອງສູນກາງພັກ ເລກທີ 073/ກມສພ, ລົງວັນທີ 14 ພຶດສະພາ 2019 ມະຕິ ວ່າດ້ວຍການສ້າງແຜນກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ, ມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 04/ຄບສພ, ລົງວັນທີ 30 ກັນຍາ 2021 ວ່າດ້ວຍການເພີ່ມທະວີການນຳພາຂອງພັກ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ວຽກງານພະນັກງານ, ຂໍ້ກຳນົດຂອງກົມການເມືອງສູນກາງພັກ ສະບັບເລກທີ 02/ກມສພ, ລົງວັນທີ 14 ກໍລະກົດ 2007 ວ່າດ້ວຍການແຕ່ງຕັ້ງ, ສັບປ່ຽນໜ້າທີ່ ແລະ ບ່ອນປະຈຳການຂອງພະນັກງານ ແລະ ບົດແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 292/ຄຈສພ ລົງວັນທີ 26 ເມສາ 2018 ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍມາດຕະຖານພະນັກງານນຳພາ-ຄຸ້ມຄອງ, ວ່າດ້ວຍວຽກງານຄຸ້ມຄອງພະນັກງານ ແລະ ວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ເພື່ອເຮັດໃຫ້ວຽກງານພະນັກງານສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ.

ຜ່ານມາ ອີງຄະນະພັກແຂວງຫຼວງພະບາງ ກໍ່ຄືອີງການເສນາທິການທີ່ເຮັດວຽກງານພະນັກງານ ເວລາໃດກໍ່ມີຄວາມພະຍາຍາມຈັດຕັ້ງຜັນຂະຫຍາຍຕິນິກຳດັ່ງກ່າວ ເອົາໃຈໃສ່ສືບຕໍ່ຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິຕ່າງໆ ເປັນບ່ອນອີງໃນຈັດຕັ້ງປະຕິບັດບັດ, ການປະສານສົມທົບລະຫວ່າງຂະແໜງການທີ່ກ່ຽວຂ້ອງເປັນຕົ້ນແມ່ນການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ການສ້າງແຜນກໍ່ສ້າງພະນັກງານ

ແຕ່ລະຂັ້ນ, ການຄົ້ນຄວ້າ, ເລືອກເຟັ້ນເອົາພະນັກງານຜູ້ທີ່ມີມາດຕະຖານເງື່ອນໄຂພະນັກງານໄປຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ແລະ ລະດັບວິຊາສະເພາະຂັ້ນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານການເສີມຂະຫຍາຍປະຊາທິປະໄຕກວ້າງຂວາງ, ສ້າງໂອກາດໃຫ້ພະນັກງານຫຼັກແຫຼ່ງ, ພະນັກງານ-ລັດຖະກອນມີສ່ວນຮ່ວມ ມາຮອດປະຈຸບັນເຫັນວ່າ ວຽກງານດັ່ງກ່າວ ໄດ້ຈັດຕັ້ງປະຕິບັດເຂົ້າສູ່ລວງເລິກ ທັງຮັບປະກັນໄດ້ທາງດ້ານປະລິມານ ແລະ ຄຸນນະພາບ , ຫັນສູ່ລະບຽບການ ແລະ ຫຼັກການສາມາດກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໜ້າທີ່ການເມືອງໃນເງື່ອນໄຂໃໝ່ ສະແດງອອກໃນແຕ່ລະດ້ານດັ່ງນີ້:

ວຽກການສ້າງແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ: ລົງປະເມີນຜົນແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ (ຂັ້ນແຂວງຄຸ້ມຄອງ) ປະຈໍາປີ 2023 ໄດ້ 5 ພາກສ່ວນຄື: ເມືອງພູຄູນ, ເມືອງໂພນໄຊ, ເມືອງນານ, ໂຮງໝໍແຂວງ ແລະ ວິທະຍາໄລເຕັກນິກ-ວິຊາຊີບຫຼວງພະບາງ; ວຽກກໍ່ສ້າງ-ບໍາລຸງພະນັກງານ: ພາຍໃນປະເທດ; ນໍາສົ່ງພະນັກງານນໍາພາ-ຄຸ້ມຄອງໄປຮຽນທິດສະດີການເມືອງ-ການປົກຄອງ ລະບົບ 9 ເດືອນ ຂັ້ນສູງຢູ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ ຈໍານວນ 3 ຊຸດ ຈໍານວນ 5 ສະຫາຍ, ຍິງ 3 ສະຫາຍ ແລະ ນໍາສົ່ງພະນັກງານ-ລັດຖະກອນ ໄປຄັດເລືອກຄົ້ນຄວ້າປະລິນຍາໂທ ຢູ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດປະຈໍາປີ 2023 ຈໍານວນ 4 ສະຫາຍ, ໄດ້ນໍາສົ່ງພະນັກງານ-ລັດຖະກອນທີ່ສໍາເລັດການສຶກສາຢູ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ ກັບຄືນກົມກອງເກົ່າ ມີປະລິນຍາຕີ ຈໍານວນ 7 ສະຫາຍ, ຍິງ 1 ສະຫາຍ, ປະລິນຍາໂທ ຈໍານວນ 3 ສະຫາຍ. ນໍາສົ່ງພະນັກງານ-ລັດຖະກອນ ທີ່ສໍາເລັດການສຶກສາ ທິດສະດີການເມືອງ-ການປົກຄອງ ຂັ້ນສູງ ລະບົບ 9 ເດືອນ ຊຸດທີ I ກັບຄືນກົມກອງເກົ່າ ຈໍານວນ 2 ສະຫາຍ; ນໍາສົ່ງພະນັກງານ-ລັດຖະກອນທີ່ສໍາເລັດການສຶກສາທິດສະດີການເມືອງ-ການປົກຄອງແຂວງ ລະບົບອະນຸປະລິນຍາສຶກປີ 2021-2022 ກັບຄືນກົມກອງເກົ່າ ຈໍານວນ 64 ສະຫາຍ, ຍິງ 12 ສະຫາຍ; ສະເໜີເຖິງຄະນະປະຈໍາພັກແຂວງອອກມະຕິຕົກລົງໃຫ້ພະນັກງານ-ລັດຖະກອນຮຽນທິດສະດີການເມືອງ-ການປົກຄອງແຂວງຫຼວງພະບາງ ມີລະບົບ 6 ເດືອນ ຂັ້ນກາງ ຈໍານວນ 60 ສະຫາຍ, ຍິງ 12 ສະຫາຍ ແລະ ຂັ້ນຕົ້ນ 59 ສະຫາຍ, ຍິງ 22 ສະຫາຍ; ຕ່າງປະເທດ: ຄົ້ນຄວ້າ ແລະ ນໍາສະເໜີຄະນະປະຈໍາພັກແຂວງຕົກລົງໃຫ້ພະນັກງານ-ລັດຖະກອນ ໄປສຶກສາທິດສະດີການເມືອງການປົກຄອງຂັ້ນກາງ ຢູ່ແຂວງດຽນບຽນ ສສ ຫວຽດນາມຈໍານວນ 5 ສະຫາຍ, ຍິງ 1 ສະຫາຍ; ປະລິນຍາຕີ ຈໍານວນ 4 ສະຫາຍ; ປະລິນຍາໂທ ຈໍານວນ 5 ສະຫາຍ; ປະລິນຍາເອກ ຈໍານວນ 1 ສະຫາຍ; ອົບຮົມຫົວຂໍ້ສະເພາະໄລຍະສັ້ນ ຈໍານວນ 1 ສະຫາຍ. ຄົ້ນຄວ້າ ແລະ ນໍາສະເໜີຄະນະປະຈໍາພັກແຂວງຕົກລົງໃຫ້ພະນັກງານນໍາພາ-ຄຸ້ມຄອງ (ຂັ້ນສູນກາງຄຸ້ມຄອງ) ໄປຝຶກອົບຮົມທາງດ້ານທິດສະດີ ແລະ ພຶດຕິກໍາຕົວຈິງຢູ່ເຂດປົກຄອງຕົນເອງ ເກົ້າຈ້ວງກວາງຊີ ສປ ຈີນ ໄລຍະ 12 ວັນ ຈໍານວນ 2 ສະຫາຍ; ໄປອົບຮົມຫົວຂໍ້ສະເພາະ 15 ວັນ ຢູ່ປະເທດຍີ່ປຸ່ນ ຈໍານວນ 1 ສະຫາຍ; ສະເໜີທຽບທິດສະດີໃຫ້ພະນັກງານ-ລັດຖະກອນ ຈໍານວນ 12 ສະຫາຍ: ຂັ້ນສູງ 10 ສະຫາຍ, ຂັ້ນກາງ 2 ສະຫາຍ, ຍິງ 1 ສະຫາຍ; ການຕີລາຄາປະເມີນພະນັກງານ: ຍ້ອນມີບົດແນະນໍາ, ນິຕິກໍາ ແລະ ການຊີ້ນໍາຂອງຂັ້ນເທິງ ເຮັດໃຫ້ການປະເມີນພະນັກງານ-ລັດຖະກອນ ພະແນກການອ້ອມຂ້າງ ຈຶ່ງໄດ້ຮັບຜົນດີຕາມລະດັບຄາດໝາຍທີ່ວາງໄວ້.

ວຽກການຄຸ້ມຄອງພະນັກງານຕາມການແບ່ງສິດຄຸ້ມຄອງ ຄະນະພັກ, ອົງການເສນາທິການແຕ່ລະຂັ້ນໄດ້ເອົາໃຈໃສ່ໃນການຄຸ້ມຄອງພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມສິດ ແລະ ຂອບເຂດຄວາມຮັບຜິດຊອບເປັນຕົ້ນແມ່ນປະຫວັດຕົ້ນກໍາເນີດ, ປະຫວັດການເຄື່ອນໄຫວປະຕິບັດຫນ້າທີ່ ແລະ ການພົວພັນສັງຄົມຂອງພະນັກງານ; ການຫັນເປັນທັນສະໄໝໃນການຄຸ້ມຄອງຂໍ້ມູນພະນັກງານເທື່ອລະກ້າວ; ທົ່ວແຂວງ, ມີພະນັກງານ-ລັດຖະກອນທັງໝົດ 10.921 ຄົນ, ຍິງ 4.875 ຄົນ, ໃນນັ້ນ: ພະນັກງານຂັ້ນແຂວງມີ

3.012 ຄົນ, ຍິງ 1.265 ຄົນ, ກວມ 27,57% ເຊິ່ງພະນັກງານສາຍຕັ້ງ 2.646 ຄົນ, ຍິງ 1.110 ຄົນ, ພະນັກງານສາຍຂວາງ 366 ຄົນ, ຍິງ 155 ຄົນ, ຂອງພະນັກງານຂັ້ນແຂວງທັງໝົດ, ພະນັກງານຂັ້ນເມືອງ ມີ 7.909 ຄົນ, ຍິງ 3.610 ຄົນ, ກວມ 72,42% ຂອງພະນັກງານຂັ້ນເມືອງທັງໝົດ, ລະດັບວິຊາສະເພາະ, ປະລິນຍາເອກ 42 ຄົນ, ຍິງ 10 ຄົນ; ປະລິນຍາໂທ 665 ຄົນ, ຍິງ 159 ຄົນ, ປະລິນຍາຕີ 3.136 ຄົນ, ຍິງ 1.099 ຄົນ, ຊັ້ນສູງ 4.177 ຍິງ 1983, ຊັ້ນກາງ 2.742 ຄົນ, ຍິງ 1.455 ຄົນ, ຊັ້ນຕົ້ນ 206 ຄົນ, ຍິງ 112 ຄົນ ແລະ ບໍ່ມີວິຊາສະເພາະ 13 ຄົນ, ຍິງ 05 ຄົນ".

ໂດຍອີງໃສ່ສະພາບຄວາມເປັນຈິງ ຂອງແຂວງຫຼວງພະບາງ ເຖິງວ່າທຸກຂົງເຂດວຽກງານໄດ້ເອົາໃຈໃສ່ຢ່າງຕັ້ງໜ້າເປັນຕົ້ນແມ່ນການຈັດຕັ້ງຜັນຂະຫຍາຍນິຕິກໍາຕ່າງໆ ກ່ຽວກັບວຽກງານພະນັກງານ, ຖັນແຖວພະນັກງານກໍ່ໄດ້ຮັບການຍົກລະດັບຄວາມຮູ້ຢ່າງຕໍ່ເນື່ອງ, ພະນັກງານສ່ວນຫຼາຍມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງແລ້ວກໍ່ຕາມ ກໍ່ຍັງມີຂໍ້ຄົງຄ້າງຈໍານວນໜຶ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ ດັ່ງນີ້:

ໜຶ່ງ. ການຂຶ້ນແຜນກໍານົດພະນັກງານ ແຕ່ລະຂັ້ນເຮັດບໍ່ທັນໄດ້ດີ, ການຕິດຕາມປະເມີນແຜນກໍານົດພະນັກງານທີ່ມີແລ້ວບໍ່ປົກກະຕິ, ການກໍ່ສ້າງພະນັກງານຈໍານວນໜຶ່ງບໍ່ທັນຕິດພັນກັບແຜນກໍານົດ, ບໍ່ຕິດພັນຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ, ການກໍ່ສ້າງພະນັກງານເນັ້ນໜັກໄປແຕ່ການກໍ່ສ້າງພະນັກງານຢູ່ສະຖາບັນການສຶກສາ, ສ່ວນການສ້າງຢູ່ກັບທີ່ ແລະ ສົ່ງໄປສ້າງຢູ່ທ້ອງຖິ່ນຮາກຖານຍັງມີໜ້ອຍ.

ສອງ. ການຄຸ້ມຄອງພະນັກງານບໍ່ທັນປະຕິບັດໄດ້ຢ່າງເຂັ້ມງວດຕາມລະບຽບເທົ່າທີ່ການຄຸ້ມຄອງພະນັກງານ ບາງຄະນະພັກບ່ອນຍັງຖືເບົາ ບໍ່ຍັງກໍາແໜ້ນ ແລະ ກໍາໄດ້ສະພາບພະນັກງານ ເປັນຕົ້ນແມ່ນປະຫວັດຕົ້ນກໍາເນີດ, ປະຫວັດການເຄື່ອນໄຫວປະຕິບັດໜ້າທີ່ ແລະ ການພົວພັນສັງຄົມຂອງພະນັກງານ; ການທັນເປັນທັນສະໄໝໃນການຄຸ້ມຄອງຂໍ້ມູນພະນັກງານຍັງບໍ່ທັນເປັນລະບົບຮັດກຸມ;

ສາມ; ການຍົກຍ້າຍ, ສັບຊ້ອນ, ຈັດວາງພະນັກງານບາງບ່ອນບໍ່ໄປຕາມແຜນກໍານົດ, ການຄົ້ນຄວ້າຕົກລົງບາງກໍລະນີບໍ່ເປັນໝູ່ຄະນະ; ບໍ່ໄດ້ດໍາເນີນການຕີລາຄາກ່ອນການແຕ່ງຕັ້ງ, ຍົກຍ້າຍ, ສັບປ່ຽນໜ້າທີ່ ຫຼື ສິ້ນສຸດວາລະດໍາລົງຕໍາແໜ່ງ, ບ່ອນທີ່ໄດ້ດໍາເນີນການປະເມີນ, ກົງກັນຂ້າມການຈັດຕັ້ງປະຕິບັດຕົວຈິງ ບໍ່ທັນເປັນເອກະພາບຕາມນິຕິກໍາ, ບໍ່ທັນອີງໃສ່ມາດຕະຖານ, ເງື່ອນໄຂ, ຜົນສໍາເລັດຂອງວຽກງານຕົວຈິງ, ມີລັກສະນະເຫັນອົກເຫັນໃຈກັນ, ບາງກໍລະນີຍັງບໍ່ເຮັດໃຫ້ການຕີລາຄາພະນັກງານບໍ່ຊັດເຈນ, ການນໍາໃຊ້ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານບໍ່ສອດຄ່ອງກັບຕົວຈິງ; ການຈັດຕັ້ງຈໍານວນໜຶ່ງການຕີລາຄາພະນັກງານປະຈໍາປີບໍ່ທັນໄດ້ດໍາເນີນຢ່າງເປັນປົກກະຕິ,.

ເພື່ອເຮັດໃຫ້ວຽກງານພະນັກງານຖືກຈັດຕັ້ງປະຕິບັດໄປຕາມທັດສະນະຂອງພັກ ແລະ ແນວທາງການປ່ຽນແປງໃໝ່ວຽກງານພະນັກງານຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃຫ້ໄດ້ບາງບັນຫາສໍາຄັນດັ່ງນີ້:

1). ຄະນະພັກແຕ່ລະຂັ້ນຕ້ອງເພີ່ມທະວີເອົາໃຈໃສ່ຊີ້ນໍາການຂຶ້ນແຜນກໍານົດພະນັກງານ, ຕ້ອງດໍາເນີນການປະເມີນຜົນແຜນກໍານົດພະນັກງານຢ່າງເປັນປົກກະຕິຕໍ່ເນື່ອງ ເພື່ອປັບປຸງໃຫ້ສອດຄ່ອງກັບຄວາມຮຽກຮ້ອງ ຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ, ການຂຶ້ນແຜນກໍານົດພະນັກງານຕ້ອງໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບການທີ່ກໍານົດໄວ້, ໃນນັ້ນ, ຕ້ອງເອົາໃຈໃສ່ຜູ້ທີ່ປະຕິບັດດີ, ມີຜົນສໍາເລັດໃນການປະຕິບັດໜ້າທີ່ວຽກງານແມ່ນຕ້ອງໄດ້ສືບຕໍ່ຢູ່ໃນແຜນ, ຜູ້ທີ່ປະຕິບັດບໍ່ໄດ້ຕາມມາດຕະຖານ, ເງື່ອນໄຂ ແລະ ບໍ່ມີຜົນສໍາເລັດໃນວຽກງານ ກໍ່ຕ້ອງມີການບໍາລຸງ-ກໍ່ສ້າງ ແຕ່ຖ້າພາຍຫຼັງບໍາລຸງ-ກໍ່ສ້າງແລ້ວຍັງບໍ່ມີການປັບປຸງປ່ຽນແປງກໍ່ຕ້ອງພິຈາລະນາເອົາອອກຈາກແຜນ. ການປະຕິບັດແຜນກໍານົດພະນັກງານທີ່ກ່າວມາຂ້າງເທິງຕ້ອງຕິດພັນກັບການສ້າງ-ບໍາລຸງພະນັກງານ ແລະ ການປະເມີນປະນັກງານຢ່າງຮອບດ້ານ, ເນັ້ນໃສ່ຄຸນນະພາບເປັນຕົ້ນຕໍແນໃສ່ໃຫ້ພະນັກງານ-ສະມາຊິກພັກໃຫ້ມີຄວາມ

ໜັກແໜ້ນທາງດ້ານການເມືອງ-ແນວຄິດ, ມີຄວາມຮູ້ດ້ານວິຊາການ, ມີຄວາມສາມາດໃນການນຳພາປະຕິບັດວຽກງານໃຫ້ມີຜົນສຳເລັດ, ມີແບບແຜນວິທີເຮັດທີ່ຖືກຕ້ອງຕາມຫຼັກການຂອງພັກ, ມີແບບແຜນດຳລົງຊີວິດ ທີ່ປອດໃສຂາວສະອາດ, ທັງມີແຜນການຍົກລະດັບທາງດ້ານທິດສະດີການເມືອງ, ວິຊາສະເພາະໄລຍະສັ້ນ-ໄລຍະຍາວທັງພາຍໃນ ແລະ ຕ່າງປະເທດໃຫ້ມີຄວາມພ້ອມຕາມເງື່ອນໄຂແຕ່ລະຕຳແໜ່ງງານທີ່ຕ້ອງການ.

2). ຄະນະພັກແຕ່ລະຂັ້ນຕ້ອງເອົາໃຈໃສ່ຄຸ້ມຄອງພະນັກງານທາງດ້ານຈຳນວນ ແລະ ຄຸນນະພາບ, ຕ້ອງຫັນວຽກງານຄຸ້ມຄອງພະນັກງານເຂົ້າສູ່ລະບົບ, ຖືກຕ້ອງສອດຄ່ອງກັບນິຕິກຳ ໂດຍເລີ່ມຈາກຂຶ້ນບັນຊີສະຖິຕິ, ສຳນວນເອກະສານຂອງພະນັກງານ, ຄຸ້ມຄອງປະຫວັດ, ກຳແໜ້ນຕົ້ນກຳເນີດ, ສາຍພົວພັນຍາດພີ່ນ້ອງ, ປະຫວັດການເຄື່ອນໄຫວໃນການປະຕິບັດໜ້າທີ່ການເມືອງທີ່ໄດ້ມອບໝາຍ, ຕີລາຄາພະນັກງານຢ່າງພາວະວິໄສຫຼີກເວັ້ນການເບິ່ງພຽງແຕ່ດ້ານໃດດ້ານໜຶ່ງ ຕ້ອງຮັບປະກັນລັກສະນະຮອບດ້ານ, ເຂັ້ມງວດ, ພ້ອມກັນນັ້ນຕ້ອງປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ຮັບຟັງ ແລະ ພິຈາລະນາຄຳເຫັນຂອງມະຫາຊົນ, ຖືເອົາມາດຕະຖານພະນັກງານແຕ່ລະປະເພດເປັນບ່ອນອີງ.

3). ການຍົກຍ້າຍ, ສັບຊ້ອນ, ຈັດວາງ ພະນັກງານຕ້ອງອີງໃສ່ແຜນກຳນົດພະນັກງານ, ລະດັບຄວາມຮູ້ຄວາມສາມາດ, ມາດຕະຖານຕຳແໜ່ງງານ, ຖືກຕາມລະດັບຄວາມຮູ້, ຄວາມສາມາດ, ພອນສະຫວັນ ແລະ ປະສົບການທີ່ແຕ່ລະຄົນຮຽນຮູ້ ແລະ ເຄີຍເຮັດມີຜົນສຳເລັດມາກ່ອນ; ໃນນັ້ນ, ຕ້ອງໄດ້ເອົາຖືເອົາການຕີລາຄາພະນັກງານໃຫ້ຖືກຕ້ອງ, ສອດຄ່ອງກັບຫຼັກການ, ຂັ້ນຕອນທີ່ກຳນົດໄວ້ ແລະ ຕ້ອງດຳເນີນເປັນປົກກະຕິໂດຍອີງໃສ່ມະຕິ ຂອງກົມການເມືອງສູນກາງພັກ, ສະບັບເລກທີ 13/ກມສພ ວ່າດ້ວຍການເລືອກເຟັ້ນ ແຕ່ງຕັ້ງ, ສັບປ່ຽນໜ້າທີ່ຂອງພະນັກງານນຳພາ-ຄຸ້ມຄອງ ແລະ ສະບັບເລກທີ 21/ກມສພ ວ່າດ້ວຍການຕີລາຄາພະນັກງານ.

4. ຄະນະພັກແຕ່ລະຂັ້ນ, ອົງການເສນາທິການທີ່ເຮັດວຽກງານພະນັກງານ ຕ້ອງເອົາໃຈໃສ່ຢ່າງຈິງຈັງຕໍ່ວຽກງານນະໂຍບາຍ ເພາະເປັນວຽກງານໜຶ່ງທີ່ສຳຄັນທີ່ຕິດພັນກັບຜົນປະໂຫຍດລວມຂອງພັກ-ລັດ, ກໍ່ຄືການຈັດຕັ້ງ ກໍ່ຄືພະນັກງານທີ່ຢູ່ໃນຄວາມຮັບຜິດຊອບ ເປັນຕົ້ນແມ່ນນະໂຍບາຍທາງດ້ານວັດຖຸ ແລະ ຈິດໃຈຕໍ່ພະນັກງານທີ່ມີຜົນງານ, ຄວາມດີຕໍ່ການປະຕິວັດ ແລະ ຕໍ່ປະເທດຊາດ, ປະຕິບັດການຍ້ອງຍໍພະນັກງານດີເດັ່ນໃນຂະບວນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານໃຫ້ເໝາະສົມ ແລະ ທົ່ວເຖິງ. ຮັບປະກັນລັກສະນະຕັ້ງໜ້າ ສາມາດສົ່ງເສີມຄວາມຮູ້, ຄວາມສາມາດ ແລະ ໃຫ້ຫຼາຍຂຶ້ນ, ຜົນງານອັນໂດດເດັ່ນຂອງພະນັກງານ ພ້ອມກັນນັ້ນ, ກໍ່ຕ້ອງປະຕິບັດວິໄນຕໍ່ຜູ້ທີ່ລະເມີດລະບຽບ, ກົດໝາຍ ແລະ ກະທຳຜິດ, ຂາດຄວາມຮັບຜິດຊອບ ແລະ ບັນຫາອື່ນໆທີ່ກະທົບຕໍ່ຜົນປະໂຫຍດລວມຂອງພັກ-ລັດ ກໍ່ຄືປະເທດຊາດ.

ສັງລວມແລ້ວ, ວຽກງານພະນັກງານ ແມ່ນໜຶ່ງໃນບັນຫາສຸດທີ່ສຳຄັນ ພົວພັນເຖິງການກຳອຳນາດ ແລະ ການຄົງຕົວຂອງພັກເຮົາກໍຄືຜົນສຳເລັດຂອງພາລະກິດປ່ຽນແປງໃໝ່ຮອບດ້ານ ມີຫຼັກການ ຂອງພັກ, ທັງແມ່ນບັນຫາຮີບດ່ວນສະເພາະໜ້າ ແລະ ທັງເປັນບັນຫາຍຸດທະສາດ ພື້ນຖານຍາວນານເພື່ອສ້າງໃຫ້ມີກຳລັງຖັນແຖວພະນັກງານ(ນຳພາ-ຄຸ້ມຄອງ ແລະ ວິຊາການ) ທີ່ພຽບພ້ອມ ແລະ ປ່ຽມລົ້ນໄປດ້ວຍຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ທີ່ໜັກແໜ້ນ, ມີນໍ້າໃຈເສຍສະຫຼະສູງ, ເປັນແບບຢ່າງທີ່ດີໃນການດຳລົງຊີວິດ, ມີຈັນຍາບັນ, ຈັນຍາທຳ, ມີຄວາມຮູ້ຄວາມສາມາດ-ຊຳນິຊຳນານງານ, ມີແບບແຜນເຮັດວຽກແບບວິທະຍາສາດ, ຮັບໃຊ້ປະຊາຊົນ ແລະ ປະເທດຊາດຢ່າງສຸດໃຈ, ສືບທອດພາລະກິດປະຕິວັດຂອງພັກ ແລະ ຂອງຊາດລາວ ໃຫ້ຍືນຍົງຄົງຕົວ; ສະນັ້ນ, ຄະນະພັກທຸກຂັ້ນ, ອົງການເສນາທິການກ່ຽວກັບວຽກງານພະນັກງານຕ້ອງຍົກສູງຄວາມຮັບຜິດຊອບຕິດຕາມ, ກວດກາ, ສະຫຼຸບຕີລາຄາ, ປະເມີນຜົນການປະຕິບັດວຽກງານພະນັກງານແຕ່ລະຂອດໃຫ້ເລິກເຊິ່ງ ຖືກຕ້ອງຫຼັກການ ແລະ ລະບຽບການທີ່ກຳນົດໄວ້ຢ່າງເຂັ້ມງວດ...ฯ

ຄະນະເຕັກນິກການແພດ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ເອົາໃຈໃສ່ປັບປຸງຄຸນນະພາບການຮຽນ-ການສອນ ເພື່ອສ້າງ ບຸກຄະລາກອນການແພດຕອບສະໜອງກັບຄວາມ ຮຽກຮ້ອງຕ້ອງການຂອງສັງຄົມ

ໂດຍ: ໄຊຊະນະ ພິລາວັນ

ພັກຍາມໃດກໍ່ໃຫ້ຄວາມສຳຄັນຕໍ່ວຽກງານສາທາລະນະສຸກ ເຊິ່ງເປັນວຽກໜຶ່ງທີ່ໄດ້ກຳນົດອອກໃນການປັບປຸງພື້ນຖານຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ເຊິ່ງວຽກງານດັ່ງກ່າວໄດ້ຕິດພັນກັບແບບແຜນການດຳລົງຊີວິດ, ເປັນປັດໄຈໜຶ່ງທີ່ສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ຍ້ອນເຫດຜົນດັ່ງກ່າວພັກເຮົາໄດ້ກຳນົດທິດທາງວຽກງານສາທາລະນະສຸກໄວ້ວ່າ: ຮັບປະກັນການບໍລິການ ດ້ວຍສາທາລະນະສຸກໃຫ້ທົ່ວເຖິງ ແລະ ມີຄຸນນະພາບ ຮັບປະກັນໃຫ້ທຸກຄົນໄດ້ເຂົ້າບໍລິການດ້ານສຸຂະພາບ ຍົກສູງຄວາມສາມາດໃນການປິ່ນປົວ ແລະ ປ້ອງກັນພະຍາດຢູ່ໂຮງໝໍຕ່າງໆ, ບຳລຸງ, ສ້າງພະນັກງານແພດໝໍໃຫ້ມີຄວາມຊຳນິຊຳນານ ແລະ ມີຈັນຍາບັນຮັບໃຊ້, ບໍລິການທີ່ດີ ສາມາດນຳໃຊ້ເຕັກໂນໂລຊີຢ່າງເໝາະສົມ.

ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ວາງກົນໄກ ແລະ ແບ່ງຄວາມຮັບຜິດຊອບໃຫ້ແກ່ຂະແໜງການ ແລະ ທ້ອງຖິ່ນ ເວົ້າລວມ, ເວົ້າສະເພາະກະຊວງສາທາລະນະສຸກ ເພີ່ມທະວີການຄຸ້ມຄອງ, ການຕິດຕາມກວດກາ, ແລະ ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການການປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂການແຜ່ລາມຂອງພະຍາດໂຄວິດ -19 ຢ່າງເປັນປົກກະຕິ ແລະ ທັນການ; ສືບຕໍ່ເອົາໃຈໃສ່ຂະຫຍາຍຕາໜ່າງສາທາລະນະສຸກໄປຫາເຂດຫ່າງໄກສອກຫຼີກຄຽງຄູ່ກັບການຍົກລະດັບບຸກຄະລາກອນແພດໝໍໃຫ້ມີຄຸນນະພາບ ແລະ ມີຈັນຍາບັນສູງ. ຕໍ່ກັບເນື້ອໃນຈິດໃຈດັ່ງກ່າວ ກະຊວງສາທາລະນະສຸກ ຍາມໃດກໍ່ໄດ້ເອົາໃຈໃສ່ນຳພາ-ຊີ້ນຳຂົງເຂດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍສະເພາະແມ່ນສະຖາບັນການສຶກສາຂຶ້ນກັບກະຊວງ ເປັນຕົ້ນແມ່ນມະຫາວິທະຍາໄລວິທະຍາສາດສຸຂະພາບ, ໂຮງຮຽນສາທາລະນະສຸກແຂວງ ເອົາໃຈໃສ່ສ້າງ, ຍົກລະດັບຫຼັກສູດການຮຽນໃຫ້ທັນສະໄໝ, ຕອບສະໜອງຄວາມຕ້ອງການຂອງການສ້າງ ແລະ ສະໜອງບຸກຄະລາກອນທີ່ມີຄຸນນະພາບໃນຂົງເຂດນະວັດຕະກຳຕ່າງໆ; ສຸມສ້າງຖັນແຖວຄູ-ອາຈານທີ່ໄດ້ມາດຕະຖານດ້ານວິຊາການ ແລະ ຈັນຍາບັນເພື່ອຕອບສະໜອງຄວາມຕ້ອງການໃນລະບົບການສຶກສາທຸກລະດັບ ແລະ ຮັບປະກັນມີລະດັບການສຶກສາພື້ນຖານທີ່ມີຄຸນນະພາບ.

ໃນນັ້ນ, ຄະນະເຕັກນິກການແພດ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ໄດ້ຮັບການສ້າງຕັ້ງຂຶ້ນຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2009 ແມ່ນກົງຈັກໜຶ່ງສັງກັດໃນໂຄງປະກອບກົງຈັກ ຂອງມະຫາວິທະຍາໄລ ວິທະຍາສາດສຸຂະພາບ ມີບົດບາດສຳຄັນໃນການປະກອບສ່ວນຜັນຂະຫຍາຍເນື້ອໃນຈິດໃຈດັ່ງກ່າວໃຫ້ບັນລຸຜົນສຳເລັດ ມີພາລະບົດບາດເປັນເສນາທິການໃຫ້ແກ່ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ແລະ ກະຊວງສາທາລະນະສຸກໃນການກໍ່ສ້າງ ແລະ ບຳລຸງສ້າງບຸກຄະລາກອນ, ນັກວິທະຍາສາດການແພດ, ກາຍະບຳບັດ, ເຕັກນິກລັງສີ-ຮູບພາບ ແລະ ຊ່າງອົງຄະທຽມ ແລະ ເຄື່ອງ

ຄໍ້າຊູຄົ້ນຄວ້າວິທະຍາສາດ ແລະ ການໃຫ້ບໍລິການວິຊາການແກ່ສັງຄົມທາງດ້ານເຕັກນິກການແພດ ປະກອບມີ 4 ພາກວິຊາ ແລະ 1 ພະແນກຄື: ພາກວິຊາວິທະຍາສາດການແພດ, ພາກວິຊາກາຍະບໍາບັດ, ພາກວິຊາເຕັກນິກລັງສີ-ຮູບພາບ, ພາກວິຊາຊ່າງອີງຄະທຽມ-ເຄື່ອງຄໍ້າຊູ ແລະ ພະແນກບໍລິຫານ ແລະ ວິຊາການ;

ໄລຍະຜ່ານມາ, ຄະນະເຕັກນິກການແພດ ໄດ້ເອົາໃຈໃສ່ຍົກສູງຄຸນນະພາບຄູ-ອາຈານທາງດ້ານວິຊາການດ້ວຍສົ່ງໄປຍົກລະດັບຄວາມຮູ້ໃນດ້ານຕ່າງໆ ເປັນຕົ້ນແມ່ນເຂົ້າຮ່ວມກອງປະຊຸມການຂຽນປຶ້ມຄູ່ມືການຮຽນ-ການສອນ ກ່ຽວກັບພະຍາດເອດເຂົ້າໃນການຮຽນ-ການສອນ; ເຂົ້າຮ່ວມກອງປະຊຸມການຂຽນປຶ້ມຄູ່ມືການຮຽນ-ການສອນກ່ຽວກັບວັກຊີນເຂົ້າໃນການຮຽນ-ການສອນ; ເປີດຊຸດອົບຮົມສ້າງຄວາມເຂັ້ມແຂງດ້ານເຕັກນິກລັງສີ, ການບໍລິຫານວຽກງານລັງສີວິທະຍາໃຫ້ແກ່ພະນັກງານພາກວິຊາລັງສີ ແລະ ອາຈານຮັບເຊີນທີ່ແຂວງອຸດົມໄຊ; ເຂົ້າຮ່ວມກອງປະຊຸມຝຶກອົບຮົມວຽກງານໄອທີໃນຫົວຂໍ້: ການສ້າງຫ້ອງຮຽນ ແລະ ສື່ການຮຽນ-ການສອນແບບອອນລາຍດ້ວຍ Google Class Room, Google Form ແລະ ເຕັກນິກຂອງການບັນທຶກວິດີໂອໜ້າຈໍດ້ວຍໂປຣແກຣມ Bandi Cam ທີ່ຫ້ອງສະໝຸດກາງ ມວສ; ເຂົ້າຮ່ວມກອງປະຊຸມປະຖົມນິເທດກ່ຽວກັບໂຄງຮ່າງຫຼັກສູດການຝຶກອົບຮົມຂອງຄູຝຶກຫຼັກສູດໄລຍະສັ້ນດ້ານວຽກງານການແພດຟື້ນຟູໜ້າທີ່ການ; ອາຈານສອນພາກວິຊາລັງສີເຂົ້າຮ່ວມກອງປະຊຸມອົບຮົມເພື່ອຍົກສູງຄຸນນະພາບໃຫ້ແກ່ເຕັກນິກສ່ອງລັງສີໃນຫົວຂໍ້: ເຕັກນິກການສ່ອງ MRI ແລະ CTscan; ອາຈານສອນ 02 ທ່ານເຂົ້າຮ່ວມອົບຮົມໃນໄລຍະສັ້ນກ່ຽວກັບການແນະນໍາຂອບສິ່ງແວດລ້ອມ ແລະ ສັງຄົມຂອງທະນາຄານໂລກທີ່ຣີສອດນາປ່າກວາງ, ເມືອງແກ້ວອຸດົມ, ແຂວງວຽງຈັນ; ເຂົ້າຮ່ວມກອງປະຊຸມປຶກສາຫາລືທາງ Online ກ່ຽວກັບການພັດທະນາ-ອອກແບບຫຼັກສູດວິຊາຄູວິທະຍາດ້ານແພດສາດສຶກສາ (Andragogyon Medical Edu Cation Training Programme); ຫົວໜ້າພາກວິຊາກາຍະບໍາບັດ ເຂົ້າຮ່ວມກອງປະຊຸມການປະເມີນຄູຝຶກຫຼັກ ກ່ອນການເດີນທາງໄປຝຶກອົບຮົມຢູ່ມະຫາວິທະຍາໄລຊຽງໃໝ່ ປະເທດໄທ ທີ່ຫ້ອງຝຶກອົບຮົມຂອງສູນການແພດຟື້ນຟູໜ້າທີ່ການ; ເຂົ້າຮ່ວມເປັນຄະນະກໍາມະການຮັບຜິດຊອບການສອບເສັງເອົານັກສຶກສາເຂົ້າຮຽນ ຢູ່ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ສົກສຶກສາ 2022-2023 ອາຈານສອນ 01 ທ່ານ ເຂົ້າຮ່ວມກອງປະຊຸມວິທີການສິດສອນຫົວຂໍ້ EPA based curriculum development and Implementation of the clinical curricuLum, ເຊິ່ງງານຄັ້ງນີ້ແມ່ນຊ່ຽວຊານຈາກທີມງານ ມະຫາວິທະຍາໄລ ອິນເຈ ສ. ເກົາຫລີ ເປັນຜູ້ບັນຍາຍ ທີ່ໂຮງແຮມຄຣາວພລາຊາ; ເຂົ້າຮ່ວມກອງປະຊຸມຮັບຮອງຫຼັກສູດການເຊື່ອມສານການໃຫ້ຢາກັນພະຍາດ (Vaccination) ສໍາລັບນັກສຶກສາແພດ ເຂົ້າໃນການຮຽນ-ການສອນ ໃນ ມວສ ໂດຍໃຊ້ງົບປະມານຂອງ (GAVI) ທີ່ໂຮງແຮມດອນຈັນພາເລດ; ເຂົ້າຮ່ວມຝຶກອົບຮົມກ່ຽວກັບການສ້າງຖານຂໍ້ມູນ ໂດຍມີນັກວິທະຍາກອນມາຈາກມະຫາວິທະຍາໄລ ລີຢົງ ທີ່ຫ້ອງຄອມພິວເຕີຊັ້ນ 1, ຕຶກສູນຝຶກອົບຮົມ; ເຂົ້າຮ່ວມກອງປະຊຸມລິເລີ່ມການສ້າງຕັ້ງໜ່ວຍງານປະເມີນຄວາມຄຸ້ມຄ່າທາງການແພດ ແລະ ການສະໜອງຂໍ້ມູນຫຼັກຖານ ໃຫ້ກັບວຽກງານນະໂຍບາຍສາທາລະນະສຸກ ໃນ ສປປ ລາວ ຄັ້ງທີ II ທີ່ໂຮງແຮມຄຣາວພລາຊາ; ເຂົ້າຮ່ວມອົບຮົມກຽມພ້ອມເປັນຄູຝຶກວຽກງານມາດຕະຖານຄຸນນະພາບດ້ານວິເຄາະການແພດແຫ່ງຊາດ ທີ່ໂຮງແຮມທະວີສຸກ, ເມືອງວັງວຽງ, ແຂວງວຽງຈັນ; ເຂົ້າຮ່ວມຝຶກອົບຮົມມາດຕະຖານແຫ່ງຊາດດ້ານວຽກງານຄຸນນະພາບຫ້ອງວິເຄາະທີ່ໂຮງແຮມໄຊກພານສໍາ, ແຂວງຫຼວງພະບາງ; ຫົວໜ້າພາກວິຊາກາຍະບໍາບັດ ເຂົ້າຮ່ວມຝຶກອົບຮົມກ່ຽວກັບບົດຮຽນດ້ານວິຊາການ ທີ່ຫ້ອງຝຶກອົບຮົມຂອງສູນການ

ແພດຟື້ນຟູໜ້າທີ່ການ; ວຽກງານຄົ້ນຄວ້າວິທະຍາສາດ ເຂົ້າຮ່ວມກອງປະຊຸມ ລິເລີ່ມໂຄງການຊ່ວຍເຫຼືອທາງດ້ານວິຊາການ Technical Assistant ຈາກທະນາຄານພັດທະນາອາຊີ (ADB) ທີ່ຫ້ອງປະຊຸມອໍາພີ, ມວສ; ເຂົ້າຮ່ວມຊຸດອົບຮົມວິທີວິທະຍາການຄົ້ນຄວ້າ, ການຂຽນບົດສະເໜີໂຄງການຄົ້ນຄວ້າ ໂດຍທຶນສະໜັບສະໜູນຈາກທະນາຄານພັດທະນາອາຊີ (ADB) ທີ່ຫ້ອງປະຊຸມໂຮງແຮມ Landmark, ຊັ້ນ 02; ນໍາສົ່ງອາຈານສອນ ຈໍານວນ 03 ທ່ານ ເຂົ້າຮ່ວມຊຸດອົບຮົມວິທີວິທະຍາການຄົ້ນຄວ້າ, ການຂຽນບົດສະເໜີໂຄງການຄົ້ນຄວ້າ ໂດຍທຶນສະໜັບສະໜູນຈາກທະນາຄານພັດທະນາອາຊີ (ADB); ອາຈານສອນ 03 ທ່ານສໍາເລັດການຝຶກອົບຮົມໄລຍະສັ້ນທີ່ປະເທດເກົາຫຼີກ່ຽວກັບພະຍາດຕິດເຊື້ອໂດຍທຶນ ຂອງລີຈິງຮຸກ;

ຄຽງຄູ່ກັນນັ້ນ, ຍັງໄດ້ສົ່ງຄູອາຈານໄປຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະຍາວນານຄື: ອາຈານສອນ 01 ທ່ານກໍາລັງສຶກສາຕໍ່ລະດັບປະລິນຍາເອກທີ່ປະເທດຍີ່ປຸ່ນສາຂາວິເຄາະການແພດພາຍໃຕ້ການໃຫ້ທຶນຂອງມະຫາວິທະຍາໄລໂຕກຽວ; ອາຈານສອນ 01 ທ່ານກໍາລັງສຶກສາຕໍ່ລະດັບປະລິນຍາໂທທີ່ປະເທດໄທສາຂາຊີວະ-ເຄມີ ພາຍໃຕ້ການໃຫ້ທຶນຂອງມະຫາວິທະຍາໄລຂອນແກ່ນ; ອາຈານສອນ 02 ທ່ານ ກໍາລັງເຮັດການວິໄຈ ຢູ່ທີ່ Yunnan Institute of Parasitic Diseases, ປະເທດຈີນ; ໄປຢ້ຽມຢາມແລກປ່ຽນບົດຮຽນດ້ານວິຊາການ ແລະ ປຶກສາຫາລື MOAທີ່ມະຫາວິທະຍາໄລຂອນແກ່ນລາຊະອານາຈັກໄທ. ຄະນະເຕັກນິກການແພດ ມີພະນັກງານຄູ-ອາຈານທັງໝົດ 51 ທ່ານ, ຍິງ 28 ທ່ານ, ປະລິນຍາເອກ 1 ທ່ານ, ປະລິນຍາໂທ 11 ທ່ານ, ຍິງ 6 ທ່ານ, ຊ່ຽວຊານ 3 ທ່ານ, ຍິງ 2 ທ່ານ, ປະລິນຍາຕີ 22 ທ່ານ, ຍິງ 13 ທ່ານ, ຊັ້ນສູງ 12 ທ່ານ, ຍິງ 6 ທ່ານ, ຊັ້ນຕົ້ນ 1ທ່ານ, ຍິງ 1 ທ່ານ ແລະ ພະນັກງານຂັບລົດ 1 ທ່ານ.

ມາຮອດປະຈຸບັນ ສາມາດພັດທະນາບຸກຄະລະກອນທາງດ້ານການແພດ ເຊິ່ງປະກອບມີ 8 ຫຼັກສູດ ຄື: ພາກວິຊາວິທະຍາສາດການແພດ ປະກອບມີ 4 ຫຼັກສູດຄື:ຫຼັກສູດຊ່ຽວຊານ ເລືອດວິທະຍາ, ຫຼັກສູດ ປະລິນຍາຕີ ວິເຄາະການແພດ, ຫຼັກສູດ ປະລິນຍາຕີ ວິເຄາະການແພດລະບົບຕໍ່ເນື່ອງ ແລະ ຫຼັກສູດ ອະນຸປະລິນຍາ ວິເຄາະການແພດລະບົບຕໍ່ເນື່ອງ, ປະກອບມີ 4 ຫຼັກສູດ ຄື: ຫຼັກສູດ ປະລິນຍາຕີ ວິເຄາະການແພດ ຈໍານວນ 46 ຄົນ, ຍິງ 26 ຄົນ, ຫຼັກສູດ ອະນຸປະລິນຍາ ວິເຄາະການແພດລະບົບຕໍ່ເນື່ອງ ຈໍານວນ 29 ຄົນ, ຍິງ 18 ຄົນ, ຫຼັກສູດ ປະລິນຍາຕີ ກາຍະບໍາບັດ ຈໍານວນ 31 ຄົນ, ຍິງ 21 ຄົນ, ຫຼັກສູດ ປະລິນຍາຕີ ເຕັກນິກລັງສີ-ຮູບພາບ ຈໍານວນ 23 ຄົນ, ຍິງ 8 ຄົນ ລວມທັງໝົດມີ 129 ຄົນ, ຍິງ 73 ຄົນ.

ໄປພ້ອມກັບຜົນງານ ແລະ ຜົນສໍາເລັດການຍົກລະດັບຄວາມຮູ້, ຄວາມສາມາດໃນການສິດສອນ ກໍ່ຄືການຍົກລະດັບຄວາມຮູ້ວິຊາການໃຫ້ຄູ-ອາຈານ ເພື່ອກໍ່ສ້າງບຸກຄະລາກອນການແພດໃນສາຂາຕ່າງໆທາງດ້ານປະລິມານ ແລະ ຄຸນນະພາບຫຼາຍພຽງໃດກໍ່ຕາມ, ແຕ່ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງ ກໍ່ຍັງມີບາງດ້ານທີ່ເປັນຂໍ້ຄົງຄ້າງ ທີ່ຕ້ອງໄດ້ເອົາໃຈໃສ່ເປັນຕົ້ນ:

1. ອາຈານທີ່ປະຈໍາການໃນແຕ່ລະພາກວິຊາມີໜ້ອຍ, ບໍ່ທັນພຽງພໍ (ຈໍານວນໜຶ່ງກໍ່ໄປຍົກລະດັບ) ເຮັດໃຫ້ການຕິດຕາມນັກສຶກສາລົງຝຶກຫັດບາງຄັ້ງກໍ່ບໍ່ທົ່ວເຖິງ; ອາຈານບາງທ່ານມີວຽກຫຼາຍ, ສອນຫຼາຍວິຊາ ເຮັດໃຫ້ການຂຶ້ນຫ້ອງສອນບໍ່ສະໝໍ່າສະເໝີ ແລະ ອຸປະກອນການຮຽນ-**ການສອນ ປຶ້ມ**ຕໍາລາຮຽນ, ເຄື່ອງມືໃນການນໍາພາຝຶກປະຕິບັດຕົວຈິງ ຍັງບໍ່ຕອບສະໜອງໄດ້.

2. ການຮຽນ-ການສອນ ຍັງມີບາງວິຊາ, ບາງອາຈານ ຍັງມີພາລະໜ້າທີ່ຫຼາຍ ບໍ່ສາມາດມາຂຶ້ນຫ້ອງສອນໄດ້ ຕາມຕາຕະລາງສອນ ເປັນສາເຫດໜຶ່ງ ຈຶ່ງເຮັດໃຫ້ຮໍ່າຮຽນບໍ່ທັນຕໍ່ເນື່ອງ ແລະ ເປັນປົກກະຕິ ເຮັດໃຫ້ນັກສຶກສາຈໍານວນໜຶ່ງ ບໍ່ໄດ້ເອົາໃຈໃສ່ໃນການຄົ້ນຄວ້າ, ຂາດຄວາມກະຕືລືລົ້ນ, ເປັນເຈົ້າການໃນການຮູ້ດ້ວຍ

ຕົນເອງ.

3. ຈຳນວນຄູ-ອາຈານຍັງມີຈຳນວນຈຳກັດ ເຮັດໃຫ້ບາງຄັ້ງການລົງຕິດຕາມການຝຶກງານ ຂອງນັກສຶກສາຢູ່ຕາມສູນ, ໂຮງໝໍ ຍັງບໍ່ທັນໄດ້ລົງຕິດຕາມຢ່າງໃກ້ຊິດ, ເປັນປົກກະຕິດີເທົ່າທີ່ຄວນ ເນື່ອງຈາກຍັງມີວຽກສິດສອນ ແລະ ວຽກບໍລິຫານ ຈຶ່ງເຮັດໃຫ້ນັກສຶກສາບາງຄົນບໍ່ເອົາໃຈໃສ່, ມັກຂາດການລົງຝຶກງານ ແລະ ບໍ່ປະຕິບັດລະບຽບຂອງສູນ ແລະ ໂຮງໝໍວາງອອກ.

4. ຄູ-ອາຈານສອນ ແລະ ຜູ້ເຂົ້າຮຽນ ຈຳນວນໜຶ່ງຍັງບໍ່ທັນເປັນເຈົ້າການຢ່າງຕັ້ງໜ້າໃນຂະບວນການຮ່ຳຮຽນ ເຮັດໃຫ້ຄຸນນະພາບຂອງການຮັບຮູ້ບໍ່ທັນສູງ; ຄູ-ສອນບາງຄົນຍັງບໍ່ໄດ້ສົມທົບຢ່າງແໜ້ນແຟ້ນການສິດສອນທາງດ້ານທິດສະດີ-ພຶດຕິກຳ ບໍ່ທັນກົມກຽວ ເຮັດໃຫ້ການຖ່າຍທອດຍັງບໍ່ທັນໄດ້ຕາມເປົ້າໝາຍທີ່ກຳນົດໄວ້

5. ການຄຸ້ມຄອງການຮຽນ-ການສອນບາງຄັ້ງຍັງບໍ່ທັນເຂັ້ມງວດ, ຄຸນນະພາບຍັງບໍ່ມີປະສິດທິຜົນດີ ເປັນຕົ້ນແມ່ນກຳມະການຍາມຫ້ອງສອບເສັງ, ການຕີລາຄາປະເມີນຜົນການຮຽນຂອງນັກຮຽນບໍ່ທັນຖືກກັບສະພາບຕົວຈິງ ມີລັກສະນະ ນະໂຍບາຍສູງ.

ເພື່ອເຮັດໃຫ້ການຍົກສູງຄຸນນະພາບການຮຽນ-ການສອນມີປະສິດທິພາບ ແລະ ປະສິດທິຜົນສູງ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການສັງຄົມໃນໄລຍະໃໝ່ ຄະນະເຕັກນິກການແພດ ຕ້ອງໄດ້ສືບຕໍ່ເອົາໃຈໃສ່ບາງເນື້ອໃນຕົ້ນຕໍດັ່ງນີ້:

ໜຶ່ງ. ເພີ່ມທະວີການລົງໃກ້ຊິດຕິດແທດຂອງຄູ-ອາຈານຕໍ່ກັບບັນດາຖັນແຖວນັກສຶກສາໃຫ້ດີຂຶ້ນ ເພື່ອຊ່ວຍແນະນຳນັກສຶກສາຄົ້ນຄວ້າຮ່ຳຮຽນ ແລະ ຝຶກຝົນຫຼໍ່ຫຼອມຕົນເອງ ເກັບກຳສະພາບແນວຄິດ ການປະພຶດຕົນ, ຂໍ້ຂັດຂ້ອງໝອງໃຈ ແລະ ຂໍ້ຄິດເຫັນຕ່າງໆ ເພື່ອພິຈາລະນາແກ້ໄຂໃຫ້ທັນເວລາ. ເພີ່ມທະວີຄວາມເອົາໃຈໃສ່ຂອງຄູປະຈຳຫ້ອງ ໂດຍສະເພາະແມ່ນການປະຕິບັດໂຄງການຫຼັກສູດ ການຮຽນ-ການສອນຂອງໂຮງຮຽນ, ການນຳໃຊ້ເອກະສານ, ປື້ມຕຳລາ, ປື້ມຄູ່ມືໃນແຕ່ລະຊັ້ນຮຽນໃຫ້ຖືກຕ້ອງ, ຄົບຊຸດ ແລະ ເປັນລະບົບ, ທັງຮັບປະກັນທາງດ້ານວິທະຍາສາດ, ສອດຄ່ອງກັບໜ້າທີ່ການເມືອງໃນແຕ່ລະໄລຍະ, ນຳໃຊ້ຫຼັກການ ແລະ ຈັດຕັ້ງວິທີການສິດສອນແບບໃໝ່ໂດຍຖືເອົານັກສຶກສາເປັນໃຈກາງ.

ສອງ. ຄະນະບໍດີ ຄະນະເຕັກນິກການແພດ ຕ້ອງເອົາໃຈໃສ່ນຳພາ-ຊີ້ນຳ ແຕ່ລະພາກວິຊາໃນຄະນະເຕັກນິກການແພດຢ່າງເປັນລະບົບ ແລະ ມີລັກສະນະວິທະຍາສາດ ເພື່ອຈັດຕັ້ງປະຕິບັດຕາມຫຼັກສູດການຮຽນ-ການສອນ ໃນແຕ່ລະພາກຮຽນໃຫ້ມີປະສິດທິຜົນ. ພ້ອມກັນນັ້ນ, ຈັດຕັ້ງປະຕິບັດໃຫ້ໄດ້ຕາມຫຼັກສູດ, ເພີ່ມທະວີຄວາມບຸກບືນ ຊອກຮູ້ຮອບດ້ານ ແລະ ບັນດາບົດຮຽນໃໝ່ຈາກພຶດຕິກຳຕົວຈິງເຂົ້າໃນຫຼັກສູດການສິດສອນ.

ສາມ. ຕ້ອງເພີ່ມທະວີການກໍ່ສ້າງ ແລະ ບຳລຸງພະນັກງານ, ຄູອາຈານພາຍໃນໂຮງຮຽນ ດ້ວຍຫຼາຍຮູບ, ຫຼາຍສີສັນ, ດ້ວຍການສົ່ງໄປກໍ່ສ້າງຍົກລະດັບຄວາມຮູ້ໃໝ່ໆ ທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງ ເພື່ອມາໝູນໃຊ້ຢ່າງປະດິດສ້າງເຂົ້າໃນການຮຽນ-ການສອນ. ພ້ອມກັນນັ້ນ, ກໍ່ຕ້ອງກຳນົດມາດຕະຖານໃນການຄັດເລືອກຄູ-ສອນ ໃຫ້ຊັດເຈນ ເພື່ອໃຫ້ໄດ້ຜູ້ທີ່ມີຄວາມຮູ້, ຄວາມສາມາດພຽງພໍ ແລະ ຕ້ອງຈັດຄູ-ສອນໃຫ້ເໝາະສົມກັບຫົວບົດ ຫຼື ຫົວຂໍ້ ທີ່ຈະຂຶ້ນບັນລະຍາຍ ເພື່ອສ້າງຄວາມຊັດເຈນ ແລະ ຄວາມເຊື່ອໝັ້ນໃຫ້ແກ່ຜູ້ເຂົ້າຮຽນຫຼາຍຂຶ້ນ.

ສີ່. ຕ້ອງເພີ່ມທະວີການຈັດຕັ້ງປະຕິບັດຫຼັກສູດໃຫ້ເຂັ້ມງວດ ໂດຍສະເພາະການຮຽນ-ການສອນ ຕ້ອງຖືເອົານັກສຶກສາເປັນໃຈກາງ ເພາະມັນຈະສ້າງໄດ້ຄວາມກ້າຫານ ແລະ ກ້າເວົ້າໃນສິ່ງທີ່ຖືກຕ້ອງ ແລະ ເໝາະສົມ, ອີກດ້ານໜຶ່ງ ແມ່ນເປັນການສ້າງພື້ນຖານກຽມຄວາມພ້ອມໃຫ້ແກ່ການປະຕິບັດໜ້າທີ່ຂອງເຂົາເຈົ້າເອງໃນ

ອ່ານຕໍ່ໜ້າ 50

ຍ້ອນດຸໝັ່ນຂະຫຍັນພຽນ ແລະ ປະຢັດມັດທະຍັດ ເຮັດໃຫ້ຄອບຄົວມີຊີວິດການເປັນຢູ່ດີຂຶ້ນ

ໂດຍ: ວິລະສະໄໝ ຍົດບຸນມີ

ການປູກຝັງ ແລະ ລ້ຽງສັດເປັນອາຊີບຕົ້ນຕໍຢູ່ເຂດຊົນນະບົດສ່ວນໃຫຍ່ ເພາະວ່າຢູ່ເຂດຊົນນະບົດມີເນື້ອທີ່ທຳການຜະລິດທີ່ກວ້າງຂວາງ, ແຫຼ່ງນ້ຳລຳເຊທີ່ອຸດົມສົມບູນເປັນເງື່ອນໄຂເໝາະສົມເປັນພື້ນຖານສຳຄັນ, ສ້າງລາຍຮັບໝັ້ນຄົງໃຫ້ຫຼາຍຄອບຄົວເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນບົນພື້ນຖານເງື່ອນໄຂດັ່ງກ່າວນັ້ນ ຄວາມດຸໝັ່ນຂະຫຍັນພຽນ, ປະຢັດມັດທະຍັດ ກໍ່ແມ່ນປັດໃຈໜຶ່ງທີ່ຂາດບໍ່ໄດ້ ເພື່ອເຮັດໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ກຳນົດໄວ້ ເພື່ອສ້າງເສດຖະກິດຄອບຄົວຕົນເອງໃຫ້ດີຂຶ້ນກວ່າເກົ່າ. ດັ່ງສະຫາຍ ບຸນກອງ ສີປະເສີດ ເປັນຄອບຄົວໜຶ່ງທີ່ຍຶດຖືອາຊີບປູກຝັງ ແລະ ລ້ຽງສັດເປັນສິນຄ້າໄປພ້ອມກັນ ເຊິ່ງໃນແຕ່ລະປີສາມາດສ້າງລາຍຮັບສູງພໍສົມຄວນ ຈາກຄອບຄົວທີ່ທຸກຍາກຂາດເຂີນຈົນກາຍມາເປັນຄອບຄົວມີຢູ່, ມີກິນທັງເຫຼືອກິນ ແລະ ຂາຍເປັນສິນຄ້າຈົນກາຍເປັນຄອບຄົວຕົວແບບ.

ສະຫາຍ ບຸນກອງ ສີປະເສີດ ອາຍຸ 67 ປີ, ປະຊາຊົນ ບ້ານໂພໄຊ, ເມືອງໄຊເສດຖາ, ແຂວງອັດຕະປື ປີ 1975 ໄດ້ສ້າງຄອບຄົວກັບ ນາງ ໂຄຕະມີ ດອນພູຫຼວງ ມີລູກນຳກັນ 7 ຄົນ. ສະຫາຍໄດ້ເລົ່າສູ່ທີມງານຟັງວ່າ: ໃນສະໄໝກ່ອນ ຕົນເອງແມ່ນເປັນຫົວໜ້າ**ໜ່ວຍຊາວນາ** ນຳພາການຜະລິດເຂົ້າພາຍໃນບ້ານ ຍ້ອນການຈັດຕັ້ງພັກ-ລັດເຫັນໄດ້ຄວາມສາມາດ, ຄວາມກະຕືລືລົ້ນໃນການປະກອບສ່ວນ ເພື່ອສ່ວນລວມໃນການພັດທະນາຊີວິດການເປັນຢູ່ຊ່ວຍເຫຼືອປະຊາຊົນໃນ**ໜ່ວຍ**ຢ່າງມີຄວາມຮັບຜິດຊອບ. ດັ່ງນັ້ນ ການຈັດຕັ້ງພັກພາຍໃນບ້ານເຫັນຄວາມສຳຄັນ ແລະ ຄວາມສາມາດໃນການນຳພາຂອງສະຫາຍ ຈຶ່ງໄດ້ກຳນົດເອົາສະຫາຍເພື່ອເປັນເປົ້າໝາຍຂະຫຍາຍເຂົ້າເປັນສະມາຊິກພັກ ແລະ ໄດ້ສົ່ງສະຫາຍຮຽນສະໜັບສະໜູນ, ຮຽນກົດລະບຽບພັກ. ປີ 1978 ໄດ້ເຂົ້າເປັນສະມາຊິກພັກສົມບູນ ແລະ ໃນປີ 1996 ໄດ້ຖືກແຕ່ງຕັ້ງໃຫ້ເປັນເລຂາໜ່ວຍພັກບ້ານ ໃນໄລຍະປະຕິບັດໜ້າທີ່ຢູ່ການຈັດຕັ້ງຂອງບ້ານ ສະຫາຍຍັງໄດ້ຍຶດຖືອາຊີບເຮັດນາປູກເຂົ້າ ແລະ ປູກພືດປະສົມປະສານ ມາຮອດປີ 2008 ສະຫາຍຈຶ່ງໄດ້ຕັດສິນໃຈຂໍລາອອກພັກຜ່ອນ ຈາກການເປັນເລຂາໜ່ວຍພັກບ້ານ, ເຖິງວ່າບໍ່ໄດ້ເປັນເລຂາ ແຕ່ສະຫາຍກໍ່ຍັງຮັບໜ້າທີ່ເປັນປະທານແນວໂຮມຂອງບ້ານຊ່ວຍເຕົ້າໂຮມຄວາມສາມັກຄີພາຍໃນບ້ານ ແລະ ຊ່ວຍວຽກການຈັດຕັ້ງບ້ານປົກກະຕິ.

ພາຍຫຼັງທີ່ຢຸດຮັບໜ້າທີ່ເປັນເລຂາໜ່ວຍພັກສະຫາຍກໍ່ໄດ້ມີເວລາຫຼາຍຂຶ້ນຈາກເມື່ອກ່ອນ ແລະ ມີເວລາຫັນມາພັດທະນາຊີວິດການເປັນຢູ່ຂອງຄອບຄົວ, ສະຫາຍຈຶ່ງໄດ້ປຶກສາກັນກັບຄອບຄົວຊອກຫາວິທີໃນການສ້າງລາຍໄດ້ເພີ່ມ ຍ້ອນມີຄວາມຮູ້ພື້ນຖານທາງດ້ານການປູກຝັງ-ລ້ຽງສັດ ໂດຍອີງໃສ່ນະໂຍບາຍຂອງພັກ-ລັດເວລາໃດກໍ່ເອົາໃຈໃສ່ຊ່ວຍເຫຼືອ, ສ້າງເງື່ອນໄຂອຳນວຍຄວາມສະດວກ ເພື່ອຍົກລະດັບຊີວິດ

ການເປັນຢູ່ຂອງປະຊາຊົນບັນດາເຜົ່າພົ້ນທຸກ ແລະ ມີຊີວິດການເປັນຢູ່ດີຂຶ້ນເວົ້າລວມ, ເວົ້າສະເພາະຢູ່ທ້ອງຖິ່ນຮາກຖານ ຍາມໃດກໍ່ເອົາໃຈໃສ່ນຳພາ-ຊີ້ນຳ ແລະ ສົ່ງເສີມການຜະລິດເປັນສິນຄ້າ ເປັນຕົ້ນແມ່ນການປູກຝັງ-ລ້ຽງສັດ. ສະນັ້ນ ຕົນເອງ ແລະ ຄອບຄົວຈຶ່ງໄດ້ຕັດສິນໃຈເອົາທຶນຈຳນວນໜຶ່ງຈາກການເກັບທ້ອນ ເປັນຈຳນວນເງິນ 75 ລ້ານກີບ ມາລົງທຶນທົດລອງການປູກຝັງ ແລະ ລ້ຽງສັດແບບປະສົມປະສານ ເພື່ອສ້າງລາຍໄດ້ໝັ້ນຄົງໃຫ້ແກ່ຄອບຄົວ. ໂດຍເລີ້ມຈາກການບຸກເບີກດິນທີ່ມີຢູ່ແລ້ວໃນເນື້ອທີ 1,5 ເຮັກຕາ ມາເຮັດຮົ້ວອ້ອມ, ເຈາະນ້ຳບາດານ ແລະ ດຶງໄຟເຂົ້າສວນ, ຈາກນັ້ນກໍ່ກຽມດິນໃນການປູກພືດຜັກຫຼາຍຊະນິດເປັນຕົ້ນແມ່ນຜັກບົ່ວ ເພາະເປັນພືດທີ່ປູກງ່າຍ, ຂາຍງ່າຍ ແລະ ພືດຜັກຕ່າງໆຈຳນວນໜຶ່ງ. ການປູກແມ່ນໃຊ້ວິທີການປູກແບບທຳມະຊາດ ໃສ່ພຽງແຕ່ຝຸ່ນຄອກ. ໄລຍະ 2-3 ເດືອນຕໍ່ມາ ເຫັນວ່າຜັກເລີ່ມໃຫຍ່ ແລະ ສາມາດເກັບຂາຍໄດ້ເທື່ອລະໜ້ອຍ, ມາຮອດປີ 2020 ສາມາດເກັບຜັກທີ່ປູກນັ້ນ ສົ່ງຂາຍຕະຫຼາດພາຍໃນເມືອງ, ແຂວງ ແລະ ຮ້ານອາຫານເປັນຈຳນວນຫຼາຍຂຶ້ນ. ໃນປີດັ່ງກ່າວສະເພາະການປູກຜັກສາມາດສ້າງລາຍຮັບໃຫ້ຄອບຄົວ 90 ກວ່າລ້ານກີບ/ປີ. ເມື່ອເຫັນລາຍໄດ້ທີ່ເພີ່ມຂຶ້ນ ຄອບຄົວຈຶ່ງມີແຮງຈູງໃຈໃນການປູກ ຈຶ່ງພາກັນສຸມກຳລັງແຮງ ເພື່ອຂະຫຍາຍການປູກເພີ່ມຂຶ້ນ. ຄຽງຄູ່ກັບການປູກພືດແລ້ວ ຍັງໄດ້ລ້ຽງສັດຕື່ມອີກຄື: ລ້ຽງເປັດ,

ລ້ຽງໄກ່ ແລະ ລ້ຽງງົວ ເຊິ່ງການລ້ຽງງົວແມ່ນທຸກໆ 2 ປີ ຂາຍອອກເທື່ອໜຶ່ງ ຈຳນວນ 20 ກວ່າໂຕ ສະເລ່ຍມູນຄ່າ 45 ລ້ານກວ່າກີບ. ສ່ວນເປັດ, ໄກ່ ສາມາດຂາຍໄດ້ 21 ລ້ານກີບ/ປີ ຈາກກິດຈະການທັງໝົດ ສາມາດສ້າງລາຍຮັບ 168 ລ້ານກີບ/ປີ.

ໄປຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ, ກໍ່ມີບາງດ້ານທີ່ເປັນຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ໂດຍສະເພາະສະພາບດິນຟ້າອາກາດບາງປີກໍ່ບໍ່ທັນເອື້ອອຳນວຍ, ອີກດ້ານໜຶ່ງ ຕົນເອງຍັງບໍ່ມີຄວາມຮູ້ເຕັກນິກວິຊາການເທົ່າທີ່ຄວນ ອາໄສພຽງການປະຕິບັດຕົວຈິງ

ແລະ ສື່ກສາຈາກສື່ອອນລາຍ ຈຶ່ງຍັງບໍ່ທັນມີວິທີຮັບມືຕໍ່ສະພາບການປ່ຽນແປງດິນຟ້າອາກາດ ໂດຍສະເພາະໃນລະດູຝົນ ບໍ່ມີຜ້າຫຸ້ມຫໍ່ ແລະ ໜ້າແລ້ງບໍ່ມີຜ້າກັນແສງ ແລະ ຍັງບໍ່ທັນມີຝຸ່ນສະໜອງໄດ້ທັນຕາມຄວາມຕ້ອງການຂອງເນື້ອທີ່ປູກ.

ຈາກຜົນສໍາເລັດທີ່ກ່າວມານັ້ນໄດ້ເຮັດໃຫ້ຄອບຄົວມີລາຍຮັບສູງຂຶ້ນ ແລະ ຊີວິດການເປັນຢູ່ດີຂຶ້ນ ສິ່ງທີ່ເຫັນໄດ້ປະຈັກຕາແມ່ນມີ ລົດຈັກ 4 ຄັນ, ລົດໄຖ 1 ຄັນ, ເຮືອນ 1 ຫຼັງ, ດິນປູກຝັງ-ລ້ຽງສັດ 1,5 ເຮັກຕາ, ດິນນາ 3,3 ເຮັກຕາ. ນອກນັ້ນ, ຍັງມີເງິນເກັບທ້ອນ ແລະ ສົ່ງລູກຮຽນ. ນອກຈາກນັ້ນ, ສະຫາຍ ຍັງມີແຜນທີ່ຈະຂະຫຍາຍການປູກຂຶ້ນຕື່ມ ເຊິ່ງພືດທີ່ຈະນໍາມາປູກແມ່ນໝໍ່ໄມ້ເພາະເຫັນວ່າໝໍ່ໄມ້ເປັນທີ່ຕ້ອງການຂອງຕະຫຼາດ ແລະ ມີລາຄາສູງ. ທັງໝົດນັ້ນ, ກໍ່ຍ້ອນຄວາມອົດທົນ, ສູ້ຊົນ, ຄວາມດຸໝັ່ນຂະຫຍັນພຽນ, ປະຢັດມັດທະຍັດ ແລະ ແນວທາງນະໂຍບາຍຂອງພັກ-ລັດທີ່ສົ່ງເສີມອາຊີບກະສິກໍາປູກຝັງ-ລ້ຽງສັດ ເພື່ອເປັນສິນຄ້າ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ເຮັດໃຫ້ຄອບຄົວຂອງສະຫາຍ ບຸນກອງ ສີປະເສີດ ເປັນຄອບຄົວທີ່ຫຼຸດພົ້ນຈາກຄວາມທຸກຍາກ ຈົນກາຍເປັນຄອບຄົວຕົວແບບຂອງບ້ານ...ຯ

ຄະນະເຕັກນິກການແພດ ມະຫາວິທະຍາໄລ...

ຕໍ່ຈາກໜ້າ 47

ຕໍ່ໜ້າ ທັງຮັບປະກັນໄດ້ຄຸນນະພາບ ແລະ ປະສິດທິພາບສູງ. ດັ່ງນັ້ນ, ຕ້ອງເພີ່ມທະວີຄວາມເອົາໃຈໃສ່ໃນການສົນທະນາ, ແລກປ່ຽນບົດຮຽນລະຫວ່າງນັກສຶກສາກັບຄູ-ອາຈານ, ນັກສຶກສາກັບນັກສຶກສາດ້ວຍກັນໃຫ້ນັບມື້ຫຼາຍຂຶ້ນ.

ຫ້າ. ການຄຸ້ມຄອງການຮຽນ-ການສອນຄວນຍົກສູງດ້ານລະບຽບຕ່າງໆພາຍໃນໂຮງຮຽນຢ່າງເຂັ້ມງວດ ເຊັ່ນ: ກົດລະບຽບຂອງໂຮງຮຽນວາງອອກ ພ້ອມກັນນັ້ນ, ກໍ່ຕ້ອງເອົາໃຈໃສ່ປະຕິບັດນະໂຍບາຍທີ່ເໝາະສົມໃຫ້ແກ່ຄູ-ອາຈານທີ່ປະກອບສ່ວນໃນການສິດສອນເພື່ອເຮັດໃຫ້ພະນັກງານຄູອາຈານມີຄວາມຫ້າວຫັນ ແລະ ເປັນເຈົ້າການໃນການປະກອບສ່ວນຢ່າງຕັ້ງໜ້າໃນການສິດສອນເຮັດໃຫ້ການຖ່າຍທອດບົດຮຽນ ເຕັມໄປດ້ວຍຄຸນນະພາບ.

ສັງລວມແລ້ວ, ການຍົກສູງຄຸນນະພາບການຮຽນ-ການສອນ ຢູ່ຄະນະເຕັກນິກການແພດມະຫາວິທະຍາໄລ ວິທະຍາສາດສຸຂະພາບ ແມ່ນການຍົກສູງຄຸນນະພາບຂອງຄູ-ອາຈານໃຫ້ມີຄວາມສາມາດພຽງພໍໃນການກໍ່ສ້າງ-ບໍາລຸງບຸກຄະລາກອນແພດໝໍທີ່ມີຄຸນນະພາບຮັບໃຊ້ສັງຄົມ ສະນັ້ນ, ຄະນະພັກ, ຄະນະນໍາຢູ່ຄະນະເຕັກນິກການແພດ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ຕ້ອງໄດ້ຍົກສູງຄວາມເປັນເຈົ້າການໃນການຕິດຕາມ, ກວດກາ, ກໍາສະພາບໃຫ້ໄດ້ການຮຽນ-ການສອນ ຊອກໃຫ້ເຫັນຖັນແຖວພະນັກງານຄູ-ອາຈານທີ່ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດ, ມີນໍ້າໃຈເສຍສະຫຼະ ເພື່ອສ້າງເປັນຄູ-ອາຈານຫຼັກແຫຼ່ງ, ພະນັກງານນໍາພາ-ຄຸ້ມຄອງທີ່ຈະສືບທອດໃນການສິດສອນນັກສຶກສາໃຫ້ກາຍເປັນນັກວິຊາການສາທາລະນະສຸກທີ່ມີຄວາມຮູ້, ຄວາມສາມາດ ແລະ ມີຈັນຍາບັນເພື່ອອອກຮັບໃຊ້ສັງຄົມ ແລະ ປະກອບສ່ວນໃນການສ້າງສາ ແລະ ພັດທະນາປະເທດຊາດ...ຯ

ລັກສະນະພິເສດການຄັດເລືອກ ແລະ ແຕ່ງຕັ້ງ ພະນັກງານການນຳ ຂອງ ສປ ຈີນ

ໂດຍ: ສຸກສະຫວາດ ເທບພະວົງ

ການຄັດເລືອກບຸກຄົນໃດໜຶ່ງຂຶ້ນມາເປັນຜູ້ນຳ ເພື່ອນຳພາອົງການຈັດຕັ້ງ ແລະ ໜ່ວຍງານຂອງຕົນບັນລຸເປົ້າໝາຍວຽກງານທີ່ຂັ້ນເທິງມອບໝາຍໃຫ້ຖືເປັນວຽກສຳຄັນໜຶ່ງຂອງຄະນະຈັດຕັ້ງແຕ່ລະຂັ້ນ ແລະ ກົມຈັດຕັ້ງ-ພະນັກງານບັນດາກະຊວງ-ອົງການ, ເພາະການແຕ່ງຕັ້ງບຸກຄົນໜຶ່ງມາຮັບໜ້າທີ່ໃໝ່ ກໍ່ປຽບເໝືອນການສ້າງເສັ້ນທາງໃໝ່ແຫ່ງການພັດທະນາອົງການຈັດຕັ້ງນັ້ນໆ. ສປ ຈີນເປັນປະເທດໜຶ່ງທີ່ໃຫ້ຄວາມສຳຄັນກ່ຽວກັບການບໍລິຫານບຸກຄະລາກອນຂອງຕົນ ໃຫ້ຮັບປະກັນຄຸນນະພາບ ແລະ ມີປະສິດທິພາບສູງ ແລະ ແຕ່ງຕັ້ງພະນັກງານການນຳດຳລົງຕຳແໜ່ງນຳພາ-ຄຸ້ມຄອງເຮັດໜ້າທີ່ສຳຄັນໃນການນຳພາ-ຊີ້ນຳທີ່ຖືກຕ້ອງ, ສອດຄ່ອງ ແລະ ເໝາະສົມກັບຕຳແໜ່ງ ຕາມເປົ້າໝາຍ, ຖືກກັບຄວາມຮູ້ຄວາມສາມາດຕົວຈິງຂອງບຸກຄົນນັ້ນໆ ແມ່ນບັນຫາສຳຄັນຕັດສິນຕໍ່ຜົນໄດ້ຜົນເສຍຂອງການຈັດຕັ້ງ. ສະນັ້ນ, ຄໍລຳບົດຮຽນຕ່າງປະເທດສະບັບນີ້, ຈະພາທ່ານຜູ້ອ່ານມາຖອດຖອນບົດຮຽນກ່ຽວກັບກົນໄກ ແລະ ວິທີການໃນການຄັດເລືອກ-ແຕ່ງຕັ້ງພະນັກງານການນຳຂອງ ສປ ຈີນ ວ່າມີລັກສະນະພິເສດທີ່ພົ້ນເດັ່ນຄືແນວໃດ? ມີວິທີການແບບໃດແດ່ ເຊິ່ງສະແດງອອກໃນດ້ານຕ່າງໆດັ່ງນີ້:

1. ມາດຕະຖານການຄັດເລືອກ: "ຍຶດໝັ້ນໃນຫຼັກການຄັດເລືອກຄົນທີ່ພຽງພ້ອມທັງຄຸນສົມບັດ ແລະ ຄວາມຮູ້ຄວາມສາມາດ, ແຕ່ຍຶດຖືຄຸນສົມບັດເປັນຫຼັກ"

ດ້ານຫຼັກການ, ບຸກຄົນທີ່ພຽງພ້ອມທັງຄຸນສົມບັດ ແລະ ຄວາມຮູ້ຄວາມສາມາດ, ການຍຶດຖືຄຸນສົມບັດເປັນຫຼັກ ແມ່ນຫຼັກການລວມໃນການຄັດເລືອກ-ແຕ່ງຕັ້ງຂອງພັກກອມມູນິດຈີນ, ຫຼັກການດັ່ງກ່າວເປັນເນື້ອໃນຕົ້ນຕໍທີ່ສະແດງໃຫ້ເຫັນເຖິງວິທີການຄັດເລືອກພະນັກງານ ແລະ ເປັນມາດຕະຖານພື້ນຖານສຳຄັນໃນການຄັດເລືອກ-ແຕ່ງຕັ້ງພະນັກງານ. ເປັນເງື່ອນໄຂຂັ້ນພື້ນຖານຈຳເປັນທີ່ກຳນົດໄວ້ໃນ "ກົດລະບຽບ ວ່າດ້ວຍວຽກງານງານການຄັດເລືອກ-ແຕ່ງຕັ້ງພະນັກງານການນຳພັກ-ລັດ" ໝາຍຄວາມວ່າພະນັກງານການນຳພັກ-ລັດທີ່ຖືກແຕ່ງຕັ້ງຂຶ້ນມາດຳລົງຕຳແໜ່ງຕ້ອງ "ມີຄວາມໜ້າເຊື່ອຖື ແລະ ມີແນວຄິດ, ທັດສະນະທາງດ້ານການເມືອງທີ່ໜັກແໜ້ນ, ມີລະດັບຄວາມຮູ້ທີ່ແນ່ນອນ, ມີຄວາມສາມາດໃນການປະຕິບັດວຽກງານທີ່ພົ້ນເດັ່ນ, ມີແນວຄິດ-ການປະພຶດຕົວທີ່ປອດໃສ ແລະ ເປັນທີ່ໄວ້ເນື້ອເຊື່ອໃຈຂອງປະຊາຊົນ" ເຊິ່ງໃນນັ້ນ, ຄຸນສົມບັດ ແລະ "ຄວາມສາມາດ" ແມ່ນປັດໄຈພື້ນຖານສອງດ້ານທີ່ພະນັກງານຂາດບໍ່ໄດ້. ຕ້ອງຮັບຮູ້ ແລະ ເຂົ້າໃຈກຳແໜ້ນຄວາມສຳພັນລະຫວ່າງ "ຄຸນສົມບັດ ແລະ ຄວາມສາມາດ" ປັດໄຈສຳຄັນແມ່ນຕ້ອງຍຶດຖືເອົາ "ຄຸນສົມບັດໄວ້ເປັນສິ່ງຕົ້ນຕໍປ່າງສະໝ່ຳສະເໝີ ໄປຄຽງຄູ່ກັບການ

ໃຫ້ຄວາມສຳຄັນກັບຄວາມຮູ້ຄວາມສາມາດ.

ສະນັ້ນ, ຈຶ່ງເວົ້າໄດ້ວ່າ: "ຄຸນສົມບັດ" ຂອງພະນັກງານແມ່ນຄຸນທາດດ້ານການເມືອງ, ຄຸນນະທຳດ້ານອາຊີບ, ສິນລະທຳໃນຄອບຄົວ ແລະ ຄຸນງາມຄວາມດີໃນສັງຄົມ. ສະນັ້ນ, ໃນເວລາທີ່ຄັດເລືອກນຳໃຊ້ຄົນ, ສຳຄັນຕ້ອງເບິ່ງວ່າພະນັກງານຄົນນັ້ນ ມີແນວຄິດຫຼັກໝັ້ນ ຫຼື ບໍ່, ຍຶດໝັ້ນການຮັບໃຊ້ຊາດ ເພື່ອປະຊາຊົນ ຫຼື ບໍ່, ເຮັດແທ້ທຳຈິງ ຫຼື ບໍ່, ຍຶດໝັ້ນໃນລະບອບປະຊາມະຕິ ຫຼື ບໍ່, ມີຄວາມປອດໃສຂາວສະອາດ ຫຼື ບໍ່ ແລະ ຍຶດໝັ້ນຫຼັກຈັນຍາບັນເປັນຮາກຖານ ຫຼື ບໍ່. ຕ້ອງເລືອກໃຊ້ພະນັກງານທີ່ເຊື່ອໝັ້ນໄດ້; ເລືອກໃຊ້ພະນັກງານທີ່ຍຶດຖືເອົາໜ້າທີ່ເປັນສິ່ງສຳຄັນ ແລະ ມີຄວາມຮັບຜິດຊອບ; ເລືອກໃຊ້ພະນັກງານທີ່ຍຶດຖືການເຮັດແທ້ທຳຈິງ; ເລືອກໃຊ້ພະນັກງານທີ່ຍຶດຖືຄວາມຄິດເຫັນຂອງປະຊາຊົນ ແລະ ຄົນດີທີ່ສັງຄົມຍອມຮັບ; ເລືອກໃຊ້ພະນັກງານທີ່ຍຶດໝັ້ນຄວາມປອດໃສຂາວສະອາດເປັນສິ່ງສູງສົ່ງ ແລະ ຢືນຢູ່ໃນກົດໝາຍເປັນຫຼັກ.

2. ວິທີການຄັດເລືອກ: "ຍຶດໝັ້ນຫຼັກການເປີດກວ້າງແບບປະຊາທິປະໄຕ ແລະ ປວງຊົນໃຫ້ການຍອມຮັບ

"ກົດລະບຽບ ວ່າດ້ວຍວຽກງານງານການຄັດເລືອກ-ແຕ່ງຕັ້ງພະນັກງານການນຳພັກ-ລັດ" ໄດ້ເນັ້ນຢ້ຳວ່າ ຕ້ອງເປີດກວ້າງຄວາມເປັນປະຊາທິປະໄຕເຂົ້າໃນວຽກງານຄັດເລືອກ-ແຕ່ງຕັ້ງ ໃຫ້ສູງຂຶ້ນອີກກ້າວໜຶ່ງ, ປະຕິບັດການເປີດກວ້າງໃຫ້ປວງຊົນມີສິດໃນການຮັບຮູ້, ສິດເຂົ້າຮ່ວມ, ສິດຄັດເລືອກ ແລະ ສິດກວດກາຕິດຕາມ ຕໍ່ການຄັດເລືອກ-ແຕ່ງຕັ້ງພະນັກງານ ເພື່ອເພີ່ມທະວີຄວາມໂປ່ງໃສຕໍ່ວຽກງານການຄັດເລືອກ-ແຕ່ງຕັ້ງ, ໃຫ້ຂະບວນການຄັດເລືອກຄົນ, ນຳໃຊ້ຄົນ ດຳເນີນການພາຍໃຕ້ແສງສະຫວ່າງການນຳພາລວມ. ປະຈຸບັນ, ພັກກອມມູນິດຈີນ ມີລະບຽບຂັ້ນຕອນການຄັດເລືອກແຕ່ງຕັ້ງການນຳພັກ-ລັດ ລວມ 6 ຂັ້ນຕອນພື້ນຖານຄື: ຖືກທັກຖາມແບບປະຊາທິປະໄຕ, ຕິດຕາມ, ກວດກາ, ບົ່ມເພາະກໍ່ສ້າງ, ປຶກສາຫາລືຕົກລົງກັນ, ສະເໜີລາຍຊື່ຕາມກົດໝາຍ ແລະ ປຶກສາຫາລືກັນແບບປະຊາທິປະໄຕ ຈຶ່ງສາມາດຂຶ້ນດຳລົງຕຳແໜ່ງໄດ້. ຄຽງຄູ່ກັນນັ້ນ, ວິທີການຄັດເລືອກຍັງໄດ້ຜ່ານການປະຕິຮູບຮອບດ້ານ ຈົນກາຍເປັນກົນໄກທີ່ຖືກຕ້ອງຢ່າງເປັນລະບົບເຊັ່ນ: ໃນຂະນະຍຶດໝັ້ນການສະເໜີຊື່ແບບປະຊາທິປະໄຕເປັນຫຼັກການອັນຈຳເປັນພື້ນຖານໃນການຄັດເລືອກ-ແຕ່ງຕັ້ງພະນັກງານ, ຍັງຕ້ອງຕັ້ງໜ້າຊຸກຍູ້ການປະເມີນ, ການສຳຫຼວດຄວາມຄິດເຫັນແບບປະຊາທິປະໄຕ ແລະ ໃຊ້ໄລຍະເວລາໃນການສັງເກດການ, ເຮັດໃຫ້ປວງຊົນໄດ້ເຂົ້າເຖິງການຄັດເລືອກ-ແຕ່ງຕັ້ງພະນັກງານໃຫ້ກວ້າງຂວາງຂຶ້ນກວ່າເກົ່າ, ຍົກສູງປະສິດທິພາບໃນການສັງເກດການ: ດຳເນີນການປະກາດການສັງເກດການລ່ວງໜ້າ ແລະ ການປະກາດຜົນກ່ອນດຳລົງຕຳແໜ່ງຕ່າງໆ, ນຳໃຊ້ວິທີການທີ່ເຮັດໃຫ້ປວງຊົນຮັບຮູ້ ແລະ ສ່ອງແສງບັນຫາຂຶ້ນມາ ເພື່ອຮັບຟັງເອົາຄຳຄິດເຫັນຈາກປວງຊົນຢ່າງກວ້າງຂວາງ. ຜ່ານມາດຕະການຕ່າງໆເຫຼົ່ານີ້ເພື່ອສຸມກຳລັງເຂົ້າໃນການຄັດເລືອກ-ແຕ່ງຕັ້ງພະນັກງານເກັ່ງທີ່ພຽບພ້ອມໄປດ້ວຍຄວາມຮູ້, ຄວາມສາມາດ ແລະ ມີຄຸນສົມບັດດີ, ມີຜົນງານໂດດເດັ່ນ ແລະ ປະຊາຊົນໃຫ້ການຍອມຮັບ ຂຶ້ນມາດຳລົງຕຳແໜ່ງເປັນການນຳ ໃນຂັ້ນຕໍ່ໄປ ແລະ ຕຳແໜ່ງຕ່າງໆທີ່ກຳນົດໄວ້.

3. ເປົ້າໝາຍໃນການຄັດເລືອກ: "ຍຶດໝັ້ນຫຼັກການຄວບຄຸມທຸກຂົງເຂດ, ແຂ່ງຂັນກັນ ແລະ ເລືອກບຸກຄົນທີ່ເກັ່ງ"

ຈີນຍຶດໝັ້ນເປົ້າໝາຍການຄັດເລືອກຕາມພາລະກິດຍຸດທະສາດ ຂອງພັກ ແລະ ປະຊາຊົນ, ຂະຫຍາຍວິໄສທັດໃນການຮູ້ຈັກຄົນ, ເປີດກວ້າງຊ່ອງທາງການຄັດເລືອກບຸກຄະລາກອນ ແລະ ເປີດແນວທາງໃຫ້ເຂົ້າ

ເຖິງຄົນເກັ່ງຢ່າງແທ້ຈິງ ໂດຍບໍ່ໄດ້ເລືອກຄົນພຽງຮູບແບບດຽວຕາຍຕົວ. ນຳໃຊ້ກົນໄກການແຂ່ງຂັນຢ່າງຕັ້ງໜ້າ, ຊຸກຍູ້ການຄັດເລືອກແບບເປີດເຜີຍ ແລະ ແຂ່ງຂັນກັນ ເພື່ອຂຶ້ນຕຳແໜ່ງ; ເພີ່ມທະວີລັກສະນະການແຂ່ງຂັນໃຫ້ເຂົ້າສູ່ລະບົບການຄັດເລືອກການນຳທີ່ເກັ່ງໃຫ້ມີຄວາມເຂັ້ມຂຸ້ນຂຶ້ນ ເພື່ອຍົກສູງຄຸນນະພາບໃນການຄັດເລືອກຄົນ, ນຳໃຊ້ຄົນ. ການຄັດເລືອກບຸກຄົນທີ່ເກັ່ງ ບໍ່ແມ່ນການຄັດເລືອກໂດຍພຽງລຳພັງ ຫຼື ເລືອກໂດຍກຸ່ມຄົນສ່ວນໜ້ອຍເທົ່ານັ້ນ, ແຕ່ແມ່ນການຄັດເລືອກຜູ້ເກັ່ງແບບປະຊາທິປະໄຕ, ຄັດເລືອກຢ່າງເປີດເຜີຍ ແລະ ຄັດເລືອກຜ່ານການແຂ່ງຂັນ ແບບເປີດກວ້າງ. ນອກນັ້ນ, ຍັງຕັ້ງໜ້າຊຸກຍູ້ການສະເໜີຊື່, ແນະນຳ, ສັງເກດການ, ຝຶກຝົນກໍ່ສ້າງບຸກຄົນທີ່ມີຄະແນນທີ່ຫຼຸດລື່ນກັນ, ດຳເນີນການວິເຄາະແບບສັງລວມໂດຍອີງໃສ່ມາດຕະຖານຕົວຈິງ ຂອງໜ້າທີ່ຕຳແໜ່ງ ແລະ ປັດໄຈຄວາມສາມາດ ຂອງພະນັກງານເອງ: ເປີດກວ້າງການຄັດເລືອກ-ແຕ່ງຕັ້ງພະນັກງານແບບປະຊາມະຕິ, ສຸມໃສ່ການຄັດເລືອກ-ແຕ່ງຕັ້ງກຳມະການພັກທີ່ສຳຄັນ ແບບປ່ອນບັດເລືອກຕັ້ງໃຫ້ທົ່ວເຖິງກັນ. ທົດລອງດຳເນີນການຕັດສິນແຕ່ງຕັ້ງບຸກຄົນທີ່ມີຄະແນນຫຼຸດລື່ນກັນ, ເພີ່ມທະວີລັກສະນະການແຂ່ງຂັນ, ຍົກສູງຄຸນນະພາບ ຂອງການປ່ອນບັດເລືອກຕັ້ງ ເພື່ອບັນລຸການຄັດເລືອກບຸກຄົນທີ່ເກັ່ງໃຫ້ຖືກມາດຕະຖານ.

4. ການຄຸ້ມຄອງການຄັດເລືອກ-ແຕ່ງຕັ້ງ: "ຍຶດໝັ້ນດຳເນີນງານຕາມກົດໝາຍ ແລະ ເພີ່ມທະວີການກວດກາຕິດຕາມ

ພັກກອມມູນິດຈີນມີລະບົບການຕິດຕາມກວດກາ ຕໍ່ວຽກງານການຄັດເລືອກ-ແຕ່ງຕັ້ງພະນັກງານທີ່ເຂັ້ມງວດ. "ກົດລະບຽບວ່າດ້ວຍວຽກງານການຄັດເລືອກ-ແຕ່ງຕັ້ງພະນັກງານການນຳຂອງ ພັກ-ລັດ" ລະບຸໄວ້ວ່າ: ວຽກງານການຄັດເລືອກ-ແຕ່ງຕັ້ງພະນັກງານ ຈະຕ້ອງປະຕິບັດ "10 ຂໍ້ຫ້າມ" ຂອງກົດລະບຽບການກວດກາຢ່າເຂັ້ມງວດ. ລະບຽບການກວດກາເຫຼົ່ານີ້, ມີຄວາມສຳຄັນຢ່າງຍິ່ງຕໍ່ຄວາມຮັບປະກັນການຄັດເລືອກໃຊ້ຄົນທີ່ດີໄດ້ຢ່າງຖືກຕ້ອງ ແລະ ຮັບປະກັນຄຸນນະພາບໃນການຄັດເລືອກ-ແຕ່ງຕັ້ງ. ໃນການປະຕິບັດຕົວຈິງ, ຈີນຍັງເພີ່ມທະວີກຳລັງແຮງຂອງວຽກງານຕິດຕາມກວດກາ, ນຳໃຊ້ການແຈ້ງຄວາມຜ່ານເວບໄຊ ແລະ ເບີໂທແຈ້ງຄວາມ "12380", ດຳເນີນວຽກງານສຳຫຼວດຄວາມເພິ່ງພໍໃຈຕໍ່ວຽກງານການຄັດເລືອກ-ແຕ່ງຕັ້ງພະນັກງານ ຈາກປະຊາຊົນ. ຊຸກຍູ້ໃຫ້ແຕ່ລະກະຊວງ-ອົງການ, ທ້ອງຖິ່ນ ຕັ້ງໜ້າປະຕິບັດ "ກົດລະບຽບ ວ່າດ້ວຍວຽກງານການຄັດເລືອກ-ແຕ່ງຕັ້ງພະນັກງານການນຳຂອງພັກ-ລັດ" ເພື່ອດຳເນີນການກວດສອບ. ຜ່ານວິທີການເອົານະໂຍບາຍ ແລະ ມາດຕະຖານຂອງການຄັດເລືອກຄົນ, ນຳໃຊ້ຄົນມອບໃຫ້ປວງຊົນ, ເອົາຂັ້ນຕອນການປະຕິບັດທີ່ຈຳເປັນ ແລະ ວິທີການຄັດເລືອກບອກໃຫ້ປວງຊົນຮັບຮູ້ ແລະ ເອົາສະພາບການທີ່ກ່ຽວຂ້ອງກັບການຄັດເລືອກ-ແຕ່ງຕັ້ງສ່ອງແສງໃຫ້ປວງຊົນເຫັນ ເພື່ອໃຫ້ປວງຊົນ, ພະນັກງານ-ລັດຖະກອນທັງຫຼາຍ ມີຄວາມເຂົ້າໃຈຕໍ່ວຽກງານການຄັດເລືອກ-ແຕ່ງຕັ້ງ ເຊິ່ງສິ່ງຜົນດີຕໍ່ການຕິດຕາມກວດກາຢ່າງມີປະສິດທິພາບ ພ້ອມທັງຍົກສູງຄວາມໜ້າເຊື່ອຖືໃນການຄັດເລືອກ ແລະ ນຳໃຊ້ຄົນ...ຯ

ເອກະສານອ້າງອີງ:

1. ຄັດຈາກປຶ້ມການຄັດເລືອກ-ແຕ່ງຕັ້ງພະນັກງານ ຂອງ ສປ ຈີນ ໜ້າທີ 13-15 (ປີ 2017)

ວາລະສານກໍ່ສ້າງພັກ, ສະບັບ 263 ປະຈຳປີ 2024/1

❀ ຜູ້ຊີ້ນຳ ❀

ທ່ານ ປອ ວິສຸກ ພົມພິທັກ
ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

❀ ຄະນະບັນນາທິການ ❀

ທ່ານ ພອນສະຫວັນ ໄຊຊະນະ ຫົວໜ້າ
ທ່ານ ວິລັດ ສຸນີຈັນ ຮອງ
ທ່ານ ນ. ແກ້ວໃຈ ແສງມີໄຊ ຮອງ

❀ ບັນນາທິການ, ອອກແບບ ແລະ ຈັດໜ້າ ❀

ທ່ານ ແສງອາລຸນ ຈັນທາທອນ
ທ່ານ ບານ ມູນປະເສີດ
ທ່ານ ນ. ພຶດສະໄໝ ວິໄລຮັກ
ທ່ານ ນ. ແສງຄຳ ຈິດຕະວົງ

- ຂໍ້ຕົກລົງ 02/ ຄຈສພ, ທະບຽນພິມ 255/ສມຊ.

- ບກ ໂທ: (021) 840420, 840421.
- E-Mail: Korsangphakmagazine@gmail.com
- ແຈ້ງບົດສົ່ງທາງ E-Mail: 020 59846399

ຮັບຜິດຊອບບໍລິຫານ-ຈຳໜ່າຍ

ທ່ານ ນ. ແສງອອນ ແກ້ວມີມັນລັດ
ທ່ານ ນ. ແສງແກ້ວ ພົມມະວົງ
ທ່ານ ພອນສະຫວັນ ລາຊະບັນເທົາ (ຈຳໜ່າຍ)
ທ່ານ ນ. ຈັນອາລີຈິດ ສໍພາບມີໄຊ
ທ່ານ ນ. ອານຸລັກ ຈິດຕິລາດ

ສາລະບານ

✍ ນາມປາກກາ ✍	✍ ຫົວຂໍ້ບົດ	✍ ໜ້າ
	ບົດນຳ	
ບກ	-ຊີວິດການເຄື່ອນໄຫວປະຕິວັດຂອງປະທານຄຳໄຕສີພັນດອນ	1
ປອ ວິສຸກ ພົມພິທັກ	-ແນວຄິດຊີ້ນຳຂອງປະທານຄຳໄຕສີພັນດອນກ່ຽວກັບວຽກງານກໍ່ສ້າງພັກ	4
	ທິດສະດີ ແລະ ພຶດຕິກຳ	
ແສງຄຳ ຈິດຕະວົງ	-ບາງຄວາມຄິດເຫັນຂອງສະຫາຍບຸນທອງ ຈິດມະນີ ກຳມະການກົມການເມືອງ	8
ກົມປະຊາສຳພັນ ຫສນຍ	- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີຍາດໄດ້ຜົນສຳເລັດຫຼາຍດ້ານ	14
ໄກ່ທອງ ວິລະວົງ	-ບາງບົດຮຽນທີ່ຖອດຖອນໄດ້ການກໍ່ສ້າງໜ່ວຍພັກປອດໃສ,ເຂັ້ມແຂງ,ໜັກແໜ້ນ	17
ພູວຽງ ໄຊຍະແສງສາ	-ບາງຄວາມຄິດເຫັນກ່ຽວກັບການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ	21
ບຸນທະວີ ບັນດາສັກ	- ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເອົາໃຈໃສ່	26
	ຄົ້ນຄວ້າ-ແລກປ່ຽນ	
ວຽງທະວີສອນ ເທບພະຈັນ	-ບາງບັນຫາກ່ຽວກັບວຽກງານກວດສອບແລະມາດຕະການໃນການຍົກສູງ	30
ອໍລະໄທ ວິໄລຫົງ	-ຍົກສູງຄຸນທາດການເມືອງໃຫ້ພະນັກງານ,ສະມາຊິກພັກຢູ່ກະຊວງແຮງງານ	36
ໄບມະນີ ເຢ່ຍກົ່ວນໍ່ເຮີວ່າງ	-ບາງຄວາມຄິດເຫັນກ່ຽວກັບການຍົກສູງຄຸນນະພາບວຽກງານພະນັກງານ	40
	ຄວາມຮູ້ຮອບຕົວ	
ໄຊຊະນະ ພິລາວັນ	- ຄະນະເຕັກນິກການແພດ ມະຫາວິທະຍາໄລ ວິທະຍາສາດສຸຂະພາບເອົາໃຈໃສ່	44
	ວຽກດີຄົນເດັ່ນ	
ວິລະສະໄໝ ຍົດບຸນມີ	-ຍ້ອນດຸໝັ່ນຂະຫຍັນພຽນ ແລະ ປະຢັດມັດທະຍັດ ເຮັດໃຫ້ຄອບຄົວ ຄອບຄົວມີຊີວິດ	48
	ບົດຮຽນຕ່າງປະເທດ	
ສຸກສະຫວາດ ເທບພະວົງ	-ລັກສະນະພິເສດການຄັດເລືອກແລະແຕ່ງຕັ້ງພະນັກງານການນຳຂອງສປຈີນ	51
✍✍✍✍	-ສາລະບານ	54